ຄພດກ
DALaM
Department of Agricultural Land Management

# ຄູ່ມື
# ການວາງແຜນ, ຈັດສັນ ແລະ ຄຸ້ມຄອງ ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ແບບມີສ່ວນຮ່ວມຂັ້ນບ້ານ



ແບບ CLUFC

ແບບ FLUMZ

ນະຄອນຫຼວງວຽງຈັນ, ມິຖຸນາ 2018

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

The Agro-Biodiversity Initiative (TABI)

UNIVERSITÄT BERN
CDE CENTRE FOR DEVELOPMENT AND ENVIRONMENT

# ຄຳນຳ

ປຶ້ມຄູ່ມື (Manual) **ວາງແຜນ, ຈັດສັນ ແລະ ຄຸ້ມຄອງ ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ແບບມີສ່ວນຮ່ວມ** ສະບັບນີ້ ມີຊື່ພາສາອັງກິດວ່າ: **Participatory Forest and Agriculture Land Use Planning, Allocation and Management** ແລະ ມີຊື່ຫຍໍ້ວ່າ "P-FALUPAM" ຖືກສ້າງຂື້ນ ໂດຍອີງໃສ່ ຂໍ້ຕົກລົງ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ່ 7838/ກຊສ. ລົງວັນທີ່ 09 ພະຈິກ 2012, ວ່າດ້ວຍການປັບປຸງປຶ້ມຄູ່ມື ວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ແບບມີສ່ວນຮ່ວມ ຂັ້ນບ້ານ ແລະ ກຸ່ມບ້ານພັດທະນາ (Participatory Agriculture and Forest Land Use Planning at Village and Village Cluster Level) ທີ່ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບ ອົງການຄຸ້ມຄອງທີ່ດິນແຫ່ງຊາດໄດ້ຮັບຮອງເອົາໃນປີ 2010.

ປຶ້ມຄູ່ມືສະບັບນີ້ ແນະນຳ ວິທີຈັດຕັ້ງປະຕິບັດ ວຽກ P-FALUPAM ຢູ່ຂັ້ນກຸ່ມບ້ານ ແລະ ບ້ານ ແບບມີສ່ວນຮ່ວມ ໂດຍ ແບ່ງອອກເປັນ 5 ບາດກ້າວ ໃນນີ້ ລວມມີວຽກຢູ່ຫ້ອງການ ແລະ ວຽກພາກສະໜາມ. ***ບາດກ້າວທີ່ 1*** ແມ່ນ*ການ*ກະກຽມແຜນວຽກ, ບຸກຄະລາກອນ, ງົບປະມານ ແລະ ອຸປະກອນ/ເຄື່ອງມືຮັບໃຊ້. ***ບາດກ້າວທີ່ 2*** ແມ່ນການເກັບກຳຂໍ້ມູນລະດັບບ້ານ ແລະ ສ້າງແຜນທີ່ພື້ນຖານ ຂອງບ້ານ ເຊິ່ງລວມມີ ວຽກຝຶກອົບຮົມໃຫ້ ຜູ້ຮັບຜິດຊອບວຽກ P-FALUPAM ຢູ່ ຂັ້ນເມືອງ, ການສ້າງຄວາມເຂົ້າໃຈ ແລະ ສ້າງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ (ວຽກພາກສະໜາມຮອບ1). ***ບາດກ້າວທີ່ 3*** ແມ່ນການສ້າງແຜນທີ່ນຳໃຊ້ທີ່ດິນໃນປະຈຸບັນ, ເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ປະເມີນຄວາມອຸດົມສົມບູນຂອງດິນ (ວຽກພາກສະໜາມຮອບ 2). ***ບາດກ້າວທີ່ 4*** ແມ່ນການກຳນົດເຂດ ຈັດສັນ, ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ໃນນີ້ ລວມມີການສ້າງ ແຜນ ແລະ ລະບຽບການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ (ວຽກພາກສະໜາມຮອບ 3). *ບາດກ້າວທີ່ 5* ແມ່ນການກວດກາຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດຕາມແຜນຈັດສັນ ເຂດຄຸ້ມຄອງດິນກະສິກຳ ແລະ ປ່າໄມ້ ເພື່ອ ເປັນບ່ອນອີງໃຫ້ແກ່ວຽກຂຶ້ນສຳມະໂນທີ່ດິນ, ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຕາດິນໃຫ້ປະຊາຊົນ ຂັ້ນບ້ານ (ວຽກພາກສະໜາມຮອບ 4).

ແນວໃດກໍ່ຕາມ, ບັນດາອົງການຈັດຕັ້ງ ຫຼື ຜູ້ນຳໃຊ້ ປຶ້ມຄູ່ມືສະບັບນີ້ ສາມາດປັບປຸງ, ປັບປ່ຽນ ແລະ ດັດແກ້ວິທີ ຫລື ຂະບວນການ ວາງແຜນ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ເພື່ອ ໃຫ້ ແທດເໝາະກັບສະຖານະພາບຕົວຈິງ ຂັ້ນທ້ອງຖິ່ນ ແລະ ເປົ້າໝາຍການພັດທະນາໃນແຕ່ລະໄລຍະ.

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ (ຄພດກ), ກະຊວງກະສິກຳ ແລະ ປ່າໄມ້ ຂໍສະແດງຄວາມຂອບໃຈມາຍັງບັນດາ ອົງການຈັດຕັ້ງ ພາກລັດ, ຄູ່ຮ່ວມພັດທະນາ ແລະ ໂຄງການ ໂດຍສະເພາະ ໂຄງການຊ່ວຍເຫຼືອລ້າຈາກປະເທດ ສວິສເຊີແລນ (ຕາງໜ້າ ໂດຍໂຄງການ SDC) ແລະ ໂຄງການຕາບີ (TABI) ທີ່ໄດ້ປະກອບສ່ວນ ດ້ານວິຊາການ ກໍ່ຄື ທຶນຮອນເຂົ້າໃນການພັດທະນາຄູ່ມືສະບັບນີ້ ພ້ອມນີ້ ຄພດກ ມີຄວາມຍິນດີຮັບເອົາ ຂໍ້ສະເໜີແນະ ກໍ່ຄືຄວາມຄິດເຫັນ ເພື່ອ ປັບປຸງປຶ້ມຄູ່ມືສະບັບນີ້ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບ ຕົວຈິງທີ່ອາດມີການປ່ຽນໃນແຕ່ລະໄລຍະ.

ນະຄອນຫລວງວຽງຈັນ, ວັນທີ່ 24 JUN 2019

ຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ,

ຄຳພອນ ຣາຊາຈັກ

# ຄະນະຮັບຜິດຊອບ

## ຄະນະຊີ້ນຳ:

1. ທ່ານ ຄຳພອນ ຣາຊາຈັກ, ຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ
2. ທ່ານ ປອ. ເພັງ ເຊັງຊີ້, ຮອງຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ
3. ທ່ານ ປອ. ທັດເທວາ ສະພັງທອງ, ຮອງຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ
4. ທ່ານ ປອ. ຈັນສະໝອນ ພົງອຸດົມ, ຮອງຫົວໜ້າ ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
5. ທ່ານ ອະໂນລາດ ຈັນທະວົງສາ, ຮອງຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

## ຄະນະວິຊາການ (ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ):

1. ທ່ານ ໄພທູນ ພິລາກອນ, ຮອງຫົວໜ້າ ສູນສຳຫຼວດ ແລະ ວາງແຜ່ນນຳໃຊ້ທີດິນກະສິກຳ
2. ທ່ານ ໄຊສົງຄາມ ໄຊຍາວົງ, ຫົວໜ້າໜ່ວຍງານຂໍ້ມູນຂ່າວສານທາງພູມສາດ (GIS)
3. ທ່ານ ປັນຍາສຸກ ແກ້ວລີໄຊ, ວິຊາການ ດ້ານຂໍ້ມູນ GIS ແລະ ແຜນທີ່
4. ທ່ານ ວຽງຊັນ ຊາວົງ ວິຊາການ ດ້ານຂໍ້ມູນ GIS ແລະ ແຜນທີ່
5. ທ່ານ ໂອລົດ ແສງຕາເຮືອງຮຸ່ງ ຫົວໜ້າ ສູນສຳຫຼວດ ແລະ ວາງແຜ່ນນຳໃຊ້ທີດິນກະສິກຳ

## ຄະນະທີ່ປຶກສາວິຊາການ:

1. ທ່ານ Chris Flint, ຊ່ຽວຊານ ດ້ານການຈັດສັນ, ວາງແຜນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້
2. ທ່ານ Michael Victor, ຫົວໜ້າຊ່ຽວຊານ ຂອງໂຄງການ ຕາບີ
3. ທ່ານ ເພັງ ສຸວັນທອງ, ທີ່ປຶກສາດ້ານນະໂຍບາຍ ແລະ ການສົ່ງເສີມ ຂອງໂຄງການ ຕາບີ
4. ທ່ານ ປອ. ນາງ ລັກ ບຸນມີໄຊ, ຊ່ຽວຊານ ດ້ານ ການວາງແຜນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ ແບບມີສ່ວນຮ່ວມ ຂອງໂຄງການ ຕາບີ

## ພາກສ່ວນອື່ນ:

ນອກຈາກຄະນະຊີ້ນຳ, ວິຊາການ ແລະ ທີ່ປຶກສາ ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ຍັງມີອົງການຈັດຕັ້ງພາກລັດຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະຜູ້ຮັບຜິດຊອບ ວຽກ P-FALUPAM ຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ, ແຂວງຊຽງຂວາງ ແລະ ແຂວງຫົວພັນ, ທີມງານ ຮັບຜິດຊອບວຽກ P-FALUPAM ຂອງໂຄງການ ຕາບີ, Center for Development and Environment, ບັນດາໂຄງການພັດທະນາ ແລະ ອົງການຈັດຕັ້ງພາຍໃນ ແລະ ສາກົນທີ່ກ່ຽວຂ້ອງ.

# ສາລະບານ


**ບົດນຳ** i

**ຄະນະຮັບຜິດຊອບ** ii

**ສາລະບານ** iii

## ພາກທີ່ I. ພາກສະເໜີ 1

1. ຈຸດປະສົງ 1
2. ຫຼັກການ 1
3. ບາດກ້າວ ແລະ ຂັ້ນຕອນ 3

## ພາກທີ່ II. ພາກເນື້ອໃນ 6

ບາດກ້າວທີ່ 1. **ການກະກຽມ** 6

ຂັ້ນຕອນ 1. ແຜນວຽກ, ງົບປະມານ, ອຸປະກອນ/ເຄື່ອງມືຮັບໃຊ້ ແລະ ທີມງານ 6

ຂັ້ນຕອນ 2. ແບບຟອມເກັບກຳຂໍ້ມູນ ແລະ ຮ່າງເອກະສານ 9

ບາດກ້າວທີ່ 2. **ເກັບກຳຂໍ້ມູນ ແລະ ສ້າງແຜນທີ່ພື້ນຖານຂອງບ້ານ (ວຽກພາກສະໜາມ ຮອບ1)** 13

ຂັ້ນຕອນ 1. ຈັດຕັ້ງທີມງານ ແລະ ຝຶກອົບຮົມໃຫ້ພະນັກງານວິຊາການ ຂັ້ນເມືອງ 13

ຂັ້ນຕອນ 2. ເປີດກອງປະຊຸມຂັ້ນບ້ານ 13

ຂັ້ນຕອນ 3. ສ້າງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ 14

ຂັ້ນຕອນ 4. ເກັບກຳຂໍ້ມູນ, ຊັບພະຍາກອນທຳມະຊາດ, ຊີວະນາໆພັນກະສິກຳ ແລະ ທ່າແຮງບົ່ມຊ້ອນຂອງບ້ານ 14

ຂັ້ນຕອນ 5. ສ້າງແຜນທີ່ພື້ນຖານພູມີສາດຂອງບ້ານ 15

ຂັ້ນຕອນ 6. ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ 17

| | | |
|---|---|---|
| **ບາດກ້າວທີ່ 3.** | **ສ້າງແຜນທີ່ການນຳໃຊ້ທີ່ດິນໃນປັດຈຸບັນ, ເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ ແລະ ປະເມີນຄວາມອຸດົມສົມບູນຂອງດິນ (ວຽກພາກສະໜາມ ຮອບ 2)** | 20 |
| ຂັ້ນຕອນ 1. | ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມປ່າໄມ້ໃນປັດຈຸບັນ (CLUFC) | 20 |
| ຂັ້ນຕອນ 2. | ເກັບກຳຂໍ້ມູນລະດັບຄອບຄົວ | 21 |
| ຂັ້ນຕອນ 3. | ສຳຫຼວດ ແລະ ເກັບຕົວຢ່າງດິນໃນເຂດຜະລິດກະສິກຳຂອງບ້ານ | 21 |
| ຂັ້ນຕອນ 4. | ສັງລວມຂໍ້ມູນ, ວິເຄາະຂໍ້ມູນ ແລະ ສ້າງແຜນທີ່ | 22 |
| ຂັ້ນຕອນ 5. | ວິໃຈດິນ ແລະ ປະເມີນຄວາມອຸດົມສົມບູນຂອງດິນ | 22 |
| **ບາດກ້າວທີ່ 4.** | **ການກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (ວຽກພາກສະໜາມຮອບ 3)** | 23 |
| ຂັ້ນຕອນ 1. | ເປີດກອງປະຊຸມເພື່ອສະເໜີແນວທາງກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານ | 23 |
| ຂັ້ນຕອນ 2. | ສ້າງແຜນຈັດສັນ FLUMZ ຂອງບ້ານ | 23 |
| ຂັ້ນຕອນ 3. | ການທົບທວນ, ປັບປຸງລະບຽບ ແລະ ແຜນຈັດສັນ FLUMZ ຂອງບ້ານ | 26 |
| ຂັ້ນຕອນ 4. | ແນະນຳ ແລະ ສົ່ງເສີມການຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ | 27 |
| **ບາດກ້າວທີ່ 5.** | **ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕາມແຜນ ຈັດສັນ FLUMZ (ວຽກພາກສະໜາມ ຮອບ 4)** | 28 |
| ຂັ້ນຕອນ 1. | ທີມງານ, ຂໍ້ມູນ, ແຜນທີ່ ແລະ ອຸປະກອນ | 28 |
| ຂັ້ນຕອນ 2. | ຕິດຕາມ, ປະເມີນຜົນ ແລະ ປັບປຸງແຜນຈັດສັນ FLUMZ ຂອງບ້ານ | 29 |
| ຂັ້ນຕອນ 3. | ຈັດກອງປະຊຸມຮັບຮອງແຜນຈັດສັນ FLUMZ ຂອງບ້ານຢູ່ຂັ້ນເມືອງ | 31 |
| ຂັ້ນຕອນ 4. | ມອບແຜນຈັດສັນ FLUMZ ແລະ ຕິດປ້າຍແຜນທີ່ຂອງບ້ານ | 33 |

## ຕາຕະລາງ

ຕາຕະລາງ 1. **ຕົວຢ່າງປະຕິທິນກຳນົດຈຳນວນມື້ ແລະ ກິດຈະກຳ/ໜ້າວຽກປະຈຳວັນ** 6
ຕາຕະລາງ 2. **ອຸປະກອນ/ເຄື່ອງມື** 7
ຕາຕະລາງ 3. **ຄວາມຮັບຜິດຂອງທີມງານວິຊາການ** 9
ຕາຕະລາງ 4. **ກິດຈະກຳສຳລັບຈັດຕັ້ງປະຕິບັດວຽກ P-FALUPAM ຢູ່ຂັ້ນບ້ານ** 13
ຕາຕະລາງ 5. **ບັນດາແບບຟອມສຳລັບເກັບກຳຂໍ້ມູນ** 15
ຕາຕະລາງ 6. **ກິດຈະກຳສ້າງແຜນທີ່ພື້ນຖານພູມີສາດ ຂອງບ້ານ** 16
ຕາຕະລາງ 7. **ກິດຈະກຳສ້າງແຜນທີ່ເຂດຄຸ້ມຄອງ ຂອງບ້ານ** 17
ຕາຕະລາງ 8. **ລາຍການແຜນທີ່ນຳໃຊ້ເຂົ້າໃນການຕິດຕາມ ແລະ ປະເມີນຜົນຂອງການປະຕິບັດຕາມແຜນຈັດສັນ FLUMZ** 28

## ແຜນວາດ

ແຜນວາດ 1. **ບາດກ້າວ ແລະ ຂັ້ນຕອນຂອງ P-FALUPAM** 4
ແຜນວາດ 2. **ການຈັດຕັ້ງປະຕິບັດວຽກ P-FALUPAM ເປັນຮອບຢູ່ບ້ານ** 5

## ເອກະສານອ້າງອີງ

ເອກະສານ 1. **ມາດຖານກຳນົດເຂດພື້ນທີ່ດິນກະສິກຳ ແລະ ປ່າໄມ້** 34

## ແຜນທີ່

ແຜນທີ່ 1. **ໂຕໂປ 2.5D ແລະ ຂອບເຂດແດນບ້ານ** 37
ແຜນທີ່ 2. **ພາບຖ່າຍທາງອາກາດ ແລະ ຂອບເຂດຊາຍແດນບ້ານ (2015)** 38
ແຜນທີ່ 3. **ການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມປ່າໄມ້ໃນປະຈຸບັນ (2017)** 39
ແຜນທີ່ 4. **ເຂດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (2018)** 40
ແຜນທີ່ 5. **ເຂດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (2017)** 41
ແຜນທີ່ 6. **ເຂດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ( 2018)** 42

# ພາກທີ I.   ພາກສະເໜີ

## 1   ຈຸດປະສົງ

ຈຸດປະສົງຫຼັກຂອງປື້ມຄູ່ມື ວາງແຜນ, ຈັດສັນ ແລະ ຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ແບບມີສ່ວນຮ່ວມ (P-FALUPAM Manual) ສະບັບນີ້ແມ່ນເພື່ອ:

1) ຊຸກຍູ້, ສົ່ງເສີມການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການໃນການປະຕິບັດກິດຈະກໍາທີ່ກ່ຽວຂ້ອງກັບການບໍລິຫານ, ຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ແລະ ຊັບພະຍາກອນປ່າໄມ້ ໃຫ້ເກີດປະໂຫຍດສູງສຸດຕໍ່ການພັດທະນາຊີວິດການເປັນຢູ່ ແລະ ການສ້າງອາຊີບທີ່ໝັ້ນຄົງຂອງປະຊາຊົນຂັ້ນທ້ອງຖິ່ນ;
2) ອໍານວຍຄວາມສະດວກໃຫ້ພະນັກງານວິຊາການທຸກຂັ້ນ ໂດຍສະເພາະຂັ້ນທ້ອງຖິ່ນ (ແຂວງ, ເມືອງ, ກຸ່ມບ້ານ) ແລະ ອໍານາດການປົກຄອງບ້ານ ລວມທັງປະຊາຊົນບັນດາເຜົ່າພາຍໃນບ້ານໃຫ້ມີຄວາມຮັບຜິດຊອບ, ມີຄວາມເປັນເອກະພາບ ດ້ານວິທີການຈັດຕັ້ງປະຕິບັດວຽກ P-FALUPAM ທີ່ເປັນທ່າແຮງຕໍ່ການພັດທະນາອາຊີບ ສາມາດຍົກລະດັບຊີວິດການເປັນຢູ່ຂອງຄອບຄົວ ກ້າວໄປສູ່ການພັດທະນາເສດຖະກິດ-ສັງຄົມ ຄຽງຄູ່ກັບການປົກປັກຮັກສາສະພາບແວດລ້ອມ ຕາມລັກສະນະສະເພາະດ້ານພູມສັນຖານຂອງທ້ອງຖິ່ນ;
3) ສ້າງຖານຂໍ້ມູນ, ແຜນທີ່ ແລະ ແຜນຈັດສັນທີ່ດິນກະສິກໍາ ແລະ ປ່າໄມ້ໃຫ້ຖືກຕ້ອງ, ຊັດເຈນ ແລະ ສອດຄ່ອງກັບຄວາມເປັນຈິງຢູ່ຂັ້ນທ້ອງຖິ່ນ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນກ່ຽວຂ້ອງນໍາໃຊ້ເຂົ້າໃນວຽກງານດ້ານນະໂຍບາຍ, ຍຸດທະສາດ, ແຜນງານ-ແຜນການລົງທຶນ ແລະ ການພັດທະນາເສດຖະກິດ-ສັງຄົມ.

## 2   ຫຼັກການ

ຈັດຕັ້ງປະຕິບັດກິດຈະກໍາການວາງແຜນ, ຈັດສັນ ແລະ ຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ຢູ່ກຸ່ມບ້ານ ແລະ ຂັ້ນບ້ານແບບມີສ່ວນຮ່ວມກັບທຸກພາກສ່ວນກ່ຽວຂ້ອງ ທຸກຂັ້ນ (ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ) ລວມທັງອົງການຈັດຕັ້ງຂັ້ນບ້ານ, ປະຊາຊົນບັນດາເຜົ່າຢູ່ບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງ ໃຫ້ມີຄວາມເປັນເຈົ້າການ ແລະ  ເອົາໃຈໃສ່ສູງພິເສດບາງຫຼັກການທີ່ສໍາຄັນດັ່ງລຸ່ມນີ້:

1) ສ້າງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານໂດຍກໍານົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຢ່າງລະອຽດ. ນໍາສະເໜີຜົນໄດ້ຮັບຕໍ່ອໍານາດການປົກຄອງເມືອງ (ເຈົ້າເມືອງ) ເພື່ອອອກຂໍ້ຕົກລົງຮັບຮອງ.
2) ຫລີກລ້ຽງ ຫຼື ປ້ອງກັນບໍ່ໃຫ້ມີຂໍ້ຂັດແຍ່ງເກີດຂຶ້ນ;
3) ປະຕິບັດກິດຈະກໍາພາກສະໜາມຕາມບາດກ້າວຂອງ P-FALUPAM ຢູ່ຫຼາຍກ່ວາໜຶ່ງບ້ານພາຍໃນກຸ່ມບ້ານດຽວກັນໂດຍເລີ່ມເທື່ອລະບ້ານແຕ່ບໍ່ສໍາເລັດທຸກບາດກ້າວຢູ່ບ້ານໃດໜຶ່ງໃນຄັ້ງດຽວໝາຍຄວາມວ່າ ທີມງານວິຊາການລົງເຮັດວຽກ 4 ຄັ້ງຕໍ່ໜຶ່ງບ້ານເປົ້າໝາຍ (ລາຍລະອຽດມີຢູ່ບາດກ້າວ ແລະ ຂັ້ນຕອນ);
4) ປະຕິບັດກິດຈະກໍາຂອງແຕ່ລະບາດກ້າວ ແລະ ຂັ້ນຕອນໃຫ້ເໝາະສົມດ້ານເວລາ,  ຮັບປະກັນການສ້າງສາຍພົວພັນ, ການແລກປ່ຽນຂໍ້ມູນ, ການສ້າງຄວາມເຊື່ອໝັ້ນ ລະຫວ່າງ ທີມງານວິຊາການ

ແລະ ປະຊາຊົນ ແລະ ການຮັບຟັງຂໍ້ສະເໜີຄວາມຄິດເຫັນ ທີ່ມີຄວາມສຳຄັນຕໍ່ການຈັດຕັ້ງປະຕິບັດວຽກ P-FALUPAM ແບບມີສ່ວນຮ່ວມ;

5) ສຶກສາຂໍ້ມູນ, ການແປພາບຖ່າຍ ແລະ ການສ້າງແຜນທີ່ການນຳໃຊ້ທີ່ດິນປັດຈຸບັນ ເປັນວຽກສຳຄັນອັນພື້ນຖານໃຫ້ແກ່ການສ້າງແຜນທີ່ໆກ່ຽວຂ້ອງກັບ: ກ) ປະຫັວດການນຳໃຊ້ດິນກະສິກຳເຂດເນີນສູງ ຫຼື ເຂດພູດອຍ ທີ່ປະຊາຊົນນຳໃຊ້ທີ່ດິນແບບຮອບວຽນໃນເມື່ອກ່ອນມາຈົນຮອດປະຈຸບັນ, ແລະ ຂ) ເຂດດິນປ່າໄມ້ໃນຕົວຈິງ ລວມມີເຂດປ່າໄມ້ທີ່ບໍ່ເຄີຍຖືກຖາງມາກ່ອນ ເຊິ່ງເປັນເຂດດິນປ່າໄມ້ທີ່ໄດ້ຮັບການຈັດປະເພດ (ເຊັ່ນ: ປ່າຜະລິດ, ປ່າປ້ອງກັນ ແລະ ປ່າສະຫງວນ), ແລະ ເຂດດິນ ທີ່ປະຊາຊົນຢາກຟື້ນຟູໃຫ້ເປັນເຂດປ່າໄມ້. ບໍ່ຄວນແນະນຳການຈັດປະເພດການນຳໃຊ້ທີ່ດິນກ່ອນລົງເຮັດວຽກຢູ່ບ້ານຄັ້ງທີ່ 3 ເພື່ອຮັບປະກັນຄວາມຖືກຕ້ອງຂອງການສ້າງແຜນທີ່ນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ໃນປັດຈຸບັນ ແລະ ເພື່ອຮັບປະກັນຄວາມເຂົ້າໃຈຂອງປະຊາຊົນກ່ຽວກັບປ່າໄມ້ 3 ປະເພດ;

4) ກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ໃຫ້ແທດເໝາະກັບສະພາບຄວາມເປັນຈິງ ດ້ານຊັບພະຍາກອນທີ່ເປັນທ່າແຮງສະເພາະເຂດພູມສັນຖານ ເພື່ອຮັບປະກັນຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດຕົວຈິງຂອງປະຊາຊົນ ໂດຍສະເພາະການຄຸ້ມຄອງການນຳໃຊ້ທີ່ດິນເຂົ້າໃນການຜະລິດກະສິກຳຢູ່ເຂດເນີນສູງ ເພື່ອໃຫ້ເຂດເນື້ອທີ່ດິນໄຮ່ເລົ່າໃນປັດຈຸບັນຄົງຕົວ (ບໍ່ຂະຫຍາຍເນື້ອທີ່ທຳການຜະລິດເຂົ້າໃນເຂດປ່າໄມ້);

5) ເລີ່ມທົດລອງນຳໃຊ້ P-FALUPAM ປີ 2011 ຢູ່ເຂດພູດອຍຂອງແຂວງພາກເໜືອເຊັ່ນ: ຫຼວງພະບາງ, ຊຽງຂວາງ ແລະ ຫົວພັນ. ມາຮອດ ປີ 2018, ວຽກດັ່ງກ່າວໄດ້ຖືກຈັດຕັ້ງປະຕິບັດຢູ່ 13 ແຂວງທົ່ວປະເທດ ກວມເອົາຈຳນວນ 315 ບ້ານ, ແຜນຈັດສັນເຂດຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (FLUMZ) ກວມເອົາຫຼາຍກ່ວາ 800,000 ເຮັກຕາ. ຜົນໄດ້ຮັບຈາກວຽກການຈັດຕັ້ງປະຕິບັດວຽກ P-FALUPAM ໄດ້ຖືກນຳໃຊ້ເຂົ້າໃນກິດຈະກຳສົ່ງເສີມການພັດທະນາດ້ານຕ່າງໆຢູ່ເຂດໂຄງການທີ່ເຫັນຜົນສຳເລັດຫຼາຍດ້ານລວມທັງ:

- ກຳນົດຈະແຈ້ງ ເຂດພື້ນທີ່ດິນກະສິກຳ ແລະ ປ່າໄມ້ເຊັ່ນ: ເຂດປ່າປ້ອງກັນ, ເຂດປ່າອະນຸລັກ ແລະ ເຂດດິນນຳໃຊ້ໂດຍຜ່ານການປຶກສາຫາລືກັບພາກສ່ວນກ່ຽວຂ້ອງແບບມີສ່ວນຮ່ວມ ແລະ ມີຄວາມເຫັນດີຢ່າງເປັນເອກະພາບດ້ານວິທີ, ລະບຽບການ ແລະ ໜ້າທີ່ຮັບຜິດຊອບ;
- ມີຄວາມເປັນເຈົ້າໃນການຄຸ້ມຄອງການນຳໃຊ້ຊີວະນາໆພັນກະສິກຳ ທີ່ມີຄວາມຫຼາກຫຼາຍທາງດ້ານຄຸນຄ່າ, ການພັດທະນາຊີວິດການເປັນຢູ່ ແລະ ການສ້າງອາຊີບຄົງທີ່ຂອງປະຊາຊົນບັນດາເຜົ່າຢູ່ຂັ້ນທ້ອງຖິ່ນ;
- ກຳນົດເຂດພື້ນທີ່ຊີວະນາໆພັນກະສິກຳທີ່ມີມູນຄ່າສູງ ເພື່ອການຟື້ນຟູ ແລະ ການຄຸ້ມຄອງການນຳໃຊ້ແບບຍືນຍົງ;
- ກຳນົດເຂດປ່າໄມ້ທີ່ບໍ່ເຄີຍຖືກຖາງມາກ່ອນ ແລະ ເຂດປ່າໄມ້ປະເພດອື່ນຕາມຂັ້ນຄຸ້ມຄອງຢ່າງຊັດເຈນຊ່ວຍຈຳແນກພື້ນທີ່ສຳຄັນຕໍ່ການ ຟື້ນຟູ ແລະ ອະນຸລັກປ່າໄມ້;

- ຂຶ້ນທະບຽນ ແລະ ຟື້ນຟູເຂດຊາປ່າທຳມະຊາດ ເພື່ອຮັບປະກັນການນຳໃຊ້ຜະລິດຕະພົນຂອງປ່າໄມ້ ເຂົ້າໃນການພັດທະນາຜະລິດຕະພັນສິນຄ້າເອກະລັກສະເພາະຂອງທ້ອງຖິ່ນໃຫ້ມີຄວາມຍືນຍົງ;
- ສ້າງຄວາມເຂັ້ມແຂງດ້ານການຜະລິດກະສິກຳຢູ່ເຂດເນີນສູງແບບຍືນຍົງ ດ້ວຍການນຳໃຊ້ທີ່ດິນຫຼາຍຕອນຕິດຈອດກັນເປັນຕອນດຽວ ຫຼື ຜະລິດກະສິກຳເປັນກຸ່ມແບບໝູນວຽນແທດເໝາະກັບລັກສະນະສະເພາະທາງສັງຄົມ ແລະ ສິ່ງແວດລ້ອມ ທັງເປັນການສົ່ງເສີມການປ້ອງກັນໄຟໃໝ້ລາມປ່າຜ່ານການຄຸ້ມຄອງ ແລະ ຕິດຕາມກວດກາເປັນປະຈຳ. ນອກຈາກນີ້, ຍັງສົ່ງເສີມໃຫ້ມີຮອບວຽນການນຳໃຊ້ເນື້ອທີ່ໄຮ່ເລົ່າເປັນໄລຍະເວລາຍາວ (ຫຼາຍປີ) ເຊິ່ງມີຄວາມສຳຄັນຕໍ່ການຟື້ນຟູຄຸນນະພາບຂອງດິນ, ຮັກສາຄຸນຄ່າດ້ານຊີວະນາໆພັນ ທັງເປັນການຍົກສະມັດຕະພາບການຜະລິດຈາກການນຳໃຊ້ທີ່ເນື້ອດິນທີ່ມີຈຳກັດ;
- ຮັບຮູ້ການນຳໃຊ້ທີ່ດິນ ລວມທັງການນຳໃຊ້ທີ່ດິນຕາມປະເພນີ ແລະ ຄວາມຮູ້ດັ້ງເດີມຂັ້ນທ້ອງຖິ່ນທີ່ມີຄຸນຄ່າທາງສັງຄົມ ແລະ ສິ່ງແວດລ້ອມ ເປັນການປ້ອງກັນການບຸກລຸກ, ນຳໃຊ້ ຫຼື ຈັບຈອງທີ່ດິນຈາກບຸກຄົນພາຍນອກ ເຊັ່ນ: ໂຄງການພັດທະນາ ຫຼື ກິດຈະກຳການລົງທຶນດ້ານທຸລະກິດ ທີ່ກ່ຽວຂ້ອງກັບການນຳໃຊ້ທີ່ດິນ ແບບບໍ່ຖືກຕ້ອງຕາມນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງ;
- ຫຼາຍອົງການຈັດຕັ້ງພາກລັດ ແລະ ເອກະຊົນເຊັ່ນ: ບໍລິສັດໄຟຟ້ານ້ຳເທີນ (THPC) ແລະ ບໍລິສັດພູເບ້ຍຂຸດຄົ້ນບໍ່ແຮ່ (Phu Bia Mining) ແລະ ໂຄງການອື່ນໆໄດ້ນຳໃຊ້ P-FALUPAM ຢູ່ໃນເຂດພື້ນທີ່ຮັບຜິດຊອບຂອງຕົນ ພາຍໃຕ້ການນຳພາໂດຍສະເພາະການຈັດຕັ້ງປະຕິບັດຕົວຈິງດ້ານວິຊາການຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແລະ ໂຄງການ ຕາບີ.

## 3 ບາດກ້າວ ແລະ ຂັ້ນຕອນ

ຄູ່ມື P-FALUPAM ສະບັບນີ້ ສ້າງຂື້ນຈາກປະສົບການ ແລະ ບົດຮຽນຈາກການຈັດຕັ້ງປະຕິບັດກິດຈະກຳຕົວຈິງ ຢູ່ ບ້ານເປົ້າໝາຍຂອງ 3 ແຂວງພາກເໜືອ: ຫຼວງພະບາງ, ຊຽງຂວາງ ແລະ ຫົວພັນ ໃນຊ່ວງປີ 2011-2018. ຄູ່ມືນີ້ລວມມີ 5 ບາດກ້າວ, ແຕ່ລະບາດກ້າວມີຫຼາຍຂັ້ນຕອນ ໃນນີ້ ມີວຽກພາກຫ້ອງການ ແລະ ວຽກພາກສະໜາມ ໂດຍຈັດຕັ້ງ ກິດຈະກຳຢູ່ບ້ານ ທີ່ນອນຢູ່ກຸ່ມບ້ານເປັນຮອບວຽນ (ລວມທັງໝົດ 4 ຮອບ/ບ້ານ) ແຕ່ລະຮອບວຽນແມ່ນເລີ່ມກິດຈະກຳຢູ່ບ້ານໜຶ່ງກ່ອນຍ້າຍໄປຫາບ້ານອື່ນ ແລະ ປະຕິບັດແບບນີ້ໄປຕາມລຳດັບຈົນສຳເລັດທຸກບາດກ້າວ ແລະ ຂັ້ນຕອນ ດັ່ງທີ່ໄດ້ສັງລວມໄວ້ດັ່ງຕໍ່ໄປນີ້:

## ແຜນວາດ 1. ບາດກ້າວ ແລະ ຂັ້ນຕອນ ຂອງການຈັດຕັ້ງປະຕິບັດວຽກ P-FALUPAM

**ບາດກ້າວ 1 ການກະກຽມ**

ຂັ້ນຕອນ 1. ແຜນວຽກ, ງົບປະມານ, ອຸປະກອນ/ເຄື່ອງມືຮັບໃຊ້ ແລະ ທີມງານ
ຂັ້ນຕອນ 2. ແບບຟອມເກັບກຳຂໍ້ມູນ ແລະ ຮ່າງເອກະສານ

**ບາດກ້າວ 2 ການເກັບກຳຂໍ້ມູນລະດັບບ້ານ ແລະ ສ້າງແຜນທີ່ພື້ນຖານຂອງບ້ານ**

ວຽກພາກສະໜາມ (ຮອບ 1)

ຂັ້ນຕອນ 1. ຈັດຕັ້ງທີມງານ ແລະ ຝຶກອົບຮົມໃຫ້ທີມງານ ວິຊາການຈາກຂະແໜງການກ່ຽວຂ້ອງຢູ່ ຂັ້ນເມືອງ
ຂັ້ນຕອນ 2. ເປີດກອງປະຊຸມຂັ້ນບ້ານ
ຂັ້ນຕອນ 3. ສ້າງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ
ຂັ້ນຕອນ 4. ເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ, ຊີວະນາໆພັນກະສິກຳ ແລະ ທ່າແຮງບົ່ມຊ້ອນຢູ່ພາຍໃນບ້ານ ແບບມີສ່ວນຮ່ວມ
ຂັ້ນຕອນ 5. ສ້າງແຜນທີ່ພື້ນຖານພູມີສາດຂອງບ້ານ
ຂັ້ນຕອນ 6. ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ

**ບາດກ້າວ 3 ການສ້າງແຜນທີ່ນຳໃຊ້ທີ່ດິນໃນປັດຈຸບັນ, ການເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ການປະເມີນຄວາມອຸດົມສົມບູນຂອງດິນ**

ວຽກພາກສະໜາມ (ຮອບ 2)

ຂັ້ນຕອນ 1. ສ້າງແຜນທີ່ການນຳໃຊ້ທີ່ດິນກະສິກຳ ແລະ ຄວາມປົກຫຸ້ມປ່າໄມ້ປັດຈຸບັນ
ຂັ້ນຕອນ 2. ເກັບກຳຂໍ້ມູນ ລະດັບຄອບຄົວ
ຂັ້ນຕອນ 3. ສຳຫຼວດ ແລະ ເກັບຕົວຢ່າງດິນໃນເຂດການຜະລິດກະສິກຳຂອງບ້ານ
ຂັ້ນຕອນ 4. ສັງລວມ ແລະ ວິເຄາະ ຂໍ້ມູນເສດຖະກິດ-ສັງຄົມ ແລະ ຊີວະນາໆພັນກະສິກຳ
ຂັ້ນຕອນ 5. ວິໄຈດິນ ແລະ ປະເມີນຄວາມອຸດົມສົມບູນຂອງດິນ

## ບາດກ້າວ 4 ການກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້

| | |
|---|---|
| ວຽກພາກສະໜາມ (ຮອບ 3) | ຂັ້ນຕອນ 1. ເປີດກອງປະຊຸມນຳສະເໜີແນວທາງວາງແຜນ ແລະ ຄຸ້ມຄອງການນຳໃຊ້ ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານ (FLUMZ)<br>ຂັ້ນຕອນ 2. ສ້າງແຜນຈັດສັນ FLUMZ ແບບມີສ່ວນຮ່ວມ<br>ຂັ້ນຕອນ 3. ທົບທວນ ແລະ ປັບປຸງແຜນຈັດສັນ FLUMZ ຂອງບ້ານ<br>ຂັ້ນຕອນ 4. ແນະນຳ ແລະ ສົ່ງເສີມການຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ |

## ບາດກ້າວ 5 ກວດກາຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ

| | |
|---|---|
| ວຽກພາກສະໜາມ (ຮອບ 4) | ຂັ້ນຕອນ 1. ກະກຽມທີມງານ, ຂໍ້ມູນ, ແຜນທີ່ ແລະ ອຸປະກອນ<br>ຂັ້ນຕອນ 2. ຕິດຕາມ, ປະເມີນ ແລະ ປັບປຸງ ແຜນຈັດສັນ FLUMZ<br>ຂັ້ນຕອນ 3. ຈັດກອງປະຊຸມຮັບຮອງແຜນຈັດສັນ FLUMZ ຢູ່ຂັ້ນເມືອງ<br>ຂັ້ນຕອນ 4. ມອບປື້ມແຜນຈັດສັນ FLUMZ ແລະ ຕິດປ້າຍແຜນທີ່ຂອງບ້ານ |

## ແຜນວາດ 2. ການຈັດຕັ້ງປະຕິບັດວຽກ P-FALUPAM ເປັນຮອບຢູ່ບ້ານ

ການຈັດຕັ້ງປະຕິບັດວຽກ P-FALUPAM (ຮອບທີ່ X) ຢູ່ບັນດາບ້ານເປົ້າໝາຍຢູ່ພາຍໃນໜຶ່ງກຸ່ມບ້ານ



# ພາກທີ່ II. ພາກເນື້ອໃນ

ປຶ້ມຄູ່ມືສະບັບນໍາໃຊ້ອັກສອນຫຍໍ້ພາສາອັງກິດ "P-FALUPAM" ເພື່ອໝາຍເຖິງ "ການວາງແຜນ, ຈັດສັນ ແລະ ຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ແບບມີສ່ວນຮ່ວມ", "CLUFC" ໝາຍເຖິງ "ການນໍາໃຊ້ທີ່ດິນ ແລະ ປ່າໄມ້ປັດຈຸບັນ" ແລະ "FLUMZ" ໝາຍເຖິງ "ເຂດຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້". ບາດກ້າວ ແລະ ຂັ້ນຕອນ ຈັດຕັ້ງປະຕິບັດວຽກ P-FALUPAM ມີລາຍລະອຽດດັ່ງຕໍ່ໄປນີ້:

## ບາດກ້າວທີ່ 1: ການກະກຽມ

ບາດກ້າວກະກຽມແມ່ນວຽກຫ້ອງການເຊິ່ງລວມມີ 2 ຂັ້ນຕອນຄື:

1. ກຽມແຜນວຽກ, ງົບປະມານ, ອຸປະກອນ/ເຄື່ອງມືຮັບໃຊ້ ແລະ ທີມງານ ແລະ
2. ກຽມແບບຟອມເອກະສານສໍາລັບເກັບກໍາຂໍ້ມູນ, ສໍາຫຼວດພາກສະໜາມ, ບັນທຶກກອງປະຊຸມ ແລະ ຂໍ້ມູນທີ່ດິນ. ລາຍລະອຽດຂອງແຕ່ລະຂັ້ນຕອນມີຄື:

### ຂັ້ນຕອນ 1. ແຜນວຽກ, ງົບປະມານ, ອຸປະກອນ/ເຄື່ອງມືຮັບໃຊ້ ແລະ ທີມງານ

ກ່ອນເລີ່ມຈັດຕັ້ງປະຕິບັດວຽກ P-FALUPAM ຢູ່ບ້ານເປົ້າໝາຍ ຕ້ອງໄດ້ກຽມເຊັ່ນ: (1) ທີມງານຂັ້ນສູນກາງປະກອບມີຊ່ຽວຊານສະເພາະດ້ານ (ຖ້າຈໍາເປັນ), ຄາດຄະເນຈໍານວນພະນັກງານຂັ້ນທ້ອງຖິ່ນ (ຂັ້ນແຂວງ, ເມືອງ, ກຸ່ມບ້ານ) ແລະ ຂັ້ນບ້ານ, ປະຊາຊົນທີ່ຈະເຂົ້າຮ່ວມກິດຈະກໍາຕ່າງໆ, (2) ສັງລວມບັນດາຂໍ້ມູນຂອງບ້ານທີ່ມີຢູ່ແລ້ວ, ກຸ່ມບ້ານ ແລະ ເມືອງເປົ້າໝາຍ, (3) ຂື້ນແຜນງົບປະມານ, (4) ກໍານົດໜ້າວຽກ ຫຼື ກິດຈະກໍາປະຈໍາວັນ, ແລະ (5) ກະກຽມວັດຖຸ, ອຸປະກອນ/ເຄື່ອງມືຮັບໃຊ້ ແລະ ສິ່ງອໍານວຍຄວາມສະດວກທີ່ຈໍາເປັນຄື:

#### 1 ແຜນວຽກ (ປະຕິທິນການເຮັດວຽກ)

ນໍາໃຊ້ປະຕິທິນ ກໍານົດກິດຈະກໍາ/ໜ້າວຽກ ເພື່ອຂື້ນແຜນ (ກໍານົດຈໍານວນມື້) ເຮັດວຽກພາກຫ້ອງການ ແລະ ພາກສະໜາມ ດັ່ງຕົວຢ່າງລຸ່ມນີ້:

**ຕາຕະລາງ 1. ຕົວຢ່າງ ປະຕິທິນ ກໍານົດຈໍານວນມື້ ແລະ ກິດຈະກໍາ/ໜ້າວຽກ ປະຈໍາວັນ**

| ລາຍລະອຽດໜ້າວຽກ | ວັນທີ່ | | | | | | | | | | | | | | | ຈໍານວນມື້ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | |
| ບາດກ້າວທີ່ 1 | | | | | | | | | | | | | | | | |
| ບາດກ້າວທີ່ 2 | | | | | | | | | | | | | | | | |
| ບາດກ້າວທີ່ 3 | | | | | | | | | | | | | | | | |
| ບາດກ້າວທີ່ 4 | | | | | | | | | | | | | | | | |
| ບາດກ້າວທີ່ 5 | | | | | | | | | | | | | | | | |

## 2 ງົບປະມານ

ຂື້ນແຜນງົບປະມານ ຕາມລະບຽບຂອງກະຊວງການເງິນ ຫຼື ແຜນນໍາໃຊ້ງົບປະມານຂອງຜູ້ໃຫ້ທຶນ ໂດຍປະກອບມີ ອັດຕາກິນ, ຄ່າພັກເຊົາ, ຄ່າເດີນທາງ ແລະ ຄ່າວັດຖຸ, ອຸປະກອນ/ເຄື່ອງມືຮັບໃຊ້ ດ້ານວິຊາການສໍາລັບທີມງານວິຊາການ ເພື່ອ ນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກ P-FALUPAM .

## 3 ອຸປະກອນ/ເຄື່ອງມື

ເພື່ອຮັບປະກັນການປະຕິບັດວຽກ P-FALUPAM ໃຫ້ໄດ້ຮັບຜົນດີ, ອໍານວຍຄວາມສະດວກດ້ານ ອຸປະກອນ/ເຄື່ອງມື ໃຫ້ແກ່ພະນັກງານວິຊາການດັ່ງລຸ່ມນີ້:

**ຕາຕະລາງ 2. ອຸປະກອນ/ ເຄື່ອງມື**

| ລ/ດ | ລາຍການ | ຈ/ນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|
| I | **ອຸປະກອນ** | | | |
| | ເຄື່ອງນຸ່ງຫົ່ມ, ໝວກ, ເກີບ ແລະ ເສື້ອກັນຝົນ | | | |
| | ເຕັ້ນ, ຖົງນອນ ລະ ກະເປົາໃສ່ເຄື່ອງຂອງພະນັກວິຊາການ | | | |
| | ໂຕະ-ຕັ່ງເຮັດວຽກຂະໜາດນ້ອຍສໍາລັບວາງຄອມພິວເຕີ | 2 | ຊຸດ | |
| | ໂຄມໄຟ ແລະ ໄຟສາຍ | 2 | ຊຸດ | |
| | ຈັກໄຟຟ້າ, ສາຍໄຟ, ດອກໄຟ, ປັກສຽບ (ຄົບຊຸດ) | 1 | ຊຸດ | ຖ້າບ້ານບໍ່ມີໄຟຟ້າ |
| | ລໍາໂພງເຄື່ອນທີ່ | 1 | ຊຸດ | |
| II | **ເຄື່ອງມືວິຊາການ** | | | |
| | ຄອມພິວເຕີສໍາລັບສ້າງແຜນທີ່ ແລະ ເຄື່ອງບັນທຶກຂໍ້ມູນ | 1 | ຊຸດ | ມີສາຍໂຫຼດຂໍ້ມູນ |
| | ຄອມພິວເຕີສໍາລັບຂໍ້ມູນທົ່ວໄປ ແລະ ເຄື່ອງບັນທຶກຂໍ້ມູນ | 1 | ຊຸດ | |
| | ເຄື່ອງ ແລະ ຈໍສາຍ LCD | 1 | ຊຸດ | |
| | ເຄື່ອງພິມເອກະສານ (Printer) | 1 | ເຄື່ອງ | |
| | ເຄື່ອງ GPS, ຖ່ານ ແລະ ເຄື່ອງສາກໄຟ | 2 | ຊຸດ | |
| | ກ້ອງຖ່າຍຮູບ | 2 | ໜ່ວຍ | |
| III | **ອຸປະກອນສໍາລັບການສ້າງແຜນທີ່ຂັ້ນບ້ານ ພາກສະໜາມ** | | | |
| | ບິກແຕ້ມແຜນທີ່ຂະໜາດນ້ອຍ (14 ສີ) ແລະ ກາງ (4 ສີ) | | | |
| | ບິກແຕ້ມແຜ່ນໄສ ທີ່ວາງເທິງແຜນທີ່ (ຖ້າໃຊ້ແຜ່ນໄສ) | | | |
| | ແຜ່ນຢາງໃສ (ສໍາລັບແປພາບຖ່າຍດາວທຽມ/ທາງອາກາດ) | | | |
| | ເຈ້ຍຕິດສີ (ຂະໜາດ 1.5 ຫາ 2.5 ຊມ) | | | ຂຽນຊື່ຕິດໃສ່ແຜນທີ່ |
| | ບັນທັດຍາວ 60 ຊມ (ເຫຼັກ ຫຼື ຢາງ) | | | |
| | ສະກ໋ອດໃສຂະໜາດກວ້າງ 1-2 ຊມ | | | ຕິດເຈ້ຍ/ແຜນທີ່ |

| ລ/ດ | ລາຍການ | ຈ/ນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|
| | ບັ້ງໃສ່ແຜນທີ່ (ຊະນິດກັນນ້ຳໄດ້) | | | |
| | ເຂັມໝຸດສີ ເພື່ອປັກແຜນທີ່ ແລະ ເຈ້ຍ | | | |
| | ເສັ້ນດ້າຍ ຫຼື ເສັ້ນຝ້າຍສີ | | | |
| IV | **ອຸປະກອນສຳລັບເກັບຕົວຢ່າງດິນ** | | | |
| | ຈົກ, ຊ້ອນ, ມີດຈິ້ມດິນ, ພ້າ, ເຫຼັກເຈາະດິນ, ໄມ້ແມັດ (2-3 ມ), ຖົງໃສ່ຕົວຢ່າງດິນ, ກັບດິນ ແລະ ປື້ມທຽບສີ | | | |
| | ສານເຄມີ HCl 10% | | | |
| | ເຄື່ອງມື Soil Test Kit | | | |
| V | **ອຸປະກອນອື່ນໆ** | | | |
| | ເຈ້ຍຂາວແຜ່ນໃຫ່ຍ ຂະໜາດ A0 ແລະ ເຈ້ຍ A4 | | | |
| | ປື້ມບັນທຶກ, ບິກ, ສໍ, ນ້ຳລຶບ, | | | |
| | ເຄື່ອງໜີບເຈ້ຍ (ກູາບເພີ) ແລະ ລູກກູາບເພີ, ເຄື່ອງເຈາະຮູເຈ້ຍ, ເຫຼັກໜີບເຈັ້ຍ, ຊອງໃສ່ເອກະສານ, ມີດຄັດເຕີ ແລະ ມີດຕັດ | | | |
| | ແບບຟອມເກັບກຳຂໍ້ມູນ | | | |

## 4 ທີມງານ

ທີມງານທີ່ຈະຈັດຕັ້ງປະຕິບັດວຽກ P-FALUPAM ຢູ່ບ້ານປະກອບມີພະນັກງານຈາກຂັ້ນສູນກາງ (2-3 ຄົນ), ຂັ້ນແຂວງ (2-3 ຄົນ) ແລະ ຂັ້ນເມືອງ (4-5 ຄົນ) ລວມທັງໝົດປະມານ 7-10 ຄົນ ສ່ວນປະຊາຊົນທີ່ຈະເຂົ້າຮ່ວມແມ່ນຂື້ນກັບຂະໜາດ (ນ້ອຍ-ໃຫຍ່) ຂອງບ້ານ. ໂດຍທົ່ວໄປ, ຈຳນວນພະນັກງານ ແລະ ປະຊາຊົນດັ່ງທີ່ກ່າວມານັ້ນແມ່ນຕົວແທນຈາກພາກສ່ວນດັ່ງນີ້:

1) ຂັ້ນສູນກາງ: ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຂອງ ກະຊວງກະສິກຳ ແລະ ປ່າໄມ້,
2) ຂັ້ນແຂວງ: ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຂອງ ພະແນກກະສິກຳ ແລະ ປ່າໄມ້, ຂະແໜງ ທີ່ດິນ ຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ,
3) ຂັ້ນເມືອງ: ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການພາຍໃນ ແລະ ຫ້ອງການອື່ນທີ່ກ່ຽວຂ້ອງ,
4) ຂັ້ນກຸ່ມບ້ານ ແລະ ບ້ານ: ຄະນະກຸ່ມບ້ານ, ອຳນາດການປົກຄອງບ້ານ, ຄະນະຮັບຜິດຊອບວຽກ P-FALUPAM, ອົງການຈັດຕັ້ງມະຫາຊົນ ແລະ ປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ.

ຈຳນວນ ພະນັກງານຢູ່ໃນທີມວິຊາການ ແມ່ນສາມາດປັບປ່ຽນຕາມສະພາບ ຫຼື ເງື່ອນໄຂ ແລະ ໜ້າວຽກຕົວຈິງຢູ່ຂັ້ນບ້ານໂດຍມີການຈັດແບ່ງໜ້າວຽກໃຫ້ຈະແຈ້ງດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 3. ຄວາມຮັບຜິດຊອບຂອງທີມງານວິຊາການ

| ລດ | ໜ້າວຽກ - ທີມງານຍ່ອຍ | ຈຳນວນຄົນ |
|---|---|---|
| 1 | ວິຊາການດ້ານ GIS / ແຜນທີ່ | 1 - 2 |
| 2 | ວິຊາການດ້ານ ສຳຫຼວດຕົວຈິງ ຢູ່ ພາກສະໜາມ | 2 - 3 |
| 3 | ວິຊາການດ້ານ ການສຳພາດ ແລະ ເກັບກຳຂໍ້ມູນ | 2 - 3 |
| 4 | ວິຊາການດ້ານ ການສຳຫຼວດ ແລະ ເກັບຕົວຢ່າງດິນ | 2 |
| | ລວມ: | 7 - 10 |

ໝາຍເຫດ: ທີມງານແຜນທີ່ຕ້ອງກະກຽມແຜນທີ່ ທີ່ຕ້ອງການ ເພື່ອນຳໃຊ້ຢູ່ໃນພາກສະໜາມໃຫ້ຄົບຖ້ວນ

## ຂັ້ນຕອນ 2. ແບບຟອມເກັບກຳຂໍ້ມູນ ແລະ ຮ່າງເອກະສານ

ການນຳໃຊ້ແບບຟອມເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຊີວະນາໆພັນກະສິກຳ, ເຂດທີ່ດິນກະສິກຳ ແລະ ປ່າໄມ້ ແລະ ຂໍ້ມູນອື່ນເພື່ອປະກອບໃສ່ບົດບັນທຶກ ຫຼື ຂໍ້ຕົກລົງຕ່າງໆແມ່ນວຽກສຳຄັນ ແລະ ຈຳເປັນຕໍ່ວຽກ P-FALUPAM ສະນັ້ນ ຕ້ອງໄດ້ກຽມແບບຟອມ ແລະ ຮ່າງເອກະສານທາງການໃຫ້ຄົບຖ້ວນດັ່ງລຸ່ມນີ້:

**ແບບຟອມເກັບກຳຂໍ້ມູນ** (ມີທັງໝົດ 21 ແບບຟອມ)

ແບບຟອມ ເກັບກຳຂໍ້ມູນເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳ P-FALUPAM ຢູ່ບ້ານ ຮອບ 1 ມີ 11 ແບບຟອມ (1-11), ຮອບ 2 ມີ 5 ແບບຟອມ (12-16), ຮອບ 3 ມີ 4 ແບບຟອມ (17-20) ແລະ ຮອບ 4 ມີ 1 ແບບຟອມ (21). ເນື້ອໃນລວມຂອງແຕ່ລະແບບຟອມມີຄື:

ແບບຟອມທີ 1. **ເກັບກຳຂໍ້ມູນທົ່ວໄປຂັ້ນຕົ້ນຂອງບ້ານ:** ປະຫັວດຄວາມເປັນມາດ້ານຕ່າງໆຂອງບ້ານໃນໄລຍະຜ່ານມາເຖິງປະຈຸບັນ ເຊັ່ນ: ການຕັ້ງບ້ານ, ຈຳນວນພົນລະເມືອງ, ອາຊີບ, ໂຄງລ່າງພື້ນຖານ, ການລ້ຽງສັດ, ການຜະລິດກະສິກຳ ແລະ ເຄື່ອງມືນຳໃຊ້ເຂົ້າໃນການຜະລິດກະສິກຳ, ການຄຸ້ມຄອງການນຳໃຊ້ດິນ (ລວມທັງວຽກມອບດິນມອບປ່າ), ບັນດາຊື່ໂຄງການ ແລະ ກິດຈະກຳພັດທະນາຢູ່ບ້ານ ແລະ ອື່ນໆ

ແບບຟອມທີ 2. **ເກັບກຳຂໍ້ມູນກ່ຽວກັບຊີວະນາໆພັນກະສິກຳຂອງບ້ານ:** ລວມມີ ຊື່ແນວພັນເຂົ້າ, ຊື່ແນວພັນພືດ, ໄລຍະເຮັດໄຮ່ເຂດເນີນສູງແບບໝູນວຽນ, ການລ້ຽງສັດ ແລະ ສະພາບປ່າໄມ້

ແບບຟອມທີ 3. **ເກັບກຳຂໍ້ມູນສະພາບການຜະລິດ ແລະ ປະຕິທິນການປູກພືດເສດຖະກິດຫຼັກຂອງບ້ານ:** ລະດູການປູກພືດກະສິກຳ, ຊະນິດພືດ ແລະ ສະພາບການຜະລິດຢູ່ພື້ນທີ່ສະເພາະເຊັ່ນ: ຕົ້ນທຶນ, ຊະນິດ, ຜົນຜະລິດ ແລະ ລາຍຮັບຫຼັກ (ລວມທັງການນຳໃຊ້ທີ່ດິນ)

ແບບຟອມທີ 4. **ເກັບກຳຂໍ້ມູນການເກັບກູ້, ສະພາບ ແລະ ບູລິມະສິດເຄື່ອງປ່າຂອງດົງ**: 1) ການເກັບກູ້ ແລະ ສະພາບຂອງເຄື່ອງປ່າຂອງດົງ: ຄວາມອຸດົມສົມບູນ ແລະ ບົດບາດອັນສຳຄັນຂອງຊັບພະຍາກອນທຳມະຊາດ ຕໍ່ການດຳລົງຊີວິດຂອງປະຊາຊົນ ທີ່ກ່ຽວຂ້ອງກັບເສດຖະກິດ (ລາຍໄດ້), ອາຫານ, ຢາ ແລະ ເຄື່ອງໃຊ້ພາຍໃນຄອບຄົວ. ຂໍ້ມູນ ການຊື້-ຂາຍເຄື່ອງປ່າຂອງດົງລະດັບບ້ານ ແລະ ສະຖານະພາບຂອງເຄື່ອງປ່າຂອງດົງ, ຊະນິດເຄື່ອງປ່າຂອງດົງທີ່ສຳຄັນ 2) ເຄື່ອງປ່າຂອງດົງທີ່ເປັນບູລິມະສິດ: ຊະນິດທີ່ກຳລັງຈະສູນພັນ ຫຼື

ໄດ້ສູນພັນແລ້ວ, ຊະນິດທີ່ປະຊາຊົນມີຈຸດປະສົງ ຄຸ້ມຄອງ, ຟື້ນຟູແບບທຳມະຊາດ ແລະ ຟື້ນຟູດ້ວຍການປູກ (ໃສ່ດິນສວນ) ເພື່ອຮັບໃຊ້ຄອບຄົວ ຫຼື ປູກເປັນສວນເສດຖະກິດ

ແບບຟອມທີ 5. **ເກັບກຳຂໍ້ມູນການເກັບກູ້, ສະພາບ ແລະ ບູລິມະສິດໄມ້:** 1) ການເກັບກູ້ ແລະ ນຳໃຊ້ໄມ້: ຄວາມອຸດົມສົມບູນ ແລະ ຜົນຜະລິດໄມ້ທີ່ພົວພັນກັບການດຳລົງຊີວິດຂອງປະຊາຊົນ ລວມທັງການຂາຍໄມ້, ລາຍຮັບຈາກໄມ້ ແລະ ສະຖານະພາບຂອງໄມ້ແຕ່ລະຊະນິດ ແລະ 2) ໄມ້ບູລິມະສິດ: ຊະນິດໄມ້ທີ່ກຳລັງຈະສູນພັນ ຫຼື ສູນພັນແລ້ວ, ຊະນິດໄມ້ທີ່ປະຊາຊົນຢາກຟື້ນຟູ (ປູກໃນດິນສວນເພື່ອຮັບໃຊ້ຄອບຄົວ ຫຼື ປູກເປັນສວນເສດຖະກິດ)

ແບບຟອມທີ 6. **ເກັບກຳຂໍ້ມູນກ່ຽວກັບສັດປ່າ:** ຊະນິດພັນ ແລະ ຄວາມສຳຄັນຂອງສັດປ່າຕໍ່ການດຳລົງຊີວິດຂອງປະຊາຊົນ, ສະຖານະພາບຂອງສັດປ່າແຕ່ລະຊະນິດ, ການປ່ຽນແປງ ແລະ ເຫດຜົນຂອງການປ່ຽນແປງ (ຖ້າມີ)

ແບບຟອມທີ 7. **ເກັບກຳຂໍ້ມູນກ່ຽວກັບສັດນ້ຳ:** ຊະນິດພັນ ແລະ ຄວາມສຳຄັນຂອງສັດນ້ຳຕໍ່ການດຳລົງຊີວິດຂອງປະຊາຊົນ, ສະຖານະພາບຂອງສັດນ້ຳແຕ່ລະຊະນິດ ແລະ ເຫດຜົນຂອງການປ່ຽນແປງ (ຖ້າມີ)

ແບບຟອມທີ 8. **ເກັບກຳຂໍ້ມູນສຳມະໂນບັນຫາ ແລະ ວິທີການແກ້ໄຂ:** ບັນຫາ ແລະ ສາເຫດຂອງບັນຫາ, ຜົນກະທົບ ແລະ ຂໍ້ສະເໜີວິທີແກ້ໄຂບັນຫາ ຂອງປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ

ແບບຟອມທີ 9. **ເກັບກຳຂໍ້ມູນດ້ານເງື່ອນໄຂ ແລະ ທ່າແຮງດ້ານການພັດທະນາຂອງບ້ານ:** ເງື່ອນໄຂ ແລະ ທ່າແຮງດ້ານການພັດທະນາ ລວມທັງການກະສິກຳ ແລະ ປ່າໄມ້ ແລະ ສາທາລະນະສຸກຂອງບ້ານ

ແບບຟອມທີ 10. **ບັນທຶກຜົນການສຳຫຼວດຈຸດທີ່ຕັ້ງອັນສຳຄັນທາງພູມີສາດ:** ຂໍ້ມູນທີ່ໄດ້ຈາກການສຳຫຼວດພື້ນທີ່ຕົວຈິງ ດ້ວຍການນຳໃຊ້ເຄື່ອງ GPS ບັນທຶກຈຸດສາຍນ້ຳ, ຫ້ວຍ, ຈຸດພູ ແລະ ຈຸດທີ່ຕັ້ງສຳຄັນອື່ນໆ ຂອງບ້ານ

ແບບຟອມທີ 11. **ບັນທຶກການສຳຫຼວດຈຸດອ້າງອີງເຂດຄຸ້ມຄອງຂອງບ້ານ:** ຂໍ້ມູນຈາກການສຳຫຼວດພື້ນທີ່ຕົວຈິງໂດຍການນຳໃຊ້ ເຄື່ອງ GPS ເພື່ອບັນທຶກຂໍ້ມູນກ່ຽວກັບເຂດຄຸ້ມຄອງຂອງບ້ານ

ແບບຟອມທີ 12. **ຄວາມຕ້ອງການເຂົ້າກິນ ແລະ ສັດລ້ຽງຂອງຄອບຄົວ:** ຈຳນວນປະຊາຊົນ, ແຮງງານ, ການປະກອບອາຊີບ ແລະ ປະເພດສັດລ້ຽງລະດັບຄອບຄົວ

ແບບຟອມທີ 13. **ເກັບກຳຂໍ້ມູນລາຍຮັບຂອງຄອບຄົວ:** ລາຍຮັບ ແລະ ແຫຼ່ງລາຍຮັບພື້ນຖານຂອງປະຊາຊົນແຕ່ລະຄອບຄົວພາຍໃນບ້ານ

ແບບຟອມທີ 14. **ເກັບກຳຂໍ້ມູນການນຳໃຊ້ທີ່ດິນຂັ້ນຄອບຄົວ:** ການຄອບຄອງ, ຈັບຈອງ ແລະ ນຳໃຊ້ທີ່ດິນຂອງປະຊາຊົນຂັ້ນຄອບຄົວພາຍໃນບ້ານ

ແບບຟອມທີ 15. **ບັນທຶກຕົວຢ່າງດິນ:** ເກັບຕົວຢ່າງສະພາບ ແລະ ຄຸນລັກສະນາທາງຟີຊີກຂອງດິນ ພ້ອມທັງວິເຄາະຄື: 1) ທີ່ຕັ້ງ ແລະ ສະພາບແວດລ້ອມຂອງຂຸມດິນ, 2) ລັກສະນະທົ່ວໄປ ເຊັ່ນ: ຄວາມເລິກ, ເນື້ອດິນ, ສີດິນ, ແລະ 3) ຮູບປະພັນຂອງແຕ່ລະຊັ້ນດິນ

ແບບຟອມທີ 16. **ບັນທຶກຜົນການສຳຫຼວດພື້ນທີ່ດິນກະສິກຳ ແລະ ປ່າໄມ້ໃນປັດຈຸບັນ:** ຂໍ້ມູນຈາກການສຳຫຼວດພື້ນທີ່ດິນກະສິກຳ, ປ່າໄມ້ ແລະ ອື່ນໆໃນປະຈຸບັນ ໂດຍການນຳໃຊ້ ເຄື່ອງ GPS

ແບບຟອມທີ 17. **ບັນທຶກຂໍ້ມູນເຂດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ:** ຂໍ້ມູນເຂດຈັດສັນທີ່ດິນກະສິກຳຂອງບ້ານ ຊຶ່ງລວມມີມີຈຸດສຳຄັນຄື: 1) ຊື່ເຂດພື້ນທີ່ຕາມພາສາທ້ອງຖິ່ນ, 2) ທີ່ຕັ້ງ, ລັກສະນະດ້ານພູມີສາດ, ຈຸດປະສົງ ແລະ ເຫດຜົນການນຳໃຊ້, 3) ສະພາບການຄຸ້ມຄອງ-ນຳໃຊ້ ເຂດພື້ນທີ່ໃນໄລຍະຜ່ານມາຫາປັດຈຸບັນ, 4) ລາຍຊື່ຄອບຄົວທີ່ນຳໃຊ້ຕອນດິນກະສິກຳ ເພື່ອທຳການຜະລິດຢູ່ເຂດດັ່ງກ່າວ, ແລະ 5) ແຜນຄຸ້ມຄອງ/ປ້ອງກັນໄຟໃໝ້ລາມປ່າຂອງບ້ານ (ພ້ອມທັງບັນດາຊື່ຂອງຄອບຄົວທີ່ທຳການຜະລິດຢູ່ເຂດນີ້)

ແບບຟອມທີ 18. **ບັນທຶກຂໍ້ມູນເຂດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້:** ເຂດປ່າໄມ້ທີ່ໄດ້ຈັດສັນເພື່ອ ຄຸ້ມຄອງການນຳໃຊ້ (ອີງຕາມແຜນຈັດສັນ, ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ແບບມີສ່ວນຮ່ວມຂອງບ້ານ) ເຊັ່ນ: 1) ຊື່ເຂດພື້ນທີ່ດິນປ່າໄມ້ (ພາສາທ້ອງຖິ່ນ), 2) ຂໍ້ມູນທີ່ຕັ້ງ ແລະ ລັກສະນະ ດ້ານພູມີສາດຂອງແຕ່ລະເຂດພື້ນທີ່, 3) ຈຸດປະສົງ ແລະ ເຫດຜົນຂອງການນຳໃຊ້, 4) ສະພາບການຄຸ້ມຄອງນຳໃຊ້ພື້ນທີ່ໃນໄລຍະຜ່ານມາ ແລະ ປັດຈຸບັນ, 5) ລາຍຊື່ຄອບຄົວທຳການຜະລິດຢູ່ເຂດທີ່ດິນ, 6) ທິດທາງ/ແຜນການຂອງບ້ານໃນການຟື້ນຟູທີ່ດິນປ່າໄມ້, 7) ແຜນການຄຸ້ມຄອງ/ປ້ອງກັນການເກີດໄຟໃໝ້ລາມປ່າຂອງບ້ານ, ແລະ 8) ລະບຽບການຄຸ້ມຄອງການນຳໃຊ້ ສະເພາະເຂດທີ່ດິນປ່າໄມ້

ແບບຟອມທີ 19. **ບັນທຶກຈຸດພິກັດຂອງຂອບເຂດຈັດສັນຕາມແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້:** ຈຸດພິກັດຂອງຂອບເຂດຈັດສັນຕາມ ແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ດ້ວຍການນຳໃຊ້ເຄື່ອງ GPS ເຂົ້າໃນການສຳຫຼວດພື້ນທີ່ຕົວຈິງ

ແບບຟອມທີ 20. **ການທົບທວນ ແລະ ປັບປຸງລະບຽບຄຸ້ມຄອງ ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ:** ມີຄວາມຈຳເປັນ ແລະ ສຳຄັນຢ່າງຍິ່ງຕໍ່ຄວາມສາມາດປະຕິບັດຕາມແຜນຈັດສັນ FLUMZ ເປັນການຍົກລະດັບຄຸນນະພາບຊີວິດຂອງປະຊາຊົນບັນດາເຜົ່າ ທີ່ຕິດພັນກັບການນຳໃຊ້ເນື້ອທີ່ດິນກະສິກຳ ແລະ ຊັບພະຍາກອນປ່າໄມ້ທຳມະຊາດ

ແບບຟອມທີ 21. **ການຕິດຕາມ ແລະ ປະເມີນ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດ P-FALUPAM:** ການສຶກສາ ແລະ ບັນທຶກ ສົມທຽບກັບຂໍ້ມູນຂໍ້ມູນ ທີ່ມີຢູ່ແລ້ວ ກັບຂໍ້ມູນທີ່ເກັບກຳໄດ້ຈາກການສຳພາດ, ປຶກສາຫາລື ແລະ ແລກປ່ຽນບົດຮຽນ/ຂໍ້ມູນຢູ່ໃນ ກອງປະຊຸມ ຮ່ວມກັບປະຊາຊົນ ກ່ຽວກັບ ຜົນໄດ້ຮັບຈາກວຽກ P-FALUPAM

**ຮ່າງເອກະສານ (ລວມທັງໝົດມີ 9 ສະບັບ)**

ຂັ້ນຕອນທີ່ 3 ຂອງ ບາດກ້າວທີ່ 2 ແມ່ນນຳໃຊ້ 4 ຮ່າງເອກະສານ (1- 4) ແລະ ຂັ້ນຕອນທີ່ 2 ຂອງບາດກ້າວທີ່ 5 ແມ່ນນຳໃຊ້ 5 ຮ່າງເອກະສານ (5-9) ເນື້ອໃນລວມຂອງຮ່າງເອກະສານມີຄື:

ຮ່າງເອກະສານ 1. **ຮ່າງໃບສະເໜີຂອງບ້ານເພື່ອຂໍແຕ່ງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ:** ໃບສະເໜີທີ່ອົງການຈັດຕັ້ງບ້ານຂໍສະເໜີໃຫ້ທ່ານເຈົ້າເມືອງໂດຍຜ່ານຫ້ອງການ

ກະສິກຳ ແລະ ປ່າໄມ້ເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບທີ່ໄດ້ຮັບການຄັດເລືອກຢ່າງເປັນເອກະພາບໂດຍ ປະຊາຊົນ ແລະ ອົງການຈັດຕັ້ງບ້ານ. ໃບສະເໜີດັ່ງກ່າວໂດຍປະກອບມີລາຍຊື່ ແລະ ໜ້າທີ່ຮັບຜິດຊອບຂອງ ຄະນະ P-FALUPAM ຂັ້ນບ້ານ.

ຮ່າງເອກະສານ 2. **ຮ່າງໃບສະເໜີຂອງຫ້ອງການກະສິກຳ ເພື່ອຂໍແຕ່ງຕັ້ງ "ຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ:** ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສະເໜີຂໍໃຫ້ທ່ານເຈົ້າເມືອງ ຮັບຮອງເອົາຜົນການແຕ່ງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂອງບ້ານ ອີງຕາມຕາມການສະເໜີຂອງອົງການຈັດຕັ້ງບ້ານ.

ຮ່າງເອກະສານ 3. **ຮ່າງຂໍ້ຕົກລົງຂອງທ່ານເຈົ້າເມືອງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ:** ເອກະສານຢັ້ງຢືນການຮັບຮອງເອົາຂໍ້ສະເໜີຂໍແຕ່ງຕັ້ງຄະນະຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ ຈາກທ່ານເຈົ້າເມືອງ.

ຮ່າງເອກະສານ 4. **ຮ່າງບົດບັນທຶກຂອບເຂດຄຸ້ມຄອງຂອງບ້ານ:** ບົດບັນທຶກຄວາມເຂົ້າໃຈ ແລະ ຄວາມເປັນເອກະພາບກ່ຽວກັບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ອີງໃສ່ຜົນການປຶກສາຫາລື ແລະ ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງບ້ານ, ປະຊາຊົນບັນດາເຜົ່າພາຍໃນບ້ານເຈົ້າພາບ ແລະ ບ້ານອ້ອມຂ້າງ

ຮ່າງເອກະສານ 5. **ຮ່າງໃບສະເໜີຂອງບ້ານເພື່ອຂໍຮັບຮອງເອົາແຜນຈັດສັນ FLUMZ ຂັ້ນບ້ານ:** ໃບສະເໜີຈາກອົງການຈັດຕັ້ງບ້ານຫາທ່ານເຈົ້າເມືອງ ເພື່ອຂໍອະນຸມັດນຳໃຊ້ແຜນຈັດສັນ FLUMZ ໂດຍຜ່ານຫ້ອງການກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນອື່ນກ່ຽວຂ້ອງ

ຮ່າງເອກະສານ 6. **ຮ່າງໃບສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອຂໍຮັບຮອງເອົາແຜນຈັດສັນ FLUMZ ຂັ້ນບ້ານ:** ໃບສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ ຫາທ່ານເຈົ້າເມືອງ ເພື່ອຂໍອະນຸມັດນຳໃຊ້ ແຜນຈັດສັນ FLUMZ ຂອງບ້ານ ໂດຍຜ່ານພາກສ່ວນອື່ນກ່ຽວຂ້ອງ

ຮ່າງເອກະສານ 7. **ຮ່າງຂໍ້ຕົກລົງຮັບຮອງເອົາແຜນຈັດສັນ FLUMZ ຂອງທ່ານເຈົ້າເມືອງ:** ເອກະສານຢັ້ງຢືນຮັບຮອງເອົາ ແຜນຈັດສັນ FLUMZ ຂອງບ້ານ ໂດຍທ່ານເຈົ້າເມືອງຕາມການສະເໜີຂອງບ້ານ.

ຮ່າງເອກະສານ 8. **ຮ່າງການຕິດຕາມ ແລະ ລາຍງານການປະຕິບັດຕາມແຜນຈັດສັນ** FLUMZ **ຂັ້ນບ້ານ:** ຕອນດິນກະສິກຳທີ່ປະຊາຊົນນຳໃຊ້ຜະລິດກະສິກຳແບບຄົງທີ່ ຫຼື ບ່ອນຢູ່/ສະນຳລ້ຽງສັດ (ຄົງທີ່), ຕອນດິນທີ່ຜູ້ນຳໃຊ້ມີຈຸດປະສົງຢາກພັດທະນາແບບຄົງທີ່

ຮ່າງເອກະສານ 9. **ຮ່າງບົດລາຍງານການຕິດຕາມກວດກາການນຳໃຊ້ທີ່ດິນ ຕາມແຜນຈັດສັນ FLUMZ:** ວິທີແກ້ໄຂ, ດັດແກ້ ຫຼື ປັບປຸງແຜນ ແລະ ແຜນທີ່ FLUMZ ທີ່ບ້ານ ໄດ້ຕົກລົງເຫັນດີ ຢ່າງເປັນເອກະພາບ

***ໝາຍເຫດ:*** *ລາຍລະອຽດດ້ານເນື້ອໃນຂອງບັນດາແບບຟອມ ເກັບກຳຂໍ້ມູນ ແລະ ຮ່າງເອກະສານ ທີ່ໄດ້ກ່າວມາຂ້າງເທິງນັ້ນແມ່ນມີຢູ່ໃນພາກເອກະສານແບບທ້າຍ ທີ່ I*

## ບາດກ້າວທີ 2: ການເກັບກຳຂໍ້ມູນ ແລະ ສ້າງແຜນທີ່ພື້ນຖານຂອງບ້ານ (ວຽກພາກສະໜາມ ຮອບ 1)

### ຂັ້ນຕອນ 1. ຈັດຕັ້ງທີມງານ ແລະ ຝຶກອົບຮົມໃຫ້ພະນັກງານວິຊາການ ຂັ້ນເມືອງ

ກ່ອນການຈັດຕັ້ງປະຕິບັດກິດຈະກຳຢູ່ບ້ານເປົ້າໝາຍ, ທີມງານທີ່ກ່ຽວຂ້ອງຂັ້ນເມືອງຕ້ອງໄດ້ຮັບການຝຶກອົບຮົມດ້ານວິຊາການໃຫ້ມີຄວາມເຂົ້າໃຈລະອຽດ ແລະ ຈະແຈ້ງ ໂດຍສະເພາະ ດ້ານໜ້າທີ່ຮັບຜິດຊອບ, ການນຳໃຊ້ແບບຟອມສຳພາດ, ການບັນທຶກຂໍ້ມູນ ແລະ ວິທີການດຳເນີນວຽກດ້ານອື່ນທີ່ກ່ຽວຂ້ອງ.

### ຂັ້ນຕອນ 2. ເປີດກອງປະຊຸມຂັ້ນບ້ານ

ຢູ່ໃນ ກອງປະຊຸມຂັ້ນບ້ານ, ອະທິບາຍໂດຍຫຍໍ້ໃຫ້ອຳນາດການປົກຄອງ ແລະ ປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານຮັບຮູ້ ແລະ ເຂົ້າໃຈເຖິງຈຸດປະສົງ, ບາດກ້າວ, ຂັ້ນຕອນ ແລະ ຄວາມສຳຄັນຂອງການຈັດຕັ້ງປະຕິບັດ ວຽກ P-FALUPAM ໂດຍນຳໃຊ້ເວລາດຳເນີນກອງປະຊຸມປະມານ 1 ຫາ 2 ຊົ່ວໂມງດັ່ງລຸ່ມນີ້:

**ຕາຕະລາງ 4. ກິດຈະກຳ ສຳລັບຈັດຕັ້ງປະຕິບັດວຽກ P-FALUPAM ຢູ່ຂັ້ນບ້ານ**

| ບາດກ້າວ | ກິດຈະກຳ | ກຳນົດເວລາ |
|---|---|---|
| 1 | - ກະກຽມຢູ່ພາກຫ້ອງການ (ສູນກາງ, ແຂວງ, ເມືອງ) | |
| 2 | - ຄັດເລືອກ ແລະ ແຕ່ງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ<br>- ສ້າງແຜນທີ່ພື້ນຖານພູມີສາດຂອງບ້ານ ແບບມີສ່ວນຮ່ວມ<br>- ປຶກສາຫາລືກັບບ້ານເຈົ້າພາບ ແລະ ບ້ານອ້ອມຂ້າງທີ່ມີເຂດຄຸ້ມຄອງຕິດຈອດ, ກຳນົດເຂດຄຸ້ມຄອງບ້ານ ແລະ ສຳຫຼວດເຂດຄຸ້ມຄອງບ້ານ ແບບມີສ່ວນຮ່ວມ<br>- ສ້າງບົດບັນທຶກ ລະຫວ່າງ ບ້ານເຈົ້າພາບ ແລະ ບ້ານອ້ອມຂ້າງ ກ່ຽວກັບ ເຂດຄຸ້ມຄອງຂອງບ້ານ<br>- ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບສະພາບທົ່ວໄປຂອງບ້ານ ຈາກອຳນາດການປົກຄອງບ້ານ<br>- ເກັບກຳຂໍ້ມູນເຄື່ອງປ່າຂອງດົງ, ປ່າໄມ້, ສັດປ່າ, ສັດນ້ຳ, ສຳມະໂນບັນຫາ ແລະ ເງື່ອນໄຂ/ທ່າແຮງໃນການພັດທະນາຂອງບ້ານ (ສຳພາດກຸ່ມຜູ້ຊົມໃຊ້) | 4-5ວັນ |
| 3 | - ເກັບກຳຂໍ້ມູນລະດັບຄອບຄົວ: ພົນລະເມືອງ, ສະພາບການລ້ຽງສັດ, ລາຍຮັບ, ການຄຸ້ມຄອງນຳໃຊ້ທີ່ດິນ ແລະ ການປະກອບອາຊີບຫຼັກຂອງປະຊາຊົນ<br>- ປະເມີນ ແລະ ສ້າງແຜນທີ່ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ໃນປະຈຸບັນ<br>- ສຳຫຼວດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນຢູ່ພາກສະໜາມ<br>- ສຳຫຼວດ ແລະ ເກັບຕົວຢ່າງດິນ<br>- ສັງລວມ, ວິເຄາະຂໍ້ມູນທີ່ເກັບກຳໄດ້, ສ້າງແຜນ ທີ່ CLUFC ແລະ ຂຽນບົດ | 4-5 ວັນ |

| ບາດກ້າວ | ກິດຈະກຳ | ກຳນົດເວລາ |
|---|---|---|
| | ລາຍງານສະບັບຮ່າງ (ວຽກພາກຫ້ອງການ) | |
| 4 | ເປີດກອງປະຊຸມຂັ້ນເມືອງ (ຕົວແທນຂອງບ້ານເປົ້າໝາຍເຂົ້າຮ່ວມ) ເພື່ອຮັບຟັງການລາຍງານຜົນໄດ້ຮັບຈາກການຈັດຕັ້ງປະຕິບັດວຽກບາດກ້າວທີ່ 1 ແລະ 2 ທັງເປັນການປຶກສາຫາລື ເພື່ອດຳເນີນການວາງແຜນຈັດສັນ FLUMZ | 1 ວັນ |
| | - ສ້າງແຜນຈັດສັນ FLUMZ (ລວມທັງການສ້າງກົດລະບຽບທີ່ກ່ຽວຂ້ອງ)<br>- ແຜນຈັດສັນ FLUMZ | 3-4 ວັນ |
| | - ສັງລວມ, ລາຍງານ ແລະ ສ້າງແຜນທີ່ ປະກອບໃສ່ “ປື້ມແຜນຄຸ້ມຄອງການນຳໃຊ້ ເຂດທີ່ດິນກະສິກຳ ແລະ ປ່າໄມ້ ແບບມີສ່ວນຮ່ວມ” (ວຽກຫ້ອງການ)<br>- ຈັດກອງປະຊຸມຂັ້ນເມືອງ ເພື່ອ ຂໍຮັບຮອງເອົາແຜນຈັດສັນ FLUMZ | |
| | - ເປີດກອງປະຊຸມແນະນຳໃຫ້ປະຊາຊົນຂັ້ນບ້ານນຳໃຊ້ແຜນຈັດສັນ FLUMZ | |
| 5 | ສົ່ງເສີມ ແລະ ຕິດຕາມການນຳໃຊ້ທີ່ດິນຕາມແຜນຈັດສັນ FLUMZ | 2-3 ວັນ |

## ຂັ້ນຕອນ 3. ສ້າງຕັ້ງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ

ອະທິບາຍໃຫ້ປະຊາຊົນເຂົ້າໃຈຢ່າງລະອຽດ ແລະ ຈະແຈ້ງດ້ານເງື່ອນໄຂ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ. ອຳນວຍຄວາມສະດວກໃຫ້ປະຊາຊົນຄັດເລືອກ ເອົາຄະນະດັ່ງກ່າວແບບປະຊາທິປະໄຕ. ນຳສະເໜີຜົນການຄັດເລືອກທີ່ມີຄວາມເຫັນດີເປັນເອກະພາບລະຫວ່າງປະຊາຊົນ ແລະ ທີມວິຊາການ ເຖິງ ທ່ານເຈົ້າເມືອງເພື່ອອອກຂໍ້ຕົກລົງຮັບຮອງ (ລາຍລະອຽດດ້ານເນື້ອໃນ ແລະ ວິທີການມີຢູ່ເອກະສານແນບທ້າຍທີ່ I).

## ຂັ້ນຕອນ 4. ເກັບກຳຂໍ້ມູນ ຊັບພະຍາກອນທຳມະຊາດ, ຊີວະນາໆພັນກະສິກຳ ແລະ ທ່າແຮງບົ່ມຊ້ອນຂອງບ້ານ ແບບມີສ່ວນຮ່ວມ

ການເກັບກຳຂໍ້ມູນຢູ່ໃນຂັ້ນຕອນນີ້ແມ່ນມີຄວາມສຳຄັນ ແລະ ຈຳເປັນຕໍ່ວຽກ P-FALUPAM ໂດຍສະເພາະການຮັບປະກັນຄວາມຖືກຕ້ອງ, ເໝາະສົມ ແລະ ສອດຄ່ອງ ກັບແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ, ແລະ ຄວາມຕ້ອງການຂອງປະຊາຊົນໃນການຄ້ຳປະກັນດ້ານສະບຽງອາຫານ ຕິດພັນ ກັບການນຳໃຊ້ທີ່ດິນ ເຂົ້າໃນການຜະລິດກະສິກຳ ແລະ ປ່າໄມ້ໃຫ້ມີປະສິດທິຜົນ ແລະ ມີປະສິດທິພາບດີ.

ສຶກສາ ແລະ ເກັບກຳສະຖິຕິຂໍ້ມູນ (ລວມທັງຂໍ້ມູນທີ່ມີຢູ່ແລ້ວ) ເຊັ່ນ: ແຜນພັດທະນາເສດຖະກິດ-ສັງຄົມຂອງສູນກາງ, ແຂວງ, ເມືອງ ແລະ ບ້ານ ໂດຍແບ່ງອອກເປັນ 2 ລະດັບຄື: 1) ຂໍ້ມູນສະພາບທົ່ວໄປຂັ້ນພື້ນຖານຂອງບ້ານ ຈາກອົງການຈັດຕັ້ງບ້ານ ຫຼື ຄະນະຮັດຜິດຊອບວຽກ P-FALUPAM ຂັ້ນບ້ານ, ແລະ 2) ຂໍ້ມູນດ້ານຊີວະນາໆພັນກະສິກຳ, ສຳມະໂນບັນຫາ/ວິທີການແກ້ໄຂບັນຫາ ແລະ ທ່າແຮງການ

ພັດທະນາຂອງບ້ານຈາກການສຳພາດປະຊາຊົນບັນດາເຜົ່າດ້ວຍການ: ຈັດປະຊຸມໝົດບ້ານ, ສຳພາດເປັນກຸ່ມສະເພາະ (ກຸ່ມຍິງ, ກຸ່ມຊາຍ, ກຸ່ມຊົນເຜົ່າ, ກຸ່ມຜູ້ສູງອາຍຸ, ກຸ່ມຜະລິດ ແລະ ອື່ນໆ) ຕາມຄວາມຕ້ອງການດ້ານຂໍ້ມູນ, ຈຸດພິເສດ, ລັກສະນະທາງສັງຄົມ ແລະ ສິ່ງແວດລ້ອມຕົວຈິງຂອງທ້ອງຖິ່ນດັ່ງລຸ່ມນີ້:

**ຕາຕະລາງ 5. ບັນດາແບບຟອມ ເກັບກຳຂໍ້ມູນ**

| ກິດຈະກຳ ແລະ ແບບຟອມ | ເວລາ | ກຸ່ມເປົ້າໝາຍ |
|---|---|---|
| **ຂໍ້ມູນຊຸດທີ່ 1: ສຳພາດອົງການຈັດຕັ້ງບ້ານ** | | ຄະນະຮັບຜິດຊອບ ວຽກ P-FALUPAM ຂັ້ນບ້ານ |
| ຟອມ 1: ສະພາບທົ່ວໄປຂອງບ້ານ | 30 ນາທີ | |
| ຟອມ 2: ຊີວະນາໆພັນ ກະສິກຳ | 45 ນາທີ | |
| ຟອມ 3: ສະພາບ ແລະ ປະຕິທິນການປູກພືດເສດຖະກິດຕົ້ນຕໍ | 45 ນາທີ | |
| **ຂໍ້ມູນຊຸດທີ່ 2: ສຳພາດ ກຸ່ມຜູ້ຊົມໃຊ້ທີ່ສາມາດໃຫ້ຂໍ້ມູນ** | | ປະມານ 20 ຫາ 30 ຄົນ/ກຸ່ມ (ຍິງ 50% ແລະ ຊາຍ 50%) ເປັນຜູ້ທີ່ ສາມາດ ປະກອບສ່ວນຂໍ້ມູນທີ່ຖືກຕ້ອງ |
| ຟອມ 4: ການເກັບກູ້, ສະພາບ ແລະ ບູລິມະສິດ ເຄື່ອງປ່າຂອງດົງ | 1.5-2 ຊມ | |
| ຟອມ 5: ການເກັບກູ້, ສະພາບ ແລະ ບູລິມະສິດ ໄມ້ | 1.5-2 ຊມ | |
| ຟອມ 6: ສັດປ່າ | 1-2 ຊມ | |
| ຟອມ 7: ສັດນ້ຳ | 1-2 ຊມ | |
| ຟອມ 8: ສຳມະໂນບັນຫາ ແລະ ວິທີການແກ້ໄຂບັນຫາ | 1-2 ຊມ | |
| ຟອມ 9: ເງື່ອນໄຂ ແລະ ທ່າແຮງ ໃນການພັດທະນາຂອງບ້ານ | 1-2 ຊມ | |
| ຟອມ 10: ບັນທຶກ ການສຳຫຼວດຈຸດທີ່ຕັ້ງສຳຄັນທາງພູມີສາດ | | ສຳຫຼວດຕົວຈິງ |
| ຟອມ 11: ບັນທຶກ ການສຳຫຼວດຈຸດອ້າງອີງເຂດຄຸ້ມຄອງບ້ານ | | ສຳຫຼວດຕົວຈິງ |

(ລາຍລະອຽດດ້ານວິທີຈັດຕັ້ງປະຕິບັດມີຢູ່ໃນເອກະສານແນບທ້າຍ)

## ຂັ້ນຕອນ 5. ສ້າງແຜນທີ່ພື້ນຖານພູມີສາດຂອງບ້ານ

ສ້າງແຜນທີ່ພື້ນຖານພູມີສາດຂອງບ້ານ ເພື່ອນຳໃຊ້ເຂົ້າໃນການກຳນົດເຂດຄຸ້ມຄອງຂອງບ້ານ ແລະ ລະຫວ່າງ ບ້ານຕໍ່ບ້ານ ໂດຍສະແດງໃຫ້ເຫັນຈຸດພິເສດດ້ານ 1) ພູມສັນຖານຂອງບ້ານ (ຕົວຢ່າງ: ສາຍນ້ຳ, ຫ້ວຍ, ຈຸດນ້ຳຕົກຕາດ, ຈຸດຖ້ຳ, ຈຸດພູ, ສັນພູ ແລະ ໜ້າຜາ); 2) ເສັ້ນທາງ; 3) ສະຖານທີ່ທາງວັດທະນະທຳ ແລະ ປະຫວັດສາດ; 4) ຫົວງານຊົນລະປະທານ, ຫົວງານນ້ຳລິນ; 5) ດິນປຸກສ້າງ ແລະ ອື່ນໆ. ລາຍລະອຽດຂອງວຽກສ້າງແຜນທີ່ພື້ນຖານພູມີສາດລວມມີດັ່ງຕໍ່ໄປນີ້:

### 1) ອຸປະກອນ/ເຄື່ອງມືວິຊາການ

ອຸປະກອນ/ເຄື່ອງມືວິຊາການ ທີ່ຕ້ອງການລວມມີ: ແຜນທີ່ໂຕໂປ ແລະ ພາບຖ່າຍດາວທຽມ/ທາງອາກາດ, ແຜ່ນໃສ (ສຳລັບປົກເທິງແຜນທີ່ ແລະ ພາບຖ່າຍດາວທຽມ/ທາງອາກາດ ເພື່ອບັນທຶກຂໍ້ມູນ), ບິກ ແລະ ສໍແຕ້ມແຜນທີ່ (ຂະໜາດ 0.5-0.7 ມມ), ເຈ້ຍຕິດນ້ອຍເພື່ອຂຽນຈຸດທີ່ຕັ້ງພູມີສາດຕິດໃສ່ແຜນທີ່, ແລະ ເຄື່ອງຄອມພິວເຕີ, ເຄື່ອງສາຍແອວຊີດີ (LCD) ແລະ ອື່ນໆ

### 2) ຜູ້ເຂົ້າຮ່ວມ

ຜູ້ເຂົ້າຮ່ວມຕ້ອງເປັນຜູ້ມີຄວາມຮູ້ ແລະ ຄວາມສາມາດໃນການແປພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ແລະ ແຜນທີ່ໂຕໂປກ່ຽວກັບການນໍາໃຊ້ທີ່ດິນ ຫຼື ຄວາມປົກຫຸ້ມຂອງປ່າໄມ້, ສາຍນໍ້າ, ເສັ້ນທາງ, ສັນພູ, ຈອມພູ ແລະ ສັນຍາລັກອື່ນ. ປະຊາຊົນ ຜູ້ທີ່ຈະເຂົ້າຮ່ວມເຮັດວຽກກັບທີມສ້າງແຜນທີ່ຕ້ອງເປັນບຸກຄົນທີ່ມີຄວາມຮູ້ດ້ານປະຫັວດຄວາມເປັນມາ, ສະພາບຈຸດພິເສດ, ພື້ນທີ່, ທີ່ຕັ້ງ ແລະ ຊື່ຂອງຈຸດທີ່ຕັ້ງສໍາຄັນອື່ນໆຂອງບ້ານໃນລະດັບດີ.

### 3) ວິທີການຈັດຕັ້ງປະຕິບັດ

ທີມງານວິຊາການ ແລະ ປະຊາຊົນຮ່ວມກັນດໍາເນີນກິດຈະກໍາສ້າງແຜນທີ່ພື້ນຖານພູມີສາດຂອງບ້ານໂດຍໃຊ້ເວລາຕໍ່າສຸດປະມານ 2 ວັນຕໍ່ບ້ານດັ່ງລຸ່ມນີ້:

**ຕາຕະລາງ 6.ກິດຈະກໍາສ້າງແຜນທີ່ພື້ນຖານພູມີສາດ ຂອງບ້ານ**

| ກິດຈະກໍາ | ຫົວຂໍ້ ແລະ ເນື້ອໃນກິດຈະກໍາ | ເວລາ |
|---|---|---|
| 1. | **ແຜນທີ່ພາບຖ່າຍດາວທຽມ ແລະ ແຜນທີ່ໂຕໂປ:** ນໍາສະເໜີ ຂໍ້ມູນແຜນທີ່ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ແລະ ແຜນທີ່ໂຕໂປ | 30ນາທີ + |
| 2. | **ມາດຖານ ແລະ ເງື່ອນໄຂ ຂອງປະຊາຊົນຜູ້ເຂົ້າຮ່ວມ**<br>- ຫ້າວຫັນ ແລະ ຕັ້ງໃຈປະກອບສ່ວນເຂົ້າໃນການປະຕິບັດວຽກລວມ<br>- ເຂົ້າໃຈກ່ຽວກັບສະພາບພື້ນທີ່ຂອງບ້ານໄດ້ດີ<br>- ສາມາດບອກຈຸດທີ່ສໍາຄັນ ຢູ່ໃນ ແຜນທີ່ (ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ແລະ ແຜນທີ່ໂຕໂປ) | 30 ນາທີ + |
| 3. | **ການກໍານົດຈຸດອ້າງອີງລົງໃສ່ແຜນທີ່**<br>- ຊື່ສາຍນໍ້າ ແລະ ສາຍນໍ້າ (ຫ້ວຍນໍ້າ)<br>- ເສັ້ນທາງຫຼັກ ແລະ ທາງຍ່າງ (ທາງຮ່ອມ)<br>- ຈຸດພູ, ສັນພູ, ໜ້າຜາ<br>- ຊື່ ແລະ ຈຸດທີ່ຕັ້ງ ຫຼື ທີ່ພັກເພື່ອລ້ຽງສັດຫຼື ຈຸດສວນປູກຝັງ ແລະ ລ້ຽງສັດ<br>- ຊື່ຈຸດທີ່ຕັ້ງສໍາຄັນອື່ນໆ | ເຄິ່ງມື້ |
| 4. | **ສໍາຫຼວດພື້ນທີ່ຕົວຈິງພາກສະໜາມ:** ທີມງານ ແລະ ປະຊາຊົນລົງສໍາຫຼວດພື້ນທີ່ຕົວຈິງຢູ່ພາກສະໜາມ ເພື່ອກວດເບິ່ງຄວາມຖືກຕ້ອງດ້ານຂໍ້ມູນທີ່ໄດ້ຈາກແຜນທີ່ ແລະ ສໍາພາດປະຊາຊົນທຸກຊົນເຜົ່າ. ໃນເວລາສໍາຫຼວດພື້ນທີ່ຕົວຈິງ, ນໍາໃຊ້ເຄື່ອງ GPS ຈັບຈຸດພິກັດ ແລະ ເກັບກໍາຂໍ້ມູນທີ່ຕ້ອງການເພີ່ມ ເພື່ອ ຢັ້ງຢືນຄວາມຖືກຕ້ອງດ້ານຂໍ້ມູນທີ່ຍັງບໍ່ທັນຊັດເຈນ | 1 - 2 ມື້ |
| 5. | **ການປັບປຸງແຜນທີ່ພື້ນຖານພູມີສາດຂອງບ້ານ:** ທີມງານວິຊາການສັງລວມ ແລະ | ເຄິ່ງມື້ |

| ກິດຈະກຳ | ຫົວຂໍ້ ແລະ ເນື້ອໃນກິດຈະກຳ | ເວລາ |
|---|---|---|
| | ນຳໃຊ້ ຂໍ້ມູນທັງໝົດ ທີ່ໄດ້ຈາກການສຳຫຼວດຕົວຈິງຢູ່ພາກສະໜາມເພື່ອປັບປຸງ ແຜນທີ່ພື້ນຖານພູມີສາດຂອງບ້ານ | |
| 6. | **ເປີດກອງປະຊຸມ ເພື່ອຮັບຮອງເອົາ ແຜນທີ່ພື້ນຖານພູມີສາດຂອງບ້ານ:** ນຳສະເໜີ ແຜນທີ່ພື້ນຖານພູມີສາດຂອງບ້ານ ໃຫ້ປະຊາຊົນ ຮັບຮູ້ ແລະ ຮັບຮອງ | 1 ຊົ່ວໂມງ |
| | ລວມ: | 2+ ມື້ |

## ຂັ້ນຕອນ 6. ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ

ອີງໃສ່ຂໍ້ມູນທີ່ມີຢູ່ແລ້ວ ລວມທັງ ບົດເລົ່າ/ບົດບັນທຶກເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ເພື່ອກຳນົດ ແລະ ແຕ້ມຂອບເຂດຄຸ້ມຄອງຂອງບ້ານ (ຊາຍແດນບ້ານ) ມີລາຍລະອຽດດັ່ງລຸ່ມນີ້:

**ຕາຕະລາງ 7. ກິດຈະກຳ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ**

| **ກິດຈະກຳ** | **ລາຍລະອຽດ** | **ເວລາ** |
|---|---|---|
| 1. | **<u>ອະທິບາຍໃຫ້ປະຊາຊົນເຂົ້າໃຈ</u>**<br>ອະທິບາຍໃຫ້ປະຊາຊົນເຂົ້າໃຈກ່ຽວກັບ ແຜນທີ່ພື້ນຖານພູມີສາດຂອງບ້ານ ແລະ ການກຳນົດຂອບເຂດຄຸ້ມຄອງຂອງບ້ານ | 20 ນາທີ |
| 2. | **<u>ການກຳນົດຂອບເຂດຄຸ້ມຄອງຂອງບ້ານເບື້ອງຕົ້ນ</u>**<br>- ກວດຄືນຂໍ້ມູນ ຫຼື ບົດບັນທຶກເຂດຄຸ້ມຄອງບ້ານທີ່ມີ (ອາດເປັນບົດເລົ່າ ຫຼື ບົດບັນທຶກຂໍ້ຕົກລົງດ້ານຂອບເຂດຄຸ້ມຄອງບ້ານ) ແລະ ຖ້າເປັນໄປໄດ້, ເຮັດສຳເນົາເກັບໄວ້ (ກໍລະນີທີ່ບໍ່ມີບົດບັນທຶກ ຫຼື ແຜນທີ່ຂອບເຂດຄຸ້ມຄອງບ້ານ<br>- ສະເໜີໃຫ້ປະຊາຊົນອະທິບາຍລາຍລະອຽດກ່ຽວກັບຂອບເຂດຄຸ້ມຄອງຂອງບ້ານທີ່ຕິດຈອດກັບບ້ານອ້ອມຂ້າງຕາມຄວາມຮູ້, ຄວາມເຂົ້າໃຈຂອງເຂົາເຈົ້າ, ທີມງານວິຊາການບັນທຶກຂໍ້ມູນຈາກການເລົ່າເປັນບົດເລົ່າຂອບເຂດຄຸ້ມຄອງບ້ານ (ຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ)ໃສ່ເຈ້ຍ, ລະບຸຕຳແໜ່ງແຕ່ລະຈຸດທີ່ຕັ້ງທາງພູມີສາດລົງໃສ່ແຜນທີ່ ແລະ "ແຕ້ມ" ເສັ້ນຂອບເຂດຄຸ້ມຄອງບ້ານຈາກຈຸດໜຶ່ງໄປຫາອີກຈຸດໜຶ່ງຕາມການບອກເລົ່າຂອງປະຊາຊົນ. | 2-3 ຊົ່ວໂມງ |
| 3. | **<u>ປຶກສາຫາລືກັບບ້ານອ້ອມຂ້າງເພື່ອຄວາມເຫັນດີເປັນເອກະພາບ ແລະ ຮ່າງບົດບັນທຶກກ່ຽວກັບການກຳນົດເຂດຄຸ້ມຄອງຂອງບ້ານ</u>**<br>1) ອຳນາດການປົກຄອງທ້ອງຖິ່ນ (ເມືອງ ຫຼື ກຸ່ມບ້ານ) ແຈ້ງເຊີນ ຜູ້ຕາງໜ້າຈາກບັນດາບ້ານອ້ອມຂ້າງເຂົ້າຮ່ວມປະຊຸມ,<br>2) ເປີດກອງປະຊຸມ ປຶກສາຫາລື ກ່ຽວກັບການກຳນົດຂອບເຂດຄຸ້ມຄອງບ້ານ (ຕົວແທນຂອງຫ້ອງການພັກກຸ່ມ ແລະ ຫ້ອງການພາຍໃນຂອງເມືອງເຂົ້າຮ່ວມ), | >1 ຊົ່ວໂມງ |

| ກິດຈະກຳ | ລາຍລະອຽດ | ເວລາ |
|---|---|---|
| | 3) ຫົວໜ້າຫ້ອງການພັກກຸ່ມ ສະເໜີຈຸດປະສົງກອງປະຊຸມ, ບ້ານເຈົ້າພາບ ແລະ ທີມງານ P-FALUPAM ສະເໜີແຜນທີ່ ແລະ ອ່ານເນື້ອໃນ (ບົດເລົ່າ) ຂອບເຂດຄຸ້ມຄອງບ້ານ ໃຫ້ຜູ້ເຂົ້າຮ່ວມກອງກອງປະຊຸມ ໄດ້ຮັບຮູ້,<br>4) ຕົວແທນຂອງບ້ານອ້ອມຂ້າງ ປະກອບຄຳເຫັນໃສ່ບົດເລົ່າ ຫຼື ຮ່າງບົດບັນທຶກ ກ່ຽວກັບການກຳນົດເຂດຄຸ້ມຄອງຂອງບ້ານ (ຖ້າມີ)<br>- ກໍລະນີບ້ານເຈົ້າພາບ ແລະ ໜຶ່ງ ຫຼື ຫຼາຍກ່ວາໜຶ່ງບ້ານອ້ອມຂ້າງໄດ້ຕົກລົງເປັນເອກະພາບກ່ຽວກັບເຂດຄຸ້ມຄອງບ້ານທີ່ບ້ານເຈົ້າພາບໄດ້ນຳສະເໜີແລ້ວ ໃຫ້ສ້າງຮ່າງບົດບັນທຶກຂອບເຂດຄຸ້ມຄອງລະຫ່ວາງບ້ານຕໍ່ບ້ານ,<br>- ຖ້າມີຂໍ້ສະເໜີໃຫ້ດັດແກ້ ຫຼື ປັບປຸງຈຸດເຂດຄຸ້ມຄອງ, ແມ່ນໃຫ້ປັບປຸງ ຫຼື ດັດແປງຈຸດດັ່ງກ່າວຕາມການສະເໜີ, ຕົກລົງ ແລະ ເຫັນດີຢ່າງເປັນເອກະພາບຂອງທຸກຝ່າຍທີ່ກ່ຽວຂ້ອງ,<br>- ກໍລະນີບໍ່ສາມາດຕົກລົງ ຫຼື ເຫັນດີເປັນເອກະພາບ ກ່ຽວກັບເຂດຄຸ້ມຄອງບ້ານໃນບາງຈຸດ ຫຼື ບາງເຂດ ຍ້ອນເຫດຜົນຕ່າງໆເຊັ່ນ: ຈຸດບໍ່ຈະແຈ້ງຢູ່ແຜນທີ່ ຫຼື ຈຸດມີຂໍ້ຂັດແຍ່ງ, ໃຫ້ບັນທຶກ ຫຼື ໝາຍຈຸດດັ່ງກ່າວໃສ່ເທິງແຜນທີ່ແລ້ວ ລົງໄປສຳຫຼວດຕົວຈິງຢູ່ພາກສະໜາມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ.<br><br>***<u>ໝາຍເຫດ:</u>***<br>*ຖ້າຫາກຍັງບໍ່ສາມາດຕົກລົງ ເປັນເອກະພາບກ່ຽວກັບເຂດຄຸ້ມຄອງບ້ານແມ່ນໃຫ້ລາຍງານ/ສະເໜີຫາ ຄະນະຊີ້ນຳວຽກ P-FALUPAM ຂັ້ນເມືອງ ແລະ ຂັ້ນແຂວງ (ຖ້າຈຳເປັນ) ເພື່ອຊ່ວຍພິຈາລະນາຫາທາງແກ້ໄຂ* | |
| 4. | **ການລົງສຳຫຼວດຕົວຈິງພາກສະໜາມ ກ່ຽວກັບເຂດຄຸ້ມຄອງລະຫວ່າງ ບ້ານ ຕໍ່ ບ້ານ**<br>- ທີມງານ, ຕົວແທນຈາກບ້ານເຈົ້າພາບ ແລະ ບ້ານອ້ອມຂ້າງພ້ອມກັນສຳຫຼວດພື້ນທີ່ຕົວຈິງຢູ່ພາກສະໜາມ ກ່ຽວກັບເຂດຄຸ້ມຄອງຂອງບ້ານ ໂດຍສະເພາະຈຸດທີ່ຍັງບໍ່ທັນເຫັນດີເປັນເອກະພາບ, ຈຸດທີ່ບໍ່ຊັດເຈນ ຫຼື ບໍ່ເຫັນຈະແຈ້ງຢູ່ແຜນທີ່.<br>- ບັນທຶກຂໍ້ມູນຈາກການສຳຫຼວດ ແລະ ຂໍ້ມູນຈາກການຈັບຈຸດ GPS.<br><br>***ໝາຍເຫດ:***<br>*ກໍລະນີບ້ານຕົກລົງເຫັນດີເປັນເອກະພາບ ກ່ຽວກັບເຂດຄຸ້ມຄອງ ລະຫ່ວາງບ້ານ ຕໍ່ບ້ານ, ເວລາສຳຫຼວດພື້ນທີ່ຕົວຈິງ ໃຫ້ຕິດປ້າຍໃສ່ຈຸດທີ່ມີລັກສະນະສຳຄັນ ຫຼື ໂດດເດັ່ນ (ຖ້າເຫັນ) ແລະ ເສັ້ນທາງຄຸ້ມຄອງລະຫວ່າງບ້ານເພື່ອສະແດງໃຫ້ເຫັນເຂດຄຸ້ມຄອງບ້ານແບບຊົ່ວຄາວ.* | 1 – 2 ວັນ |

| ກິດຈະກຳ | ລາຍລະອຽດ | ເວລາ |
|---|---|---|
| 5. | **ປັບປຸງແຜນທີ່ ແລະ ຮ່າງບົດບັນທຶກເຂດຄຸ້ມຄອງ ລະຫວ່າງ ບ້ານຕໍ່ບ້ານ**<br>ຫຼັງຈາກສຳຫຼວດຕົວຈິງຢູ່ພາກສະໜາມ, ປັບປຸງ ແລະ ດັດແກ້ຂອບເຂດຄຸ້ມຄອງບ້ານໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມຜົນການລົງສຳຫຼວດພື້ນທີ່ຕົວຈິງ. ຜູ້ຮັບຜິດຊອບວຽກ GIS (ທຸກຂັ້ນ) ຮັບຜິດຊອບ ບັນທຶກ ແລະ ເກັບຮັກສາຂໍ້ມູນທັງໝົດທີ່ເກັບກຳໄດ້ຈາກພາກສະໜາມໄວ້ໃນລະບົບຄອມພິວເຕີ ເພື່ອນຳໃຊ້ເຂົ້າໃນການແຕ້ມແຜນທີ່ຂອບເຂດຄຸ້ມຄອງບ້ານ ໂດຍການນຳໃຊ້ໂປແກຼມທາງ GIS. | 2-3 ຊົ່ວໂມງ |
| 6. | **ຈັດກອງປະຊຸມຂັ້ນບ້ານ ເພື່ອນຳສະເໜີ ຜົນການກຳນົດເຂດຄຸ້ມຄອງ ລະຫ່ວາງ ບ້ານຕໍ່ບ້ານ**<br>ນຳສະເໜີ ແລະ ອະທິບາຍ ຜົນການປັບປຸງການກຳນົດເຂດຄຸ້ມຄອງລະຫ່ວາງບ້ານຕໍ່ບ້ານໃຫ້ອົງການຈັດຕັ້ງບ້ານ, ປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານເຈົ້າພາບ ແລະ ບ້ານອ້ອມຂ້າງຮັບຮູ້, ຢັ້ງຢືນຄວາມຖືກຕ້ອງ ແລະ ຮັບຮອງ | 1 ຊົ່ວໂມງ |
| 7. | **ສະເໜີ ຂໍໃຫ້ທ່ານເຈົ້າເມືອງອອກຂໍ້ຕົກລົງ ຮັບຮອງເອົາບົດບັນທຶກເຂດຄຸ້ມຄອງຂອງບ້ານ**<br>1) ຫຼັງຈາກ ບ້ານເປົ້າໝາຍຮັບຮອງເອົາ ບົດບັນທຶກເຂດຄຸ້ມຄອງລະຫ່ວາງບ້ານ, ນຳສະເໜີຫາທ່ານເຈົ້າເມືອງໂດຍຜ່ານອົງການຈັດຕັ້ງທີ່ກ່ຽວຂ້ອງເຊັ່ນ: ຫ້ອງການປົກຄອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະສິກຳ-ປ່າໄມ້, ແລະ ພາຍໃນ ເພື່ອຮັບຮອງເອົາບົດບັນທຶກ.<br>2) ແຈກຢາຍບົດບັນທຶກ (ສະບັບຮັບຮອງ) ໃຫ້ຂັ້ນບ້ານ ແລະ ເມືອງ:<br>- ໃຫ້ບ້ານເປົ້າໝາຍ ຕົ້ນສະບັບ (1 ສະບັບ)<br>- ບ້ານອ້ອມຂ້າງ (1 ສະບັບ/ບ້ານ)<br>- ຫ້ອງການພາຍໃນ (1 ສະບັບ)<br>- ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (1 ສະບັບ)<br>- ຮັກສາສະບັບສຳເນົາ ໄວ້ຢູ່ ຫ້ອງການກະສິກຳ-ປ່າໄມ້ (1 ສະບັບ) | |

## ບາດກ້າວທີ່ 3: ສ້າງແຜນທີ່ການນຳໃຊ້ທີ່ດິນ, ເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ປະເມີນຄວາມອຸດົມສົມບູນຂອງດິນ (ວຽກພາກສະໜາມ ຮອບ 2)

### ຂັ້ນຕອນ 1. ສ້າງແຜນທີ່ ການນຳໃຊ້ທີ່ດິນກະສິກຳ ແລະ ຄວາມປົກຫຸ້ມຂອງປ່າໄມ້ ໃນປະຈຸບັນ (CLUFC)

ນຳໃຊ້ຂໍ້ມູນທີ່ມີຢູ່ແລ້ວ ເຊັ່ນ: ແຜນທີ່ພາບຖ່າຍ, ແຜນທີ່ອື່ນ (ທີ່ມີຢູ່ແລ້ວ) ລວມທັງແຜນທີ່ຈາກການແບ່ງດິນ-ແບ່ງປ່າ, ແຜນທີ່ພື້ນຖານພູມີສາດ, ແຜນທີ່ຂອບເຂດຄຸ້ມຄອງບ້ານ ແລະ ຂໍ້ມູນການຄອບຄອງທີ່ດິນ ເພື່ອສ້າງແຜນທີ່ CLUFC ໃນນີ້ຕ້ອງໄດ້ປະເມີນທີ່ດິນແຕ່ລະປະເພດ, ສຳຫຼວດພື້ນທີ່ຕົວຈິງຢູ່ພາກສະໜາມ ຮ່ວມກັບທຸກພາກສ່ວນກ່ຽວຂ້ອງ ແລະ ນຳໃຊ້ຂໍ້ມູນທີ່ເກັບກຳໄດ້ປັບປຸງແຜນທີ່ CLUFC. ລາຍມີລະອຽດຄື:

1. **ປະເມີນການນຳໃຊ້ທີ່ດິນຮ່ວມກັບປະຊາຊົນ**

ເພື່ອໃຫ້ປະຊາຊົນຮັບຮູ້, ເຂົ້າຮ່ວມ ແລະ ເປັນເຈົ້າໃນການປະເມີນທີ່ດິນແຕ່ລະປະເພດ ທີມງານອະທິບາຍຈຸດປະສົງ, ເຫດຜົນ, ຄວາມສຳຄັນຂອງການສ້າງແຜນທີ່, ຂໍ້ມູນການນຳໃຊ້ທີ່ດິນກະສິກຳ ແລະ ຄວາມປົກຫຸ້ມປ່າໄມ້ໃນປະຈຸບັນຂອງບ້ານ, ໜ້າວຽກ ຫຼື ກິດຈະກຳທີ່ຈະໄດ້ຈັດຕັ້ງປະຕິບັດຮ່ວມກັນດັ່ງລຸ່ມນີ້:

1) **ການປະເມີນປະເພດທີ່ດິນປ່າໄມ້**

ປະຊາຊົນອະທິບາຍກ່ຽວກັບພື້ນທີ່ດິນປ່າໄມ້ທີ່ບໍ່ເຄີຍຖືກຖາງມາກ່ອນ (ອາດມີບາງພື້ນທີ່ເຄີຍຖືກຖາງໃນໄລຍະເວລາຫຼາຍປີແລ້ວ) ແຕ່ບ້ານມີຈຸດປະສົງສືບຕໍ່ຮັກສາໃຫ້ເປັນພື້ນທີ່ປ່າໄມ້ໃນອານາຄົດ. ໃນກໍລະນີນີ້, ໃຫ້ກຳນົດເຂດພື້ນທີ່ດັ່ງກ່າວເປັນ "ເຂດພື້ນທີ່ປ່າໄມ້ທີ່ບໍ່ເຄີຍຖືກຖາງ" ແລະ ແຕ້ມແຕ່ລະຂອບເຂດພື້ນທີ່ປ່າໄມ້ດັ່ງກ່າວນັ້ນລົງໃນແຜນທີ່ພາບຖ່າຍ. ປະຊາຊົນອະທິບາຍ ກ່ຽວກັບພື້ນທີ່ດິນປ່າໄມ້ປະເພດອື່ນໆທີ່ມີຢູ່ໃນປະຈຸບັນ ລວມທັງພື້ນທີ່ປ່າໄມ້ ທີ່ສາມາດແປຈາກພາບຖ່າຍ ແລະ ແຕ້ມແຕ່ລະຂອບເຂດພື້ນທີ່ປ່າໄມ້ດັ່ງກ່າວລົງໃສ່ເທິງແຜນທີ່ພາບຖ່າຍ.

2) **ການປະເມີນພື້ນທີ່ດິນປູກໄມ້ອຸດສາຫະກຳ**

ປະຊາຊົນລະບຸເຂດພື້ນທີ່ດິນປູກໄມ້ອຸດສາຫະກຳແຕ່ລະປະເພດຂອງປະຊາຊົນ ແລະ ບໍລິສັດ (ສຳປະທານ) ທີ່ນອນຢູ່ໃນເຂດຄຸ້ມຄອງຂອງບ້ານ ແລະ ນຳໃຊ້ຂໍ້ມູນຈາກການສຳພາດປະຊາຊົນແຕ້ມ ຫຼື ໝາຍເຂດປູກໄມ້ອຸດສາຫະກຳ, ຊື່ເຈົ້າຂອງ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ ໂດຍນຳໃຊ້ເຂັມມຸດປັກໝາຍຈຸດໃສ່ແຜນທີ່ພາບຖ່າຍດາວທຽມ

3) **ການປະເມີນປະເພດທີ່ດິນກະສິກຳ**

ປະຊາຊົນອະທິບາຍກ່ຽວກັບພື້ນທີ່ດິນກະສິກຳແຕ່ລະປະເພດຢູ່ໃນເຂດຄຸ້ມຄອງຂອງບ້ານ: ປະເມີນພື້ນທີ່ດິນກະສິກຳຄົງທີ່ (ທົ່ງນາ, ສວນ, ອື່ນໆ) ທີ່ສາມາດເຫັນຈາກການແປພາບຖ່າຍດາວທຽມ, ບັນທຶກ ແລະ ຂຽນລາຍຊື່ຂອງພື້ນທີ່ດິນກະສິກຳ ດັ່ງກ່າວ ຕິດໃສ່ເທິງແຜນທີ່ພາບຖ່າຍ

ຫລັງຈາກນີ້ ປະເມີນພື້ນທີ່ດິນກະສິກຳເນີນສູງ (ຕົວຢ່າງ: ໄຮ່, ສວນ ແລະ ອື່ນໆ) ທີ່ສາມາດເຫັນຈາກການແປພາບຖ່າຍດາວທຽມ, ແຕ້ມ ແລະ ຂຽນລາຍຊື່ຂອງບັນດາພື້ນທີ່ດິນກະສິກຳເນີນສູງຕິດໃສ່ເທິງແຜນທີ່ພາບຖ່າຍ (ໃຊ້ເຂັມມຸດປັກໝາຍຈຸດເຮັດໄຮ່ຂອງແຕ່ລະຄອບຄົວ ພ້ອມຂຽນລາຍຊື່ເຈົ້າຂອງໄຮ່/ຜູ້ເຮັດໄຮ່ ລົງໃສ່ຈຸດດິນເຮັດໄຮ່ແຕ່ລະຕອນຢ່າງໜ້ອຍ 2 ປີໃສ່ແຜນທີ່ພາບຖ່າຍ). ພາຍຫລັງສຳເລັດການປະເມີນປະເພດທີ່ດິນກະສິກຳແລ້ວ, ກວດຄືນຂໍ້ມູນການນຳໃຊ້ທີ່ດິນກະສິກຳຂອງຄອບຄົວ ແລະ ບັນທຶກໃສ່ແບບຟອມຂໍ້ມູນການຄອບຄອງທີ່ດິນຂອງຄອບຄົວ ໂດຍສົມທຽບກັບເອກະສານຢັ້ງຢືນການນຳໃຊ້ ຫຼື ການພັດທະນາທີ່ດິນ ແລະ ປຶ້ມສຳມະໂນທີ່ດິນ (ຖ້າມີ).

4) **ການປະເມີນພື້ນທີ່ດິນປະເພດອື່ນໆ**

ນອກຈາກເຂດດິນກະສິກຳ ແລະ ປ່າໄມ້, ໃຫ້ປະຊາຊົນລະບຸເຂດ ແລະ ທີ່ດິນນຳໃຊ້ປະເພດອື່ນຢູ່ພາຍໃນບ້ານ, ແຕ້ມ ແລະ ຂຽນຊື່ແຕ່ລະປະເພດທີ່ດິນດັ່ງກ່າວໃສ່ແຜນທີ່ພາບຖ່າຍດາວທຽມ.

### 2. ການລົງສຳຫຼວດພື້ນທີ່ຢູ່ພາກສະໜາມ

ທີມງານສັງລວມບັນດາພື້ນທີ່ ການນຳໃຊ້ຕອນດິນທີ່ຍັງບໍ່ທັນຈະແຈ້ງ ຫຼື ບໍ່ສາມາດກຳນົດ ຫຼື ບໍ່ສາມາດແຕ້ມໄດ້ໃສ່ແຜນທີ່ພາບຖ່າຍດາວທຽມ ແລ້ວຈິ່ງລົງສຳຫຼວດພື້ນທີ່ຕົວຈິງຮ່ວມກັບປະຊາຊົນພ້ອມທັງບັນທຶກຂໍ້ມູນນັ້ນໃສ່ເທິງແຜນທີ່, ແບບຟອມ ແລະ ຖ່າຍຮູບ ຫຼື ບັນທຶກພາບໄວ້ເປັນຫຼັກຖານ.

### 3. ການປັບປຸງແຜນທີ່ການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມປ່າໄມ້ ໃນປະຈຸບັນ

ພາຍຫຼັງສຳເລັດການລົງສຳຫຼວດຕົວຈິງພາກສະໜາມ, ປັບປຸງຂໍ້ມູນ ແລະ ແຜນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ໃນປັດຈຸບັນໃຫ້ມີຄວາມຖືກຕ້ອງ ແລ້ວ ບັນທຶກໄວ້ໃນລະບົບຖານຂໍ້ມູນ GIS.

## ຂັ້ນຕອນ 2. ເກັບກຳຂໍ້ມູນ ລະດັບຄອບຄົວ

ການເກັບກຳຂໍ້ມູນລະດັບຄອບຄົວ ແມ່ນມີຄວາມສຳຄັນ ຕໍ່ວຽກ P-FALUPAM ໂດຍສະເພາະ ການຮັບປະກັນຄວາມສອດຄ່ອງກັນລະຫ່ວາງແຜນຈັດສັນ FLUMZ, ທ່າແຮງດ້ານການພັດທະນາ ແລະ ຄວາມຕ້ອງການດ້ານສະບຽງອາຫານເພື່ອຮັບໃຊ້ຄອບຄົວ ສາມາດກ້າວໄປສູ່ການຜະລິດເປັນສິນຄ້າ ເພື່ອປ້ອນຕະຫຼາດ. ການເກັບກຳຂໍ້ມູນລະດັບຄອບຄົວປະກອບມີ 3 ເນື້ອໃນຫຼັກຄື: ພົນລະເມືອງ, ຄວາມຕ້ອງການເຂົ້າກິນ ແລະ ສັດລ້ຽງ; ລາຍຮັບ; ແລະ ການຄອບຄອງທີ່ດິນ (ລາຍລະອຽດ ກ່ຽວກັບວິທີເກັບກຳຂໍ້ມູນລະດັບຄອບຄົວແມ່ນມີຢູ່ໃນເອກະສານແບບທ້າຍ II).

## ຂັ້ນຕອນ 3. ການສຳຫຼວດ ແລະ ເກັບຕົວຢ່າງດິນໃນເຂດການຜະລິດກະສິກຳຂອງບ້ານ

ການສຳຫຼວດ ແລະ ເກັບຕົວຢ່າງດິນ ຢູ່ພາກສະໜາມ ແມ່ນວຽກໜຶ່ງທີ່ມີຄວາມຈຳເປັນ ແລະ ສຳຄັນ ຕໍ່ການປະເມີນຄວາມເໝາະສົມຂອງດິນຕໍ່ພືດປູກ ເຊິ່ງ ເປັນຂໍ້ມູນພື້ນຖານທາງດ້ານວິທະຍາສາດທີ່ສາມາດນຳໃຊ້ເຂົ້າໃນການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ກໍ່ຄື ການຄຸ້ມຄອງ ແລະ ພັດທະນາທີ່ດິນ

ກະສິກຳ ໃຫ້ຖືກກັບທ່າແຮງທາງດ້ານກາຍຍະພາບ ແລະ ເງື່ອນໄຂຕົວຈິງຂອງດິນແຕ່ລະຂົງເຂດ ແນໃສ່ການນຳໃຊ້ທີ່ດິນໃຫ້ເກີດປະໂຫຍດສູງສຸດແບບຍືນຍົງ. ການສຳຫຼວດ ແລະ ເກັບຕົວຢ່າງດິນພາກສະໜາມມີ: 1) ການສຳຫຼວດ ແລະ ເກັບຕົວຢ່າງດິນແບບລະອຽດມີສອງລັກສະນະ ແລະ 2) ການສຳຫຼວດ ແລະ ວິໄຈດິນໂດຍການນຳໃຊ້ ເຄື່ອງມື Soil Test Kit ດັ່ງລຸ່ມນີ້:

1. **ການສຳຫຼວດ ແລະ ເກັບຕົວຢ່າງດິນແບບລະອຽດ**

ການສຳຫຼວດ ແລະ ເກັບຕົວຢ່າງດິນແບບລະອຽດມີ 2 ລັກສະນະຄື: 1) ຂຸມດິນພື້ນຖານ (Profile) ຂະໜາດຂອງຂຸມກ້ວາງປະມານ 80 ຊມ, ຍາວ 150 ຊມ, ເລິກ 120-150 ຊມ ແຕ່ລະຂຸມທີ່ຂຸດຕ້ອງໄດ້ບັນທຶກຮູບປະພັນຂອງໜ້າຕັດດິນ, ຂີດແບ່ງຊັ້ນດິນ, ສັງເກດ ແລະ ບັນທຶກປະກົດການຕ່າງໆທີ່ພົບເຫັນໃນດິນ ແລະ ເກັບຕົວຢ່າງດິນ ຂອງແຕ່ລະຊັ້ນດິນທີ່ພົບເຫັນໃນຂຸມດິນຢູ່ລະຫວ່າງ 2-5 ຕົວຢ່າງຕໍ່ຂຸມ (ອີງຕາມພື້ນທີ່ ແລະ ລັກສະນະຂອງຂຸມດິນ) ມາວິໄຈ ແລະ 2) ຂຸມດິນກວດກາ (Auger) ໂດຍນຳໃຊ້ເຄື່ອງມືເຈາະເອົາດິນເລິກປະມານ 120-150 ຊມ ໂດຍສະເລ່ຍປະມານ 4-5 ຂຸມດິນກວດກາຕໍ່ 1 ຂຸມດິນພື້ນຖານ ເພື່ອຊອກຫາຂອບເຂດການກະຈາຍຂອງດິນແຕ່ລະປະເພດທີ່ມີຄວາມແຕກຕ່າງກັນໂດຍມີການບັນທຶກຮູບປະພັນຂອງດິນ ແລະ ປະກົດການຕ່າງໆ ທີ່ພົບເຫັນໃນຂຸມດິນຄືກັນກັບຂຸມດິນພື້ນຖານ ແລະ ຄວນເກັບເອົາຢ່າງໜ້ອຍ 1-2 ດິນຕົວຢ່າງຈາກຄວາມເລິກລະຫ່ວາງ 0-50 ຊັງຕີແມັດ ເພື່ອການວິໄຈ, ຊ່ວຍແບ່ງຂອບເຂດ ແລະ ຄວາມອຸດົມສົມບູນຂອງດິນ.

2. **ການສຳຫຼວດ ແລະ ວິໄຈດິນໂດຍການນຳໃຊ້ ເຄື່ອງມື** Soil Test Kit

ການກຳນົດ ຫຼື ເກັບຕົວຢ່າງດິນແບບກະຈາຍທົ່ວພື້ນທີ່ ເຊິ່ງການສຸ່ມເກັບຕົວຢ່າງດິນຖີ່ເທົ່າໃດກໍ່ຈະໄດ້ຕົວຢ່າງດິນທີ່ເປັນຕົວແທນດີຂຶ້ນເທົ່ານັ້ນ (ລາຍລະອຽດແມ່ນມີເອກະສານສະເພາະ)

## ຂັ້ນຕອນ 4. ການສັງລວມ, ວິເຄາະຂໍ້ມູນເສດຖະກິດ-ສັງຄົມ ແລະ ແຜນທີ່

ຫຼັງຈາກສຳເລັດການເກັບກຳຂໍ້ມູນ ຊີວະນາໆພັນກະສິກຳ, ເສດຖະກິດ-ສັງຄົມ, ທີ່ດິນ ແລະ ແຜນທີ່ການນຳໃຊ້ທີ່ດິນກະສິກຳ ແລະ ຄວາມປົກຫຸ້ມປ່າໄມ້ໃນປະຈຸບັນ (CLUFC) ຫຼື ວຖກ (ຮອບ 1 ແລະ 2) ຢູ່ຂັ້ນບ້ານ, ສັງລວມ ແລະ ບັນທຶກຂໍ້ມູນໃສ່ແບບຟອມຢູ່ໃນລະບົບຖານຂໍ້ມູນ (ຄອມພິວເຕີ) ແລ້ວ ວິເຄາະຂໍ້ມູນບາງດ້ານທີ່ສຳຄັນ ແລະ ຈຳເປັນຕໍ່ການວາງແຜນຈັດສັນ FLUMZ. ຂໍ້ມູນ ທີ່ຕ້ອງໄດ້ວິເຄາະລວມມີຂໍ້ມູນກ່ຽວກັບສະພາບ ແລະ ການນຳໃຊ້ເຄື່ອງປ່າຂອງດົງ, ການນຳໃຊ້ໄມ້, ສັດປ່າ, ສັດນ້ຳ, ພົນລະເມືອງ, ຄວາມຕ້ອງການເຂົ້າກິນ, ສັດລ້ຽງລະດັບຄອບຄົວ ແລະ ການຄອບຄອງທີ່ດິນຂອງຄອບຄົວ.

## ຂັ້ນຕອນ 5. ວິໄຈດິນ ແລະ ປະເມີນຄວາມອຸດົມສົມບູນຂອງດິນ

(ລາຍລະອຽດດ້ານເນື້ອໃນຂອງຂັ້ນຕອນນີ້ມີຢູ່ເອກະສານຕ່າງຫາກ)

# ບາດກ້າວທີ່ 4: ການກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (ວຽກພາກສະໜາມ ຮອບ 3)

## ຂັ້ນຕອນ 1. ເປີດກອງປະຊຸມ ສະເໜີແນວທາງກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ (FLUMZ)

ເພື່ອເຮັດໃຫ້ການກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (FLUMZ) ມີຄວາມແທດເໝາະກັບທ່າແຮງບົ່ມຊ້ອນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ເປີດກອງປະຊຸມລາຍງານຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກ (ຮອບ 1 ແລະ 2) ກ່ອນນຳສະເໜີແນວທາງການວາງແຜນຈັດສັນ FLUMZ ໂດຍມີສ່ວນຮ່ວມຈາກອຳນາດການປົກຄອງທີ່ກ່ຽວຂ້ອງຂັ້ນເມືອງ, ກຸ່ມບ້ານ, ບ້ານໂດຍສະເພາະແມ່ນປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ. ຮັບປະກັນຄວາມເຂົ້າໃຈດ້ານຂໍ້ມູນ, ການສົນທະນາ, ປຶກສາຫາລື, ສະເໜີຄວາມຄິດເຫັນ ແລະ ມີສ່ວນຮ່ວມໃນຂະບວນການຕັດສິນໃຈກ່ຽວກັບບັນຫາສຳຄັນທີ່ກ່ຽວຂ້ອງ. ລາຍລະອຽດຂອງການເປີດປະຊຸມປະກອບມີ:

1. **ບົດສະເໜີຕໍ່ກອງປະຊຸມ**

ຂໍ້ມູນທີ່ຈະນຳມາສະເໜີຢູ່ໃນກອງປະຊຸມ ເພື່ອວາງແນວທາງກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານ ລວມມີ 5 ບົດຄື: 1) ຂະບວນການຈັດຕັ້ງປະຕິບັດວຽກ P-FALUPAM ໂດຍຫຍໍ້, 2) ແຜນທີ່ພື້ນຖານພູມີສາດ, ແຜນທີ່ຂອບເຂດຄຸ້ມຄອງຂອງບ້ານ ແລະ ຂໍ້ມູນທີ່ໄດ້ເກັບກຳ, 3) ແຜນທີ່ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ໃນປະຈຸບັນ, 4) ສຳມະໂນບັນຫາ ແລະ ບູລິມະສິດການພັດທະນາກະສິກຳ ແລະ ປ່າໄມ້ຂອງບ້ານ, 5) ແນວທາງໃນການກຳນົດເຂດ, ຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ແບບມີສ່ວນຮ່ວມ.

2. **ວາລະກອງປະຊຸມ**

ດຳເນີນກອງປະຊຸມພາຍໃນໄລຍະເວລາໜຶ່ງວັນ. ບັນທຶກຜູ້ເຂົ້າຮ່ວມ, ແຈ້ງຈຸດປະສົງ, ວິທີດຳເນີນປະຊຸມ ແລະ ນຳສະເໜີຂໍ້ມູນ (ທີ່ໄດ້ລະບຸໄວ້ຢູ່ຂໍ້ 1 ຂອງຂັ້ນຕອນນີ້), ອຳນວຍຄວາມສະດວກໃຫ້ບັນດາຜູ້ເຂົ້າຮ່ວມປະຊຸມໄດ້ນຳສະເໜີຄຳຄິດເຫັນ ແລະ ປຶກສາຫາລືບັນຫາທີ່ກ່ຽວຂ້ອງ (ເພື່ອຊ່ວຍເປັນແນວທາງໃຫ້ແກ່ການດຳເນີນວຽກຕົວຈິງດ້ານວິຊາການຢູ່ພາກສະໜາມ) ສະຫຼຸບຜົນໄດ້ຮັບຈາກກອງປະຊຸມ, ກຳນົດເວລາ ແລະ ສະຖານທີ່ ເພື່ອຈັດຕັ້ງປະຕິບັດວຽກໃນຂັ້ນຕອນຕໍ່ໄປ.

## ຂັ້ນຕອນ 2. ການສ້າງແຜນຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ (FLUMZ)

ການສ້າງແຜນຈັດສັນ FLUMZ ແມ່ນເພື່ອກຳນົດທາງເລືອກໃຫ້ແກ່ການພັດທະນາທີ່ດິນກະສິກຳ ແລະ ປ່າໄມ້ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ແທດເໝາະກັບທ່າແຮງທາງດ້ານການພັດທະນາເສດຖະກິດ-

ສັງຄົມ ແລະ ສິ່ງແວດລ້ອມ, ຕ້ອງສົ່ງເສີມຄວາມເປັນເຈົ້າຂອງ ຜ່ານການມີສ່ວນຮ່ວມຂອງປະຊາຊົນ ເຂົ້າໃນຂະບວນການ ລວມທັງ ການຕັດສິນໃຈ ໃນເວລາວາງແຜນ ສ້າງແຜນຈັດສັນ FLUMZ ດັ່ງລຸ່ມນີ້:

## 1. ສະເໜີທາງເລືອກໃນການກຳນົດ ເຂດຈັດສັນ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້

ກ່ອນສ້າງແຜນຈັດສັນ FLUMZ, ຕ້ອງໄດ້ລາຍງານ ຫຼື ທົບທວນຄືນຜົນສຳເລັດຂອງກອງປະຊຸມ ທີ່ໄດ້ຈັດຕັ້ງປະຕິບັດຢູ່ຂັ້ນຕອນທີ່ 1 ຂອງບາດກ້າວນີ້) ໃຫ້ອຳນາດການປົກຄອງບ້ານ, ອົງການຈັດຕັ້ງບ້ານ ແລະ ປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງລະອຽດ. ຫຼັງຈາກນີ້, ນຳສະເໜີຕົວຢ່າງແຜນທີ່ FLUMZ ຂອງບ້ານອື່ນ ເພື່ອເປັນແນວທາງໃຫ້ແກ່ການປຶກສາຫາລື, ຄົ້ນຄວ້າ ແລະ ຕັດສິນໃຈກຳນົດເຂດດິນກະສິກຳ ແລະ ປ່າໄມ້ ສຳລັບການຄຸ້ມຄອງນຳໃຊ້ຂອງບ້ານເພື່ອເປັນການຮັບປະກັນໃຫ້ປະຊາຊົນມີທີ່ດິນນຳໃຊ້ເຂົ້າໃນການຜະລິດໃຫ້ພຽງພໍກັບຄວາມຕ້ອງການຂອງບ້ານທີ່ອາດມີການຂະຫຍາຍຕົວ. ໃນນີ້, ທີມງານຕ້ອງໄດ້ເອົາໃຈໃສ່ເປັນພິເສດໃນດ້ານຕ່າງໆຄື: 1) ການພັດທະນາເນື້ອທີ່ດິນນາ (ດິນກະສິກຳຄົງທີ່); 2) ການພັດທະນາ,ສວນປູກ ຫຼື ບ່ອນປູກພືດກະສິກຳຄົງທີ່; 3) ການພັດທະນາການປູກໄມ້/ພືດອຸດສາຫະກຳແບບປະສົມປະສານ; 4) ການພັດທະນາພື້ນທີ່ລ້ຽງສັດໃຫຍ່ (ເຊັ່ນ: ງົວ, ຄວາຍ, ແບ້ ແລະ ອື່ນໆ); 5) ຄວາມຕ້ອງການເນື້ອທີ່ດິນ ແລະ ພືດປູກຝັງຢູ່ເຂດເນີນສູງ; 6) ຄວາມຕ້ອງການພື້ນທີ່ດິນປ່າໄມ້ສຳລັບການເກັບກູ້ໄມ້ ແລະ ເຄື່ອງປ່າຂອງດົງ (ອາຫານ, ເຄື່ອງຫັດຖະກຳ, ສ້າງລາຍຮັບ ແລະ ຢາປົວພະຍາດ); 7) ການເພີ່ມຂຶ້ນຂອງຈຳນວນພົນລະເມືອງ; 8) ການຄາດຄະເນການປ່ຽນແປງລະບົບການປູກຝັງກະສິກຳ; ແລະ 9) ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ.

## 2. ການຈັດສັນເຂດການນຳໃຊ້ທີ່ດິນແບບມີສ່ວນຮ່ວມ

ຈັດສັນການນຳໃຊ້ທີ່ດິນ (ເຂດເນີນສູງ) ດ້ວຍການມີສ່ວນຮ່ວມ ແລະ ການນຳໃຊ້ຂໍ້ມູນ ຫຼື ຜົນການຈັດຕັ້ງປະຕິບັດກິດຈະກຳຮ່ວມກັບທຸກພາກສ່ວນກ່ຽວຂ້ອງ ໂດຍສະເພາະ ປະຊາຊົນທຸກຊົນເຜົ່າຂັ້ນບ້ານ ລວມທັງ ການນຳໃຊ້ຂໍ້ມູນກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນ ເພື່ອ ທຳການຜະລິດກະສິກຳຕາມປະເພນີ ເຊິ່ງເປັນຄວາມຮູ້ທ້ອງຖິ່ນທີ່ສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແບບຍືນຍົງສອດຄ່ອງກັບນະໂຍບາຍ, ກົດໝາຍ, ນິຕິກຳລຸ່ມກົດໝາຍ ທີ່ກ່ຽວຂ້ອງ. ລາຍລະອຽດຂອງວຽກຈັດສັນການນຳໃຊ້ທີ່ດິນແບບມີສ່ວນຮ່ວມມີດັ່ງນີ້:

### 1) ການກຳນົດເຂດ ແລະ ຈັດສັນເຂດທີ່ດິນກະສິກຳ

ການນຳໃຊ້ທີ່ດິນຢູ່ໃນບ້ານໜຶ່ງອາດມີຫຼາຍປະເພດ ເຊິ່ງຕ້ອງໄດ້ສຶກສາໃຫ້ລະອຽດ ແລະ ຈະແຈ້ງ ເພື່ອຈຳແນກປະເພດທີ່ດິນດັ່ງກ່າວຄື:

- **ເຂດຂະຫຍາຍເນື້ອທີ່ດິນນາ:** ລະບຸເຂດເນື້ອທີ່ດິນນາທີ່ມີຢູ່ແລ້ວ ແລະ ເຂດທີ່ສາມາດຂະຫຍາຍຕື່ມແລ້ວຈຶ່ງໝາຍໃສ່ແຜນທີ່ FLUMZ (ດຳເນີນການກວດພື້ນທີ່ຕົວຈິງຢູ່ພາກສະໜາມເພື່ອຢັ້ງຢືນຄວາມຖືກຕ້ອງ);

- **ເຂດດິນກະສິກຳຄົງທີ່:** ລະບຸເຂດດິນກະສິກຳຄົງທີ່ (ສວນປູກພືດອາຍຸສັ້ນ, ພືດອາຍຸຍາວ, ສວນປູກພືດກະສິກຳ-ປ່າໄມ້ແບບປະສົມປະສານ ແລະ ສວນປູກໄມ້ອຸດສະຫະກຳ) ທີ່ມີຢູ່ແລ້ວ ແລະ ເຂດທີ່ມີຄວາມເປັນໄປໄດ້ສຳລັບການຂະຫຍາຍເນື້ອທີ່ພັດທະນາກະສິກຳຄົງທີ່ແລ້ວໝາຍໃສ່ແຜນທີ່ FLUMZ (ລົງກວດກາພາກສະໜາມເພື່ອຢັ້ງຢືນຄວາມຖືກຕ້ອງ);
- **ເຂດກໍ່ສ້າງໂຄງລ່າງຊົນລະປະທານ:** ລະບຸເຂດກໍ່ສ້າງຊົນລະປະທານທີ່ມີຢູ່ແລ້ວ ແລະ ບ່ອນທີ່ມີຄວາມເປັນໄປໄດ້ ສຳລັບ ແຜນການກໍ່ສ້າງແຫ່ງໃໝ່ແລ້ວໝາຍໃສ່ແຜນທີ່ FLUMZ (ລົງກວດຕົວຈິງພາກສະໜາມ ເພື່ອ ຢັ້ງຢືນຄວາມຖືກຕ້ອງ);
- **ເຂດທົ່ງຫຍ້າ ແລະ ເຂດປູກຫຍ້າ ລ້ຽງສັດ:** ລະບຸ ແລະ ແຕ້ມ ຂອບເຂດທົ່ງຫຍ້າລ້ຽງສັດໃສ່ແຜນທີ່ FLUMZ ອີງໃສ່ປະເພດສັດລ້ຽງເຊັ່ນ: ເຂດທົ່ງປູກຫຍ້າລ້ຽງສັດລະດັບຄອບຄົວ (ຂະໜາດນ້ອຍ/ກາງ), ເຂດທົ່ງປູກຫຍ້າລ້ຽງສັດຂອງບ້ານ (ຂະໜາດໃຫຍ່), ເຂດທົ່ງຫຍ້າທຳມະຊາດຂະໜາດໃຫຍ່, ເຂດລ້ຽງສັດໃນເຂດດິນປ່າໄມ້, ເຂດປ່ອຍສັດລ້ຽງ ພາຍຫຼັງລະດູທຳການຜະລິດ;
- **ເຂດດິນສຳປະທານ:** ລະບຸເຂດສຳປະທານ ທີ່ມີຢູ່ແລ້ວ ໃສ່ແຜນທີ່ FLUMZ ໄວ້ຄືເກົ່າ.

2) **ເຂດຜະລິດກະສິກຳຢູ່ເຂດເນີນສູງ (ໝູນວຽນ)**

- ທວນຄືນລະບົບການຜະລິດກະສິກຳຢູ່ເຂດເນີນສູງແບບໝູນວຽນ ໃນໄລຍະຜ່ານມາ ຈົນເຖິງປະຈຸບັນເຊັ່ນ: ເນື້ອທີ່ ແລະ ຈຳນວນຄອບຄົວ, ໄລຍະຮອບວຽນ, ການຄຸ້ມຄອງ ແລະ ການເສຍຄ່າທຳນຽມການນຳໃຊ້ທີ່ດິນ. ຫຼັງຈາກນີ້, ໃຫ້ປະຊາຊົນປຶກສາຫາລືກ່ອນຕັດສິນໃຈ ແລະ ເປັນເອກະພາບ ກ່ຽວກັບ ລະບົບການຄຸ້ມຄອງ ແລະ ນຳໃຊ້ເຂດຜະລິດກະສິກຳເນີນສູງ ເຊັ່ນ: ວິທີ, ການຈັດຕັ້ງການຜະລິດ (ເປັນກຸ່ມ), ຮອບວຽນການນຳໃຊ້ທີ່ດິນ ແລະ ພືດທີ່ຈະປູກທີ່ພົວພັນກັບຄຸນນະພາບຂອງດິນ,ຄວາມຄ້ອຍຊັນ, ຫຍ້າ ຫຼືພືດປົກຫຸ້ມ ແລະ ຄວາມຕ້ອງການເຂົ້າກິນ;
- ແຕ້ມ/ກຳນົດ ເວລາ (ປີ) ດຳເນີນການນຳໃຊ້ເຂດປູກຝັງເນີນສູງ (ລະບົບໝູນວຽນ) ເຊິ່ງຈຳນວນປີນຳໃຊ້ແມ່ນຂຶ້ນກັບ ສະພາບເງື່ອນໄຂຄວາມເປັນຈິງທາງສັງຄົມ ແລະ ສິ່ງແວດລ້ອມຂອງບ້ານ ເຊັ່ນ: ຈຳນວນເນື້ອທີ່ດິນ, ຈຳນວນປະຊາກອນ ແລະ ຄວາມຕ້ອງການດ້ານສະບຽງອາຫານ (ໂດຍສະເພາະແມ່ນເຂົ້າ).
- ດຳເນີນການຈັດສັນ ຈາກ ເຂດທີ່ຈະນຳໃຊ້ເຂົ້າໃນການຜະລິດ ປີທີ່ 1 (ຕ້ອງເປັນເນື້ອທີ່ດິນໄຮ່ເລົ່າເກົ່າທີ່ມີອາຍຸຫຼາຍທີ່ສຸດ), ເຂດປູກຝັງປີທີ່ 2 (ເນື້ອທີ່ດິນໄຮ່ເລົ່າເກົ່າທີ່ ມີອາຍຸໜ້ອຍກ່ວາເຂດນຳໃຊ້ປີທີ່ 1) ແລະ ຈັດສັນເຂດ ນຳໃຊ້ ປີຕໍ່ໄປຕາມລຳດັບ. ຮັກສາ ເຂດພື້ນທີ່ດິນປ່າໄມ້ຢູ່ອ້ອມເຂດດິນກະສິກຳເນີນສູງ ໃຫ້ເປັນເຂດດິນປ່າໄມ້ຄືເກົ່າ ໃນນີ້ ອາດຈັດສັນໃຫ້ເປັນເຂດປ່າຂັ້ນບ້ານ ເຊັ່ນ: ປ່າຜະລິດ ຫຼື ປ່າປ້ອງກັນແຄມນ້ຳ, ປ່າຍອດນ້ຳ ແລະ ອື່ນໆ.

3) **ການກຳນົດເຂດຈັດສັນທີ່ດິນປ່າໄມ້**

- **ເຂດດິນປູກໄມ້:** ລະບຸເຂດທີ່ດິນປູກໄມ້ທີ່ມີຢູ່ແລ້ວ ແລະ ເຂດ ທີ່ ເປັນໄປໄດ້ ສຳລັບ ຂະຫຍາຍໃຫ້ເປັນເຂດເນື້ອທີ່ປູກໄມ້ ລົງໃສ່ແຜນທີ່ FLUMZ (ທັງສຳຫຼວດພື້ນທີ່ຕົວຈິງຢູ່ພາກສະໜາມ)

- **ເຂດດິນປ່າໄມ້ບ້ານ:** ໃຫ້ປະຊາຊົນຊີ້ບອກເຂດປ່າໄມ້ແຕ່ລະປະເພດດ້ວຍຕົນເອງ (ລວມທັງເຂດດິນປ່າຊົມໃຊ້ຂອງບ້ານ) ແລ້ວໝາຍເຂດພື້ນທີ່ປ່າໄມ້ດັ່ງກ່າວໃສ່ແຜນທີ່ FLUMZ.

ຫຼັງຈາກການກຳນົດເຂດຈັດສັນແຕ່ລະພື້ນທີ່ດິນກະສິກຳ ແລະ ປ່າໄມ້ ບົນພື້ນຖານການຕົກລົງເປັນເອກະພາບ ຂອງປະຊາຊົນ ແລະ ທີມງານ, ບັນທຶກລາຍລະອຽດດ້ານຂໍ້ມູນໃສ່ "ບົດບັນທຶກຂໍ້ມູນເຂດຈັດສັນທີ່ດິນກະສິກຳຟອມ 17 ແລະ ບົດບັນທຶກຂໍ້ມູນເຂດຈັດສັນທີ່ດິນປ່າໄມ້ ຟອມ 18 ໃນເອກະສານແນບທ້າຍ", ສັງລວມໄວ້ຢູ່ໃນຕາຕະລາງ 'ສັງລວມເຂດຈັດສັນການນຳໃຊ້ທີ່ດິນກະສິກຳຂອງບ້ານ ແລະ ນຳໃຊ້ເຂົ້າໃນການສ້າງແຜນ ແລະ ແຜນທີ່ FLUMZ'.

3. **ສະເໜີຜົນການກຳນົດເຂດຈັດສັນ FLUMZ**

ຫຼັງຈາກ ສຳເລັດແຜນ ແລະ ແຜນທີ່ FLUMZ (ສະບັບຮ່າງ), ເປີດກອງປະຊຸມ ເພື່ອນຳສະເໜີ ແຜນ/ແຜນທີ່ ດັ່ງກ່າວ ໃຫ້ປະຊາຊົນທຸກຄົນຢູ່ໃນບ້ານ ໄດ້ຮັບຮູ້, ເຂົ້າໃຈ, ປຶກສາຫາລື ແລະ ຢັ້ງຢືນຄວາມ ຖືກຕ້ອງ ເພື່ອ ຮັບປະກັນ ຄວາມເປັນເອກະພາບ ດ້ານການຈັດຕັ້ງປະຕິບັດ.

4. **ການຮັບຮອງເອົາແຜນຈັດສັນ FLUMZ**

ອຳນາດການປົກຄອງບ້ານ ສະເໜີຫາທ່ານເຈົ້າເມືອງ ເພື່ອ ອອກຂໍ້ຕົກລົງຮັບຮອງເອົາ ແຜນຈັດສັນ FLUMZ ໂດຍຜ່ານທຸກຂະແໜງການທີ່ກ່ຽວຂ້ອງ. ຫຼັງຈາກປະຊາຊົນໄດ້ທົດລອງປະຕິບັດຕາມແຜນຈັດສັນ FLUMZ ໄດ້ 1 ປີ ຫຼື 1 ລະດູການຜະລິດຂຶ້ນໄປ, ຕິດຕາມກວດກາ ແລະ ປະເມີນຜົນ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ, ສອດຄ່ອງກັບລະບຽບຫຼັກການທີ່ກ່ຽວຂ້ອງ ແລະ ປະຊາຊົນສາມາດປະຕິບັດໄດ້ (ປະຊາຊົນຍອມຮັບ).

## ຂັ້ນຕອນ 3. ການທົບທວນ, ປັບປຸງລະບຽບ ແລະ ແຜນຈັດສັນ FLUMZ ຂອງບ້ານ

ລະບຽບຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດ, ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ແມ່ນສຳຄັນແລະ ຈຳເປັນຕໍ່ການປະຕິບັດຕາມແຜນຈັດສັນ FLUMZ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ. ສະນັ້ນ, ຈຶ່ງໄດ້ກຳນົດວິທີການປັບປຸງ ຫຼື ສ້າງລະບຽບຂອງບ້ານ ແບບມີສ່ວນຮ່ວມ ດັ່ງລຸ່ມນີ້:

ໜ້າວຽກທີ່ 1. ເກັບກຳ ຫຼື ສັງລວມເອົາເອກະສານກ່ຽວຂ້ອງທີ່ມີແລ້ວຢູ່ໃນບ້ານເຊັ່ນ: ນິຕິກຳ, ກົດລະບຽບແລະ ເອກະສານກ່ຽວຂ້ອງກັບ ທີ່ດິນ (ຕຢ. ປື້ມສຳມະໂນທີ່ດິນ) ແລະ ອື່ນໆ.

ໜ້າວຽກທີ່ 2. ປຶກສາຫາລື ແລະ ສຶກສາດ້ານເນື້ອໃນ ຂອງບັນດາເອກະສານ ທີສາມາດລວບລວມໄດ້ເພື່ອລະບຸຄວາມຕ້ອງການດ້ານຮູບແບບ ແລະ ເນື້ອໃນເອກະສານສຳລັບສ້າງ (ໃໝ່) ລະບຽບການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດ, ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ (ຖ້າຍັງບໍ່ທັນມີ) ແຕ່ຖ້າມີແລ້ວ, ໃຫ້ປັບປຸງດ້ານເນື້ອໃນ. ການສ້າງກົດລະບຽບນີ້, ຕ້ອງນຳໃຊ້ຄວາມຮູ້ທ້ອງຖິ່ນທີ່ສຳຄັນ ແລະ ຮັບປະກັນຄວາມຖືກຕ້ອງ ຫຼື ສອດຄ່ອງດ້ານນິຕິກຳ ແລະ ສະພາບຕົວຈິງຂອງທ້ອງຖິ່ນ.

ໜ້າວຽກທີ່ 3. ທົບທວນ ແລະ ນຳສະເໜີໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ເພື່ອຄວາມເຫັນດີເປັນເອກະພາບ ດ້ານເນື້ອໃນລະອຽດຫຼັງຈາກປັບປຸງ ຫຼື ສ້າງລະບຽບລະບຽບການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດ, ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານສຳເລັດ ແມ່ນ.

ໜ້າວຽກທີ່ 4. ອຳນາດການປົກຄອງຂັ້ນບ້ານນຳສະເໜີ (ຮ່າງ) ກົດລະບຽບທີ່ໄດ້ສ້າງຫາທ່ານເຈົ້າເມືອງເພື່ອພິຈາລະນາ ແລະ ຮັບຮອງໂດຍຜ່ານທຸກຂະແໜງການທີ່ກ່ຽວຂ້ອງ.

ໜ້າວຽກທີ່ 5. ພາຍຫຼັງທີ່ແຜນຈັດສັນ FLUMZ (ລວມມີກົດລະບຽບຄຸ້ມຄອງ) ຖືກຮັບຮອງເອົາຢ່າງເປັນທາງການ ຕ້ອງໄດ້ຈັດກອງປະຊຸມບ້ານຂຶ້ນອີກເພື່ອເຜີຍແຜ່ ແລະ ປະກາດນຳໃຊ້ແຜນດັ່ງກ່າວຢ່າງເປັນທາງການ.

***ໝາຍເຫດ:*** *ຄຳຖາມສຳລັບການປັບປຸງ ຫຼື ສ້າງລະບຽບການຄຸ້ມຄອງນຳໃຊ້ ຊັບພະຍາກອນທຳມະຊາດ, ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານລວມມີຄຳຖາມ 10 ໝວດ ແຕ່ລະໝວດພົວພັນກັບດ້ານຕ່າງໆດັ່ງລຸ່ມນີ້:*

*ໝວດຄຳຖາມ 1. ຫຼັກການ ແລະ ວິທີການສ້າງລະບຽບຂອງບ້ານທີ່ມີຢູ່ແລ້ວ: ເປັນຄຳຖາມເປີດ ດ້ານຫຼັກການ ແລະ ວິທີການສ້າງ ແລະ ປະຕິບັດກົດລະບຽບໃນໄລຍະຜ່ານມາຮອດປະຈຸບັນ*

*ໝວດຄຳຖາມ 2. ທີ່ດິນກະສິກຳເນີນສູງ ແລະ ການຫັນປ່ຽນຈາກດິນປ່າໄມ້ ໄປເປັນດິນກະສິກຳ: ກວມເອົາຂໍ້ມູນທັງໝົດທີ່ປະຕິບັດ ກັບ ເນື້ອທີ່ດິນກະສິກຳເນີນສູງ ລວມທັງ ເນື້ອທີ່ເລົ່າໄຮ່ ແລະ ເນື້ອທີ່ປ່າໄມ້ (ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ແລະ ປ່າຊົມໃຊ້ຂອງບ້ານ)*

*ໝວດຄຳຖາມ 3. ທີ່ດິນບໍລິເວນນໍ້າ: ມາດຕະການການຄຸ້ມຄອງ ແລະ ນຳໃຊ້ພື້ນທີ່ດິນບໍລິເວນນໍ້າ, ເຂດປ່າຍອດນໍ້າ ແລະ ຕາມແຄມສາຍນໍ້າ ລວມທັງສິ່ງກີດຂວາງທາງໄຫຼຂອງນໍ້າ*

*ໝວດຄຳຖາມ 4. ດິນຄົນມະນາຄົມ: ເນັ້ນໃສ່ການບູລະນະ ແລະ ປົກປັກຮັກສາ ເສັ້ນທາງຄົມມະນາຄົມທຸກປະເພດ ຢູ່ພາຍໃນ ເຂດການປົກຄອງຂອງບ້ານ*

*ໝວດຄຳຖາມ 5. ທີ່ດິນວັດທະນະທຳ: ເຂດດິນວັດທະນະທຳ, ເຂດທ່ອງທ່ຽວ ແລະ ປ່າສັກສິດຂອງບ້ານ.*

*ໝວດຄຳຖາມ 6. ທີ່ດິນປຸກສ້າງ: ລວມມີ ທີ່ດິນປຸກສ້າງ ແລະ ແຜນຜັງເມືອງຂອງບ້ານ*

*ໝວດຄຳຖາມ 7. ການຄຸ້ມຄອງ ແລະ ນຳໃຊ້ໄມ້: ລວມມີ ເຂດຈັດສັນເພື່ອຄຸ້ມຄອງ ແລະ ນຳໃຊ້ໄມ້, ການຂຸດຄົ້ນໄມ້, ການເກັບກູ້ເຄື່ອງປ່າຂອງດົງ, ແລະ ການຄວບຄຸມ-ປ້ອງກັນໄຟປ່າ*

*ໝວດຄຳຖາມ 8. ການປົກປັກຮັກສາສັດນໍ້າ ແລະ ສັດປ່າ: ເນັ້ນໃສ່ ການຄຸ້ມຄອງປົກປັກຮັກສາສັດນໍ້າ-ສັດປ່າ, ລວມທັງວັງສະຫງວນ ແລະ ການລ່າສັດປ່າ*

*ໝວດຄຳຖາມ 9. ການຄຸ້ມຄອງສັດລ້ຽງ: ລວມມີການຄຸ້ມຄອງສັດລ້ຽງທັງໝົດ ເຊັ່ນ: ການພັດທະນາເຂດລ້ຽງສັດ, ການລ້ຽງສັດ, ການປ້ອງກັນພະຍາດສັດ ແລະ ການເຄື່ອນຍ້າຍສັດ*

*ໝວດຄຳຖາມ 10. ການປ້ອງກັນຢາເຄມີ ເພື່ອປາບສັດຕູພືດ ແລະ ຂ້າຫຍ້າ: ເນັ້ນໜັກວິທີປ້ອງກັນ ແລະ ຄຸ້ມຄອງການນຳໃຊ້ຢາເຄມີ ເພື່ອປາບສັດຕູພືດ ແລະ ຂ້າຫຍ້າ*

## ຂັ້ນຕອນ 4. ແນະນຳ ແລະ ສົ່ງເສີມການຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ

ຊຸກຍູ້ໃຫ້ປະຊາຊົນ ຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ ດ້ວຍການປະສານສົມທົບດ້ານຂໍ້ມູນຢູ່ໃນແຜນດັ່ງກ່າວ ໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງຮັບຮູ້ ແລະ ນຳໃຊ້ເຂົ້າໃນການສົ່ງເສີມໃຫ້ປະຊາຊົນມີຄວາມສາມາດດຳເນີນກິດຈະກຳພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຕາມຄວາມຕ້ອງການ ແລະທ່າແຮງຕົວຈິງຂອງບ້ານຕາມທິດຍືນຍົງ.

## ບາດກ້າວທີ່ 5: ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ (ວຽກພາກສະໜາມ ຮອບ 4)

ຈັດຕັ້ງປະຕິບັດການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຕາມແຜນຈັດສັນ FLUMZ ດັ່ງລຸ່ມນີ້:

1) ຈັດກອງປະຊຸມ ຫຼື ເຮັດວຽກເປັນກຸ່ມສະເພາະ ກັບ ພາກສ່ວນກ່ຽວຂ້ອງ ເພື່ອປຶກສາຫາລື, ແລກປ່ຽນບົດຮຽນ ແລະ ຕີລາຄາຄວາມສາມາດປະຕິບັດຕາມແຜນ P-FALUPAM ຂອງອຳນາດການປົກຄອງບ້ານ, ຄະນະຮັບຜິດຊອບ ແລະ ປະຊາຊົນ ຂັ້ນບ້ານ, ແລະ
2) ຕິດຕາມ ແລະ ປະເມີນພື້ນທີ່ຕົວຈິງຢູ່ພາກສະໜາມ. ດຳເນີນການຕິດຕາມ ແລະ ປະເມີນຜົນເທື່ອລະບ້ານ ໃຊ້ເວລາປະມານ 2-3 ວັນ/ບ້ານ ໂດຍມີ 4 ຂັ້ນຕອນເຮັດວຽກດັ່ງລຸ່ມນີ້:

### ຂັ້ນຕອນ 1. ກະກຽມທີມງານ, ຂໍ້ມູນ, ແຜນທີ່ ແລະ ອຸປະກອນ

ເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດກິດຈະກຳຕົວຈິງ, ຕ້ອງໄດ້ກຽມຄວາມພ້ອມດ້ານທີມງານ, ແຜນທີ່, ຂໍ້ມູນຂັ້ນບ້ານ (ຈາກການປະເມີນເບື້ອງຕົ້ນ), ແບບຟອມເກັບກຳຂໍ້ມູນ ແລະ ວັດຖຸ, ອຸປະກອນ/ເຄື່ອງມືຮັບໃຊ້ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຮັດວຽກຕົວຈິງດັ່ງນີ້:

1. **ກຽມທີມງານ**

ທີມງານວິຊາການ ທີ່ຈະດຳເນີນການຕິດຕາມ ແລະ ປະເມີນຜົນຂອງການປະຕິບັດຕາມແຜນຈັດສັນ FLUMZ ຮ່ວມກັບອຳນາດການປົກຄອງ ແລະ ປະຊາຊົນຢູ່ບ້ານ ລວມມີພະນັກງານວິຊາການທີ່ເຄີຍໄດ້ເຮັດວຽກ P-FALUPAM ໂດຍສະເພາະແມ່ນວິຊາການດ້ານ GIS, ພະນັກງານສຳຫຼວດ ແລະ ພະນັກງານເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ.

2. **ກຽມແຜນທີ່**

ທີມງານ P-FALUPAM ທີ່ຈະດຳເນີນວຽກຕິດຕາມ ແລະ ປະເມີນຜົນຂອງການປະຕິບັດຕາມແຜນຈັດສັນ FLUMZ ຢູ່ບ້ານເປົ້າໝາຍຕ້ອງໄດ້ກະກຽມແຜນທີ່ດັ່ງມີລາຍລະອຽດຢູ່ຕາຕະລາງລຸ່ມນີ້:

**ຕາຕະລາງ 8. ລາຍການແຜນທີ່ນຳໃຊ້ເຂົ້າໃນການຕິດຕາມ ແລະ ປະເມີນຜົນ ການປະຕິບັດຕາມແຜນຈັດສັນ FLUMZ**

| ລດ | **ແຜນທີ່ ແລະ ຂໍ້ມູນ GIS** | **ຂອບເຂດນຳໃຊ້** |
|---|---|---|
| 1. | GeoTopoVB | ພູມສັນຖານຂອງບ້ານ |
| 2. | GeoSIMVB | ສະພາບຄວາມປົກຫຸ້ມຂອງພືດພັນ |
| 3. | CLUFC | ສະພາບການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມປ່າໄມ້ ປະຈຸບັນສະເພາະປີໃດໜຶ່ງ, ຫຼັງຈາກສຳເລັດ P-FALUPAM ຮອບ2 |

| | | |
|---|---|---|
| 4. | SimCLUFC | ການນຳໃຊ້ທີ່ດິນປະຈຸບັນສົມທຽບກັບພາບຖ່າຍດາວທຽມ (ໃນເວລາດຳເນີນ P-FALUPAM ຮອບ 2) |
| 5. | ແຜນທີ່ FLUMZ ຕົ້ນສະບັບ | ແຜນ ແລະ ແຜນທີ່ FLUMZ ຕົ້ນສະບັບ |
| 6. | ແຜນທີ່ FLUMZ (ປັບປຸງ) | ແຜນທີ່ FLUMZ ສະບັບປັບປຸງ (ສະບັບປະຈຸບັນ) |
| 7. | ແຜນທີ່ SIMFLUMZ_ພາບຖ່າຍ Landsat, Sentinel ຫຼື Skysat | ເຂດທຳການຜະລິດພືດກະສິກຳຢູ່ເຂດເນີນສູງຄັ້ງຫຼ້າສຸດ |
| 8. | SIMFLUMZ_SPOT ຫຼື ພາບຖ່າຍມີຄວາມຊັດເຈນສູງ | ປະເພດທີ່ດິນຕ່າງໆ ເຊັ່ນ ດິນປ່າໄມ້, ດິນກະສິກຳ ລວມທັງ ດິນປູກພືດອຸດສາຫະກຳ |

3. **ກຽມແບບຟອມ**

ແບບຟອມທີ່ຕ້ອງໄດ້ກະກຽມ ເພື່ອນຳໃຊ້ເຂົ້າໃນການຕິດຕາມ ແລະ ປະເມີນຜົນການປະຕິບັດຕາມແຜນຈັດສັນ FLUMZ ລວມມີແບບຟອມເກັບກຳຂໍ້ມູນ (ໃໝ່) ເພື່ອສົມທຽບກັບຂໍ້ມູນທີ່ມີແລ້ວເຊັ່ນ: 1)ການນຳໃຊ້ ແລະ ຄອບຄອງທີ່ດິນຂອງຄອບຄົວ; 2) ເຂດທີ່ດິນກະສິກຳໂດຍສະເພາະກະສິກຳເນີນສູງ; 3)ເຂດທີ່ດິນປ່າໄມ້; 4) ບັນທຶກການສຳຫຼວດທີ່ດິນກະສິກຳ ແລະ ປ່າໄມ້; ແລະ 5) ຂໍ້ມູນການນຳໃຊ້ທີ່ດິນກະສິກຳຄົງທີ່ (ຂອງບຸກຄົນ) ຢູ່ໃນເຂດພື້ນທີ່ດິນລວມໝູ່ ຫຼື ດິນຂອງບ້ານ.

4. **ກຽມອຸປະກອນ**

ອຸປະກອນທີ່ຕ້ອງການລວມມີ: ເຂັມໝຸດ, ຝ້າຍສີ, ເຈ້ຍສະຕິກເກີ້, ປື້ມບັນທຶກ, ບິກ, ກະລັບເຟີ, ຊອງເອກະສານ, ເຈ້ຍ A0, ສະກ໋ອດ, ເຄື່ອງພິມເອກະສານ, ເຄື່ອງສາຍ (LCD) ແລະ ເຄື່ອງ GPS.

## ຂັ້ນຕອນ 2. ການຕິດຕາມກວດກາ, ປະເມີນຜົນ ແລະ ປັບປຸງແຜນຈັດສັນ FLUMZ

ຂັ້ນຕອນນີ້ແນະນຳການເລືອກບ້ານເປົ້າໝາຍ, ໄລຍະເວລາ ແລະ ກິດຈະກຳທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດໃນເວລາ ລວມທັງການເກັບກຳ ແລະ ສຶກສາຂໍ້ມູນ, ການສຳຫຼວດພື້ນທີ່ຕົວຈິງ, ການປຶກສາຫາລື ເພື່ອຄວາມເປັນເອກະພາບ ແລະ ການຢັ້ງຢືນຂໍ້ມູນດ້ານ ດ້ານຕິດຕາມກວດກາ.

### 1. ເງື່ອນໄຂເລືອກບ້ານ

ຕ້ອງເປັນບ້ານທີ່ໄດ້ສຳເລັດວຽກ P-FALUPAM ຮອບທີ່ 3 ແລະ ປະຊາຊົນໄດ້ນຳໃຊ້ ຫຼື ໄດ້ປະຕິບັດຕາມແຜນຈັດສັນ FLUMZ ເປັນໄລຍະເວລາ 1 ປີ ຂຶ້ນໄປ.

### 2. ໄລຍະເວລາເຮັດວຽກຢູ່ບ້ານ

ເວລາທີ່ເໝາະສົມ ຕໍ່ ການຕິດຕາມການປະຕິບັດຕາມແຜນຈັດສັນ FLUMZ ຢູ່ບ້ານເປົ້າໝາຍແມ່ນຢູ່ລະຫ່ວາງເດືອນຕຸລາ ຫາ ກາງເດືອນກຸມພາ ຫຼື ກ່ອນລະດູການຜະລິດພືດກະສິກຳ (ເຂົ້າ) ຢູ່ເຂດເນີນສູງ ຫຼື

ປູກເຂົ້າໄຮ່ໂດຍໃຊ້ເວລາ ປະມານ 2-3 ວັນຕໍ່ບ້ານຂຶ້ນກັບສະພາບ ແລະ ລັກສະນະຕົວຈິງຂອງບ້ານເຊັ່ນ: ລະບົບການນໍາໃຊ້ທີ່ດິນ, ຂະໜາດຂອງເນື້ອທີ່ດິນເຂດເນີນສູງ, ລະດັບຄວາມສອດຄ່ອງຂອງການປະຕິບັດຕາມແຜນຈັດສັນ FLUMZ ແລະ ການຮ່ວມມື ຫຼື ມີສ່ວນຮ່ວມຂອງປະຊາຊົນ ບັນດາເຜົ່າ.

### 3. ການສຶກສາ ແລະ ປະເມີນຂໍ້ມູນເບື້ອງຕົ້ນ

1) ສົມທຽບຂໍ້ມູນຢູ່ໃນ ແຜນຈັດສັນ FLUMZ ກັບ ຂໍ້ມູນ ພາບຖ່າຍດາວທຽມລ້າສຸດ ເພື່ອກວດເບິ່ງເຂດ ແລະ ຮອບວຽນ (ປີ) ການນໍາໃຊ້ທີ່ດິນຜະລິດກະສິກໍາ; ປະເມີນເຂດເນື້ອທີ່ດິນຜະລິດກະສິກໍາ; ແລະ ການຂະຫຍາຍເຂດເນື້ອທີ່ດິນຜະລິດກະສິກໍາ ເຂົ້າໃນເຂດດິນປະເພດອື່ນ
2) ໃຊ້ພາບຖ່າຍທີ່ມີຄວາມລະອຽດສູງເພື່ອກວດເບິ່ງ ກິດຈະກໍາການຜະລິດກະສິກໍາ, ການກໍ່ສ້າງ ຫຼື ກິດຈະກໍາອື່ນ ທີ່ເກີດຂຶ້ນ ຢູ່ນອກເຂດ ຈັດສັນ ຫຼັງຈາກ ສໍາເລັດການສ້າງແຜນຈັດສັນ FLUMZ,
3) ລະບຸ ຫຼື ບັນທຶກການປ່ຽນແປງການນໍາໃຊ້ທີ່ດິນ ໃສ່ແຜນທີ່ ເພື່ອ ເປັນບ່ອນອີງໃຫ້ແກ່ການປຶກສາຫາລື ແລະ ລົງສໍາຫຼວດພື້ນທີ່ຕົວຈິງຢູ່ພາກສະໜາມຮ່ວມກັບປະຊາຊົນ.

### 4. ກິດຈະກໍາ ແລະ ຂັ້ນຕອນການເຮັດວຽກຢູ່ບ້ານ

1) ປະຊຸມຮ່ວມກັບຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານເພື່ອ: ກ) ລາຍງານຜົນການປະຕິບັດຕາມແຜນຈັດສັນ FLUMZ, ຂ) ນໍາສະເໜີໃຫ້ຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານຮັບຮູ້ຜົນການສຶກສາແຜນທີ່ພາບຖ່າຍດາວທຽມລ້າສຸດ ແລະ ຊີ້ໃຫ້ເຫັນການນໍາໃຊ້ທີ່ດິນເຂດເນີນສູງໃນປີຜ່ານມາ ໂດຍເນັ້ນໜັກຈຸດທີ່ບໍ່ນອນຢູ່ໃນເຂດຈັດສັນ FLUMZ, ແລະ ຄ) ລາຍງານຊື່ ຂອງບັນດາຄອບຄົວທີ່ບໍ່ສາມາດປະຕິບັດຕາມແຜນຈັດສັນ (ນໍາໃຊ້ດິນຢູ່ນອກເຂດຈັດສັນໃຫ້ເປັນດິນກະສິກໍາ) ແລະ ລະບຸຂໍ້ມູນດັ່ງກ່າວໃສ່ແຜນທີ່ພາບຖ່າຍດາວທຽມ.

2) **ປະຊຸມຮ່ວມກັບກັບປະຊາຊົນພາຍໃນບ້ານ**
   - ນໍາສະເໜີຜົນຂອງກອງປະຊຸມຮ່ວມກັບຄະນະຮັບຜິດຊອບວຽກ P-FALUPAM ຂັ້ນບ້ານ ແລະ ອໍານວຍຄວາມສະດວກໃຫ້ປະຊາຊົນ ສາມາດປະກອບຄໍາເຫັນຕາມຄວາມຈິງ,
   - ຖ້າມີຄອບຄົວຜະລິດກະສິກໍາຢູ່ເຂດເນີນສູງນອກເຂດຈັດສັນ (ຫຼື ບໍ່ປະຕິບັດຕາມແຜນຈັດສັນ FLUMZ) ໃນປີທີ່ຜ່ານມາ, ໃຫ້ຄອບຄົວດັ່ງກ່າວລະບຸພື້ນທີ່ຕົນໄດ້ນໍາໃຊ້ ພ້ອມທັງອະທິບາຍເຫດຜົນ, ສະເໜີແຜນນໍາໃຊ້ຕອນດິນ ແລະ ຊະນິດພືດກະສິກໍາທີ່ຈະປູກຢູ່ເຂດເນີນສູງໃນປີຕໍ່ໄປ,
   - ໝາຍລະຫັດຄອບຄົວ ຫຼື ຂຽນຊື່ຄອບຄົວໃສ່ເຈ້ຍ ຫຼື ສະຕິກເກີ້ ເພື່ອໝາຍໃສ່ແຜນທີ່ ແລະ ແບບຟອມບັນທຶກຂໍ້ມູນຕາມການໃຫ້ຂໍ້ມູນຂອງປະຊາຊົນ.

3) **ສໍາຫຼວດພື້ນທີ່ຕົວຈິງ**

ທີມງານວິຊາການສຳຫຼວດພື້ນທີ່ຕົວຈິງຮ່ວມກັບປະຊາຊົນບັນດາເຜົ່າ ໃນນໍລະນີທີ່ມີ ປະຊາຊົນບໍ່ເຂົ້າໃຈ ຫຼື ບໍ່ເຫັນດີເປັນເອກະພາບ ກັບ ຜົນໄດ້ຮັບຈາກການຕິດຕາມ ແລະ ປະເມີນເບື້ອງຕົ້ນ ຫຼື ຂໍ້ມູນສິນທຽບລະຫ່ວາງຜົນການປະເມີນ ແລະ ພາບຖ່າຍດາວທຽມທີ່ຍັງບໍ່ທັນຈະແຈ້ງ.

4) **ສັງລວມ ແລະ ສະຫຼຸບຂໍ້ມູນ**

ສັງລວມ, ສະຫຼຸບ ແລະ ນຳໃຊ້ຂໍ້ມູນຈາກການປຶກສາຫາລື ແລະ ສຳຫຼວດພື້ນທີ່ຕົວຈິງເພື່ອປັບປຸງແຜນ/ແຜນທີ່ FLUMZ ກ່ອນບັນທຶກຂໍ້ມູນດັ່ງກ່າວໄວ້ໃນລະບົບຖານຂໍ້ມູນ.

5) **ຢັ້ງຢືນຂໍ້ມູນ**

ຢັ້ງຢືນຂໍ້ມູນດ້ວຍການ 1) ຈັດກອງປະຊຸມບ້ານເພື່ອນຳສະເໜີການປ່ຽນແປງ, ປັບປຸງ ຫຼື ດັດແກ້ຂໍ້ມູນຢູ່ໃນແຜນ, ແຜນທີ່ FLUMZ ແລະ ແນະນຳການນຳໃຊ້ທີ່ດິນເພື່ອທຳການຜະລິດກະສິກຳເນີນສູງ, 2) ລະບຸລາຍຊື່ຂອງຄອບຄົວດັ່ງກ່າວໃສ່ແຜນທີ່ FLUMZ ແລ້ວແຈ້ງໃຫ້ຄອບຄົວດັ່ງກ່າວ ແລະ ປະຊາຊົນຢູ່ພາຍໃນບ້ານ ຮັບຮູ້ ໃນກອງປະຊຸມບ້ານ, ກໍລະນີບ້ານ ແລະ ພາກສ່ວນຮັບຜິດຊອບອື່ນເຫັນດີເປັນເອກະພາບ (ອະນຸຍາດ) ໃຫ້ຄອບຄົວສືບຕໍ່ຮັກສາສະນຳ ຢູ່ພາຍໃນເຂດດິນກະສິກຳລວມໝູ່ (ຂອງບ້ານ); 3) ປະຊາຊົນບັນດາເຜົ່າຖາມຄຳຖາມເພື່ອຄວາມຈະແຈ້ງດ້ານຂໍ້ມູນ ຫຼື ແກ້ໄຂຂໍ້ຂ້ອງໃຈ ແລະ ຮັບຟັງຂໍ້ສະເໜີ ຫຼື ຄວາມຄິດເຫັນທີ່ກ່ຽວຂ້ອງ; 4) ບັນທຶກ ແລະ ນຳສະເໜີຜົນໄດ້ຮັບຈາກກອງປະຊຸມ (ລວມທັງແຜນໃນຕໍ່ໜ້າ) ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ເຫັນດີເປັນເອກະພາບ ກ່ອນອຳນາດການປົກຄອງບ້ານເຊັນຢັ້ງຢືນ; ແລະ 5) ນຳໃຊ້ຂໍ້ມູນທີ່ໄດ້ຮັບຄວາມເຫັນດີເຫັນພ້ອມ ຢ່າງເປັນເອະພາບຈາກປະຊາຊົນປະກອບເປັນແຜນ/ແຜນທີ່ FLUMZ (ສະບັບສຸດທ້າຍ) ກ່ອນຈັດພິມເປັນປຶ້ມ ແລະ ຜະລິດເປັນປ້າຍແຜນທີ່.

## ຂັ້ນຕອນ 3. ຈັດກອງປະຊຸມຮັບຮອງແຜນຈັດສັນ FLUMZ ຂອງບ້ານຢູ່ຂັ້ນເມືອງ

ນຳສະເໜີແຜນ ຈັດສັນ FLUMZ ໃຫ້ບ້ານ/ກຸ່ມບ້ານ ແລະ ພາກສ່ວນຕ່າງໆຂັ້ນເມືອງທີ່ກ່ຽວຂ້ອງ ເພື່ອການຮັບຮູ້, ຮັບຮອງ ແລະ ເປັນບ່ອນອີງໃຫ້ແກ່ການສະໜັບສະໜູນໃຫ້ປະຊາຊົນບັນດາເຜົ່າສາມາດຈັດຕັ້ງປະຕິບັດຕາມ.

**1. ການກະກຽມ**

1) **ຜູ້ເຂົ້າຮ່ວມກອງປະຊຸມ**

ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງເອົາແຜນຈັດສັນ FLUMZ ຢູ່ຂັ້ນເມືອງລວມມີ: ຄະນະຮັບຜິດຊອບ P-FALUPAM ຂັ້ນບ້ານ, ອຳນາດການປົກຄອງບ້ານ (ຄະນະບ້ານ), ຫົວໜ້າ/ຮອງຫົວໜ້າ ຫ້ອງການກຸ່ມບ້ານ, ທີມງານວິຊາການ P-FALUPAM (ສູນກາງ, ແຂວງ, ເມືອງ), ຫົວໜ້າ/ຮອງຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫົວໜ້າ/ຮອງຫົວໜ້າ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ຫົວໜ້າ/ຮອງຫົວໜ້າ ຫ້ອງການພາຍໃນ

ຂອງເມືອງ, ຫົວໜ້າ/ຮອງຫົວໜ້າ ຫ້ອງການຍຸດຕິທຳ ເມືອງ, ຫົວໜ້າ/ຮອງຫົວໜ້າ ຫ້ອງວ່າການປົກຄອງເມືອງ ແລະ ເຈົ້າເມືອງ/ຮອງເຈົ້າເມືອງ (ອາດມີຄະນະປະທານຮ່ວມ ທີ່ເປັນ ຫົວໜ້າ/ຮອງກົມ ແລະ ຫົວໜ້າ/ຮອງຫົວໜ້າ ພະແນກການທີ່ກ່ຽວຂ້ອງ).

2) **ສະຖານທີ່**

ຈັດກອງປະຊຸມ ຢູ່ສະຖານທີ່ເໝາະສົມ ຫຼື ສະດວກຕໍ່ການເດີນທາງເຂົ້າຮ່ວມກິດຈະກຳຂອງບັນດາຜູ້ເຂົ້າຮ່ວມ ເຊິ່ງ ອາດເປັນຫ້ອງປະຊຸມຂອງກຸ່ມບ້ານ ຫຼື ຫ້ອງປະຊຸມຂອງບ້ານທີ່ຕັ້ງຢູ່ໃຈກາງຂອງແຕ່ລະບ້ານທີ່ຈະມາຮ່ວມ.

3) **ວາລະກອງປະຊຸມ**

ວາລະຂອງກອງປະຊຸມຮັບຮອງແຜນຈັດສັນ **FLUMZ** ຢູ່ຂັ້ນເມືອງ ໂດຍລວມ ແມ່ນຄືກັນກັບວາລະຂອງກອງປະຊຸມທົ່ວໄປ ເຊິ່ງ ຄະນະທີມງານ ວິຊາການ ທີ່ຮັບຜິດຊອບວຽກ P-FALUPAM ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ກະກຽມໃຫ້ແທດເໝາະກັບສະພາບວຽກ ແລະເງື່ອນໄຂຕົວຈິງຂອງທ້ອງຖິ່ນ.

4) **ເຄື່ອງມື ແລະ ອຸປະກອນ**

ບັນດາເຄື່ອງມື ແລະ ອຸປະກອນ ທີ່ຈຳເປັນ ແລະ ຂາດບໍ່ໄດ້ ສຳລັບກອງປະຊຸມປະກອບມີ: 1) ແຜນທີ່ FLUMZ ແລະ ແຜນທີ່ SIM_FLUMZ (ຂະໜາດ A0 ຫຼື A1) ສຳລັບບັນທຶກຂໍ້ມູນຈາກກອງປະຊຸມ ແລະ 2) ປຶ້ມແຜນ FLUMZ.

5) **ບົດສະເໜີ**

ບົດສະເໜີ ແລະ ສຳເນົາເອກະສານທີ່ຕ້ອງໄດ້ກະກຽມເພື່ອນຳສະເໜີ ແລະ ແຈກຢາຍໃຫ້ຜູ້ເຂົ້າຮ່ວມກອງປະຊຸມປະກອບມີຫົວຂໍ້ຄື: ກ) ສະພາບລວມຂອງກຸ່ມບ້ານ ລວມມີຈຳນວນບ້ານທັງໝົດຢູ່ໃນກຸ່ມບ້ານ, ສະພາບການນຳໃຊ້ ທີ່ດິນຂອງກຸ່ມບ້ານ, ຈຳນວນບ້ານທີ່ໄດ້ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕາມແຜນຈັດສັນ FLUMZ, ຂ) ສັງລວມແຜນທີ່ຂອງທຸກບ້ານຢູ່ພາຍໃນກຸ່ມບ້ານເຊັ່ນ: 1) ແຜນທີ່ພາບຖ່າຍດາວທຽມພູມິສາດ GeoSIM (ກ່ອນການຈັດສັນ), 2)ແຜນທີ່ການນຳໃຊ້ດິນປະຈຸບັນ CLUFC (ກ່ອນການຈັດສັນ), 3) ແຜນທີ່ຈັດສັນ FLUMZ (ສະບັບປັບປຸງ), 4) ແຜນທີ່ຈັດສັນ SIM-FLUMZ (ມີພາບຖ່າຍຫຼ້າສຸດທີ່ສາມາດສົມທຽບກັບແຜນຈັດສັນ), 5) ພາບຖ່າຍລ້າສຸດທີ່ໄດ້ກະກຽມເປັນຂໍ້ມູນພື້ນຖານໃນການຕິດຕາມ ແລະ ປະເມີນຜົນ ແລະ ຜົນການສັງເກດ, ວິເຄາະ ແລະ ປະເມີນເບື້ອງຕົ້ນແບບມີສ່ວນຮ່ວມ (ທີມງານວິຊາການຮ່ວມກັບຄະນະຮັບຜິດຊອບ P-FALUPAM ຂັ້ນບ້ານ ແລະ ອຳນາດການປົກຄອງບ້ານ).

2. **ການດຳເນີນກອງປະຊຸມ**

ພາຍຫຼັງເປີດກອງປະຊຸມຢ່າງເປັນທາງການ, ຕາງໜ້າທີມງານວິຊາການຜູ້ຮັບຜິດຊອບວຽກ ຈັດຕັ້ງປະຕິບັດ P-FALUPAM ສະເໜີໂດຍລວມກ່ຽວກັບການຈັດຕັ້ງປະຕິບັດວຽກດັ່ງກ່າວ, ແຜນຈັດສັນ FLUMZ ແລະ ການປະຕິບັດຕາມແຜນ ອີງຕາມຜົນການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມທີ່ໄດ້ສົມທຽບກັບຂໍ້ມູນການແປພາບຖ່າຍຫຼັງມີແຜນຈັດສັນ FLUMZ. ສຳລັບພາກສົນທະນາ, ແບ່ງເປັນກຸ່ມຄົ້ນຄ້ວາ (2 ບ້ານຕໍ່ກຸ່ມ) ເພື່ອທົບທວນຄືນແຜນທີ່, ຜົນຂອງການປະເມີນ, ວິເຄາະ ແລະ ຕອບຄຳຖາມກ່ຽວກັບ: 1) ເວລາໄດ້ ແລະ ວິທີນຳໃຊ້ແຜນຈັດສັນ FLUMZ 2) ບັນຫາຫຍຸ້ງຍາກຕໍ່ການປະຕິບັດຕາມແຜນຈັດສັນ FLUMZ, 3) ຈຸດດີ ແລະ ຈຸດອ່ອນຕໍ່ການຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ກ່ອນ ແລະ ຫຼັງມີແຜນຈັດສັນ FLUMZ, 4) ບັນຫາ ແລະ ສິ່ງທ້າທາຍຕໍ່ການປະຕິບັດຕາມແຜນຈັດສັນ FLUMZ, 5) ທິດທາງແກ້ໄຂບັນຫາ ແລະ ສິ່ງທ້າທາຍ.

3. **ປະເມີນຜົນໄດ້ຮັບຈາກກອງປະຊຸມ**

ປະເມີນຜົນໄດ້ຮັບ ຈາກກອງປະຊຸມຕາມຜົນໄດ້ຮັບ ຈາກການສົນທະນາກັບທຸກພາກສ່ວນກ່ຽວຂ້ອງ, ທົບທວນ ແລະ ວິເຄາະ ຂໍ້ມູນຈາກແຜນຈັດສັນ FLUMZ ສົມທຽບກັບພາບຖ່າຍທີ່ກ່ຽວຂ້ອງ. ນຳໃຊ້ຜົນໄດ້ຮັບຈາກການປະເມີນ ເຂົ້າ ໃນການເສີມຂະຫຍາຍຈຸດດີ, ແກ້ໄຂຈຸດອ່ອນ ແລະ ວາງແຜນໃນໄລຍະຕໍ່ໄປ.

## ຂັ້ນຕອນ 4. ມອບແຜນຈັດສັນ FLUMZ ແລະ ຕິດປ້າຍແຜນທີ່ຂອງບ້ານ

ຫຼັງຈາກສຳເລັດການປັບປຸງແຜນຈັດສັນ ຫຼື ແຜນທີ່ FLUMZ ຂອງບ້ານ ຕາມຂໍ້ສະເໜີທີ່ໄດ້ຮັບຄວາມເຫັນດີເຫັນພ້ອມຢ່າງເປັນເອກະພາບ ຈາກກອງປະຊຸມຂັ້ນເມືອງ (ຢູ່ຂັ້ນຕອນທີ່ 3) ຂອງບາດກ້າວນີ້, ຈັດພິມແຜນຈັດສັນ (ປຶ້ມ) ແລະ ປ້າຍແຜນທີ່ FLUMZ ຕາມຈຳນວນທີ່ສາມາດຮັບປະກັນ ການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນ ໂດຍ ທຸກພາກສ່ວນກ່ຽວຂ້ອງຢູ່ຂັ້ນບ້ານ/ກຸ່ມບ້ານ, ເມືອງ, ແຂວງ ແລະ ສູນກາງ.

ອຳນາດການປົກຄອງເມືອງ (ເຈົ້າເມືອງ) ເປັນຜູ້ມອບປຶ້ມແຜນຈັດສັນ ແລະ ປ້າຍແຜນທີ່ FLUMZ ໃຫ້ບ້ານ ທີ່ສຳເລັດການຈັດຕັ້ງປະຕິບັດ ວຽກ P-FALUPAM ຢ່າງເປັນທາງການ. ໃນເວລາມອບ-ຮັບ ປຶ້ມແຜນຈັດສັນ/ປ້າຍແຜນທີ່ FLUMZ ໃຫ້ບ້ານເປົ້າໝາຍ, ທີມງານວິຊາການອະທິບາຍຄືນກ່ຽວກັບວິທີນຳໃຊ້ປຶ້ມແຜນ/ປ້າຍແຜນທີ່ ເພື່ອໃຫ້ປະຊາຊົນບັນດາເຜົ່າຢູ່ບ້ານເຂົ້າໃຈດ້ານເນື້ອໃນດີຂຶ້ນຕື່ມ ແລະ ແນະນຳໃຫ້ປະຊາຊົນອີງໃສ່ປຶ້ມແຜນຈັດສັນ/ແຜນທີ່ FLUMZ ດັ່ງກ່າວເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳກ່ຽວຂ້ອງກັບວຽກຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ ແບບມີສ່ວນຮ່ວມ ຢູ່ພາຍໃນບ້ານ ແລະ ບ້ານອ້ອມຂ້າງ ເພື່ອສ້າງເງື່ອນໄຂໃຫ້ແກ່ການ ພັດທະນາຊີວະນາໆພັນກະສິກຳໃຫ້ມີປະສິດທິຜົນດີ.

ຖ້າປະຊາຊົນສາມາດປະຕິບັດຕາມແຜນຈັດສັນ FLUMZ, ສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ອົງການຈັດຕັ້ງຮັບຜິດຊອບ ຫຼື ຂະແໜງການທີ່ກ່ຽວຂ້ອງດ້ານການອອກໃບຢັ້ງຢືນການນຳໃຊ້ ແລະ ການພັດທະນາທີ່ດິນກະສິກຳ (ເຊັ່ນ: ດິນລວມທັງໝົດຂອງບ້ານ, ດິນສ່ວນບຸກຄົນ ຫຼື ຄອບຄົວ ແລະ ອື່ນໆ) ທີ່ສາມາດເປັນບ່ອນອີງໃຫ້ແກ່ການອອກໃບຕາດິນ.

# ມາດຖານກຳນົດເຂດພື້ນທີ່ດິນກະສິກຳ ແລະ ປ່າໄມ້

ການຈັດຕັ້ງປະຕິບັດວຽກ P-FALUPAM ແມ່ນໄດ້ນຳໃຊ້ມາດຖານກຳນົດເຂດພື້ນທີ່ກະສິກຳ ແລະ ປ່າໄມ້ ທີ່ມີຢູ່ແລ້ວ ພ້ອມທັງພາບຖ່າຍດາວທຽມ/ທາງອາກາດ, ຂໍ້ມູນກ່ຽວກັບການຈັດສັນ 3 ປະເພດປ່າ (ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ) ແລະ ຂໍ້ມູນຕົວຈິງທາງສັງຄົມ-ສິ່ງແວດລ້ອມທີ່ໄດ້ເກັບກຳ, ສຶກສາ, ປຶກສາຫາລື ແລະ ຕົກລົງເຫັນດີເປັນເອກະພາບຮ່ວມກັບພາກສ່ວນກ່ຽວຂ້ອງຂັ້ນທ້ອງຖິ່ນ.

## I. ການກຳນົດພື້ນທີ່ດິນປ່າໄມ້

1) **ປ່າດົງດິບແຫ້ງແລ້ງ:** ປ່າມີຕົ້ນໄມ້ບໍ່ຫຼົ່ນໃບໜ້ອຍກ່ວາເຂດປ່າດົງດິບຊຸ່ມຊື່ນປົກກະຕິປະກອບມີຊະນິດໄມ້ທີ່ບໍ່ຫຼົ່ນໃບລະຫວ່າງ 50%-80%. ອາດເປັນພື້ນທີ່ມີໄມ້ໄຜ່, ມີຊັ້ນດິນເລິກ ແລະ ປ່າໄມ້ປະກອບດ້ວຍ ໄມ້ແຄນ, ໄມ້ຍາງ, ໄມ້ບາກ ຫຼື ໄມ້ເປືອຍ. ຖ້າຕັ້ງຢູ່ສູງກ່ວາ 200 ແມັດຈາກລະດັບໜ້ານ້ຳທະເລ ແມ່ນປ່າດົງດິບແຫ້ງແລ້ງເຂດສູງ, ຖ້າຕັ້ງຢູ່ຕ່ຳກ່ວາ 200 ແມັດລົງມາ ແລະ ຕົ້ນໄມ້ແມ່ນມີຄວາມສູງ ປະມານ 10-30 ແມັດ ແມ່ນປ່າດົງດິບເຂດຕ່ຳ;
2) **ປ່າປະສົມ:** ມີຕົ້ນໄມ້ຊະນິດຫຼົ່ນໃບຫຼາຍກ່ວາ 50% ແລະ ປ່າຊັ້ນລ່າງບໍ່ຕຶບຄືປ່າດົງດິບ (ອາດລວມມີໄມ້ໄຜ່). ຖ້ານອນຢູ່ໃນລະດັບຄວາມສູງຈາກໜ້ານ້ຳທະເລຫຼາຍກ່ວາ 200 ແມັດຂຶ້ນໄປເອີ້ນວ່າ ປ່າປະສົມພັດໃບເຂດສູງ ແລະ ຖ້ານອນຢູ່ໃນເຂດລະດັບຄວາມສູງຈາກໜ້ານ້ຳທະເລຕ່ຳກ່ວາ 200 ແມັດລົງມາເອີ້ນວ່າປ່າປະສົມເຂດຕ່ຳ;
3) **ປ່າໂຄກ ຫຼື ປ່າໂຄກແຫ້ງແລ້ງ:** ມີຢູ່ຕາມໂຄກ ຫຼື ບ່ອນເປີດແປນ. ສ່ວນຫຼາຍມີຢູ່ເຂດທີ່ມີຊັ້ນດິນຕື້ນ, ດິນເທິງໜ້າດິນແຂງ ແລະ ບໍ່ອຸດົມສົມ. ມີຕົ້ນໄມ້ຈິກ, ໄມ້ຊາດ, ໄມ້ເຊືອກ ແລະ ໄມ້ຮັງ ແລະ ຕົ້ນໄມ້ຄົດງໍ ມີຂະໜາດໜ້າຕ້າງບໍ່ຂະຫຍາຍກວ້າງ ແລະ ລວງສູງບໍ່ເກີນ 10 ແມັດ;
4) **ປ່າລຽບແຄມນ້ຳ:** ເກີດຂຶ້ນຕາມແຄມນ້ຳ ອາດເປັນປ່າດົງດິບ ຫຼື ປ່າປະສົມພັດໃບ ລວງກວ້າງຂອງປ່າລຽບແຄມນ້ຳຈະບໍ່ເກີນ 100 ແມັດ. ສາມາດຈຳແນກພື້ນທີ່ດິນປ່າໄມ້ປະເພດນີ້ອອກຈາກການນຳໃຊ້ທີ່ດິນປ່າໄມ້ປະເພດອື່ນ ເຊັ່ນ: ດິນບ້ານ ແລະ ດິນທົ່ງນາ;
5) **ປ່າໃບເຂັມ** (ປ່າແປກ): ມີແຕ່ໄມ້ຊັ້ນດຽວຊັ້ນລ່າງບໍ່ຕຶບແຕ່ບາງບ່ອນຈະມີເບັ້ຍໄມ້ສືບພັນເປັນປ່າຊັ້ນສອງ ເກີດຢູ່ໃນເຂດສູງ ແລະ ອາກາດໜາວເຢັນ. ຄຸນລັກສະນະຂອງໄມ້ (ໄມ້ແປກ) ມີສອງ ຫຼື ສາມຍອຍ ນອກຈາກນີ້ຍັງມີໄມ້ຮິ້ງຫອມ ແລະ ໄມ້ໂລງເລັງ;
6) **ປ່າໃບກ້ວາງປະສົມໃບເຂັມ:** ອາດມີໄມ້ໃບເຂັມ ແລະ ໃບກວ້າງ ຖ້າໄມ້ໃບເຂັມ ເກີດປະສົມກັບໃບກວ້າງ ແມ່ນໄມ້ຊະນິດບໍ່ຫຼົ່ນໃບ ຫຼື ອາດຫຼົ່ນໃບ, ຖ້າຢູ່ໃນເຂດສູງ;
7) **ປ່າປູກ:** ມີເກນອາຍຸຄ້າຍຄືກັນ, ລວງສູງ ແລະ ໄລຍະຫ່າງລະຫວ່າງຕົ້ນສະເໝີກັນ. ປ່າທີ່ມີຕົ້ນຍັງນ້ອຍ ແລະ ມີລະດັບຄວາມປົກຫຸ້ມຂອງເຮືອນຍອດຕ່ຳກ່ວາ 20% ລົງມາ (ຕົວຢ່າງ: ຢາງພາລາ ແລະ ໄມ້ວິກ) ແມ່ນຈັດເປັນປ່າປູກ. ເຂດຕົ້ນໄມ້ທີ່ປູກເພື່ອຈຸດປະສົງໃຫ້ຮົ່ມແກ່ຕົ້ນກາເຟ, ຕົ້ນຊາ ແລະ ຕົ້ນໄມ້ໃຫ້ໝາກ ແມ່ນບໍ່ຈັດເປັນປ່າປູກ;
8) **ປ່າໄມ້ໄຜ່** (ບໍ່ໄດ້ຈັດເຂົ້າໃນຄວາມປົກຫຸ້ມປ່າໄມ້): ຖ້າເນື້ອທີ່ດິນປົກຄຸມດ້ວຍໄມ້ໄຜ່ ແລະ ເຮືອນຍອດໄມ້ຊັ້ນເທິງໜ້ອຍກ່ວາ 5% ແມ່ນປ່າໄມ້ໄຜ່ ແລະ ຖ້າໄມ້ປ່າຊັ້ນລ່າງມີໄມ້ໄຜ່ໜ້ອຍກ່ວາ

80% ຂອງຊະນິດພັນໄມ້ ແມ່ນ ບໍ່ຈັດເປັນປ່າໄມ້;

9) **ປ່າເຊື່ອມໂຊມ** (ບໍ່ຈັດເຂົ້າໃນຄວາມປົກຫຸ້ມປ່າໄມ້): ເຂດພື້ນທີ່ເຄີຍມີປ່າໄມ້ປົກຫຸ້ມແຕ່ວ່າ ຄວາມໜາແໜ້ນຂອງຊັ້ນເຮືອນຍອດຕໍ່າກ່ວາ 20% ຍ້ອນການລົບກວນປ່າໄມ້ເຊັ່ນ: ຂຸດຄົ້ນໄມ້, ຖາງປ່າເຮັດໄຮ່ ຫຼື ກິດຈະກໍາອື່ນ. ອີງຕາມ ສະຖານະພາບປ່າໄມ້ ແລະ ລະດັບຂອງການລົບກວນ, ປ່າເຊື່ອມໂຊມອາດສາມາດຟື້ນຟູໂດຍທໍາມະຊາດ ແລະ ອາດກາຍເປັນປ່າໄມ້ໃນອານາຄົດ. ຖ້າປ່າເຊື່ອມໂຊມໜັກ ແຕ່ມີຫຍ້າຄາ ຫຼື ແຂມເກີດຂຶ້ນຫຼາຍກໍອາດສາມາດ ຟື້ນຟູເປັນປ່າໄມ້ໄດ້.

## II. ການປະເມີນ ພື້ນທີ່ດິນປ່າໄມ້ ແລະ ດິນປູກໄມ້ອຸດສາຫະກໍາ

ດໍາເນີນການປະເມີນ ພື້ນທີ່ດິນປ່າໄມ້ ແລະ ດິນປູກໄມ້ອຸດສາຫະກໍາເພື່ອຈັດສັນ ພື້ນທີ່ດິນປ່າໄມ້ ທີ່ໄດ້ລະບຸຢູ່ (ຂໍ້ I) ເທິງນັ້ນ ດັ່ງມີລາຍລະອຽດລຸ່ມນີ້:

1) **ປະເມີນພື້ນທີ່ດິນປ່າໄມ້:** ປະຊາຊົນອະທິບາຍລະອຽດ 1) ພື້ນທີ່ດິນປ່າໄມ້ທີ່ບໍ່ເຄີຍຖືກຖາງມາກ່ອນ (ບາງພື້ນທີ່ເຄີຍຖືກຖາງໃນໄລຍະຫຼາຍປີຜ່ານມາແລ້ວ), ປະຈຸບັນບ້ານມີຈຸດປະສົງສືບຕໍ່ຮັກສາໃຫ້ເປັນພື້ນທີ່ປ່າໄມ້ໃນອານາຄົດ ແມ່ນກໍານົດເປັນ "ພື້ນທີ່ປ່າໄມ້ທີ່ບໍ່ເຄີຍຖືກຖາງ", ແລະ 2) ພື້ນທີ່ດິນປ່າໄມ້ປະເພດອື່ນທີ່ມີຢູ່ແລ້ວ ແລະ ສາມາດເຫັນຢູ່ໃນພາບຖ່າຍດາວທຽມ (ນໍາໃຊ້ຂໍ້ມູນຈາກປະຊາຊາຊົນ ເພື່ອ ແຕ້ມຂອບເຂດພື້ນທີ່ປ່າໄມ້ໃສ່ແຜນທີ່ພາບຖ່າຍ);
2) **ປະເມີນພື້ນທີ່ດິນປູກໄມ້ອຸດສາຫະກໍາ:** ປະຊາຊົນລະບຸເຂດ ແລະ ປະເພດທີ່ດິນປູກໄມ້ອຸດສາຫະກໍາຂອງປະຊາຊົນ ແລະ ບໍລິສັດ (ສໍາປະທານ) ທີ່ມີຢູ່ພາຍໃນບ້ານຂອງຕົນ ແລະ ບັນທຶກຈຸດປູກໄມ້, ຊື່ເຈົ້າຂອງດິນ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງໃສ່ແຜນທີ່ພາບຖ່າຍດາວທຽມ.

## III. ການຈັດສັນພື້ນທີ່ດິນກະສິກໍາ

1) **ດິນທົ່ງນາ:** ເນື້ອທີ່ດິນປູກເຂົ້າແບບຖາວອນ (ບໍ່ລວມເອົາດິນນາເຮື້ອ ຫຼື ດິນທີ່ບໍ່ໄດ້ນໍາໃຊ້ເປັນເວລາຫຼາຍກ່ວາ 1 ປີຂຶ້ນ)
2) **ສວນປູກພືດອະຍຸຍາວ:** ເນື້ອທີ່ດິນນໍາໃຊ້ເພື່ອຜະລິດພືດກະສິກໍາຊະນິດຕ່າງໆ (ບໍ່ແມ່ນເຂົ້າ) ເຊັ່ນ: ພືດຜັກ, ໄມ້ໃຫ້ໝາກ, ກາເຟ, ຊາ, ໝາກພ້າວ, ຝ້າຍ ແລະ ອື່ນໆ;
3) **ດິນໄຮ່:** ພື້ນທີ່ດິນປ່າໄມ້ຖືກຖາງ ແລະ ຈູດເພື່ອປູກເຂົ້າ ແລະ ພືດຊະນິດອື່ນໃນໄລຍະເວລາໃດໜຶ່ງ ເຊິ່ງໄລຍະເວລາ 1 ປີ ເລີ້ມແຕ່ເວລາທີ່ປ່າຖືກຖາງຖ້າພື້ນທີ່ດິນດັ່ງກ່າວຖືກປະ (ແມ່ນດິນໄຮ່), ຖ້າບໍ່ມີການນໍາໃຊ້ເພື່ອປູກເຂົ້າ ຫຼື ພືດຊະນິດອື່ນ ຫຼາຍກ່ວາ 2 ປີຂຶ້ນໄປ (ແມ່ນໄຮ່ເຮື້ອ) ແມ່ນເປັນດິນປ່າເລົ່າ (ດິນໄຮ່ໝູນວຽນ);
4) **ດິນກະສິກໍາອື່ນໆ:** ພື້ນທີ່ດິນກະສິກໍານໍາໃຊ້ເພື່ອຈຸດປະສົງອື່ນເຊັ່ນ: ທົ່ງຫຍ້າລ້ຽງສັດ (ຖ້າທົ່ງຫຍ້າມີຕົ້ນໄມ້ ຢູ່ໃນລະດັບຄວາມປົກຫຸ້ມເຮືອນຍອດ ຫຼາຍກ່ວາ 20% ແມ່ນດິນປ່າໄມ້);
5) **ດິນທົ່ງຫຍ້າ:** ເຂດດິນເຊື່ອມໂຊມທີ່ບໍ່ມີຕົ້ນໄມ້ ຫຼື ໄມ້ພຸ່ມ ຫຼື ເປັນເຂດແຫ້ງແລ້ງແຕ່ມີຫຍ້າປົກຫຸ້ມ ຫຼື ເຄີຍເປັນເຂດພື້ນທີ່ດິນມີຕົ້ນໄມ້ປົກຫຸ້ມແຕ່ຖືກທໍາລາຍຢ່າງໜັກໜ່ວງ ເຊັ່ນ: ຖືກໄຟໄໝ້ຫຼາຍຄັ້ງ. ອາດມີຢູ່ໃນເຂດເນີນສູງພາກເໜືອ, ເຂດທີ່ມີຊັ້ນດິນເລິກ ແລະ ມີຄວາມຊຸ່ມສູງ;

6) **ດິນທາມ (ດິນບໍລິເວນນໍ້າ):** ພື້ນທີ່ດິນມີນໍ້າອີ່ມຕົວ, ອາດເປັນພື້ນທີ່ດິນອຸດົມສົມບູນ ແຕ່ ຂາດອົກຊີແຊນຈຶ່ງບໍ່ສາ ມາດນຳໃຊ້ເຂົ້າໃນການຜະລິດກະສິກຳ ແລະ ປ່າໄມ້. ເຂດດິນທາມອາດມີຄວາມສຳຄັນທາງດ້ານລະບົບນິເວດ ແລະ ສິ່ງແວດລ້ອມ ມີຄວາມຫຼາກຫຼາຍດ້ານພັນພືດ ແລະ ສັດ ເຊິ່ງ ພືດທີ່ເກີດຢູ່ໃນເຂດພື້ນທີ່ດິນທາມລວມມີ ຕົ້ນໄຄ້, ຜັກກູດ ແລະ ອື່ນໆ. ສາມາດນຳໃຊ້ການປະເມີນ ພື້ນທີ່ດິນທາມ ເປັນພື້ນຖານໃຫ້ແກ່ການຄຳນວນປະລິມານກາກບອນ ແລະ ກຳນົດການປ່ອຍອອກທາດອາຍເຮືອນແກ້ວ ($CO_2$) ຈາກປ່າໄມ້ ແລະ ຈາກການນນຳໃຊ້ທີ່ດິນ.

## IV. ການກຳນົດ ແລະ ຈັດສັນເຂດທີ່ດິນຜະລິດກະສິກຳ ແລະ ປ່າໄມ້ (ພື້ນທີ່ສຳລັບການຂະຫຍາຍ)

ວິເຄາະສອງພື້ນທີ່ດິນຫລັກຄື: 1) ເຂດພື້ນທີ່ດິນສຳຫລັບການຂະຫຍາຍເນື້ອທີ່ກະສິກຳ ເຊັ່ນ: ດິນນາ, ທີ່ດິນປູກພືດ, ພື້ນທີ່ລ້ຽງສັດ; ແລະ 2) ເຂດພື້ນທີ່ສຳຫລັບດິນປ່າໄມ້ເຊັ່ນ: ດິນຟື້ນຟູປ່າ ແລະ ດິນປູກໄມ້ອຸດສາຫະກຳ. ຊ້ອນທັບບັນດາຂໍ້ມູນດ້ານທາງພູມິສາດ (GIS), ແຜນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ມີຂໍ້ມູນລະດັບຄວາມຄ້ອຍຊັນ, ຊັ້ນແຫຼ່ງນໍ້າ, ການນຳໃຊ້ທີ່ດິນ ແລະ ອື່ນໆ. ມາດຖານ ແລະ ເງື່ອນໄຂສຳລັບການການວິເຄາະພື້ນທີ່ດິນປະເພດຕ່າງໆລວມມີຄືດັ່ງລຸ່ມນີ້:

### 1. ມາດຖານ ແລະ ເງື່ອນໄຂເພື່ອການວິເຄາະການຈັດສັນພື້ນທີ່ດິນກະສິກຳຕາມມາດຖານພູມສັນຖານ

1) **ພື້ນທີ່ດິນສຳຫລັບການຂະຫຍາຍດິນນາ:** ເຂດພື້ນທີ່ຮາບພຽງ, ລະດັບຄວາມຄ້ອຍຊັນ 0-8% (0-5 ອົງສາ), ຊັ້ນແຫຼ່ງນໍ້າຂັ້ນທີ 5 (WSC5) ແລະ ຢູ່ໃນເຂດປ່າເຫຼົ່າ, ໄຮ່ ຫຼື ດິນເປົ່າຫວ່າງ (ບໍ່ໄດ້ນຳໃຊ້ແບບຖາວອນ);

2) **ພື້ນທີ່ດິນສຳຫລັບການປູກພືດ:** ເຂດພື້ນທີ່ມີລະດັບຄວາມຄ້ອຍຊັນລະຫວ່າງ 8-46% (ຫຼື 5-25 ອົງສາ), ຊັ້ນແຫຼ່ງນໍ້າຂັ້ນທີ 4-3 (WSC 4-3) ແລະ ທີ່ດິນຢູ່ໃນເຂດປ່າເຫຼົ່າ, ໄຮ່ ຫຼື ທີ່ດິນເປົ່າຫວ່າງ (ບໍ່ໄດ້ນຳໃຊ້ແບບຖາວອນ);

3) **ພື້ນທີ່ດິນສຳຫລັບການລ້ຽງສັດ:** ເຂດພື້ນທີ່ມີລະດັບຄວາມຄ້ອຍຊັນລະຫວ່າງ 0-46% ຫຼື 0-25 ອົງສາ, ຊັ້ນແຫຼ່ງນໍ້າຂັ້ນທີ 3-5 (WSC 3-5) ແລະ ທີ່ດິນທົ່ງຫຍ້າທຳມະຊາດມີເງື່ອນໄຂເປັນເຂດລ້ຽງສັດ ຫຼື ເຂດລ້ຽງສັດ (ນຳໃຊ້ທີ່ດິນແບບບໍ່ຖາວອນ)ອາດມີຢູ່ພື້ນທີ່ດິນປ່າໂຄກ.

### 2. ມາດຖານ ແລະ ເງື່ອນໄຂເພື່ອການວິເຄາະການຈັດສັນພື້ນທີ່ດິນປ່າໄມ້ຕາມມາດຖານພູມສັນຖານ

1) **ພື້ນທີ່ດິນສຳຫລັບການຟື້ນຟູປ່າ:** ກຳນົດເອົາເຂດພື້ນທີ່ມີລະດັບຄວາມຄ້ອຍຊັນ >70% (ຫຼື 35 ອົງສາ), ຊັ້ນແຫຼ່ງນໍ້າຂັ້ນທີ 1-2 (WSC 1-2) ແລະ ທີ່ດິນເຂດປ່າເລົ່າ, ປ່າຊຸດໂຊມ, ປ່າໄຜ່. ອາດສາມາດຟື້ນຟູຕາມທຳມະຊາດ (ຖ້າບໍ່ມີການສືບຕໍ່ທຳລາຍ) ຫຼື ສາມາດປູກເສີມໂດຍມີການຄຸ້ມຄອງ, ປ້ອງກັນ, ປົກປັກຮັກສາ ແລະ ຕິດຕາມ;

2) **ພື້ນທີ່ດິນສຳຫລັບການປູກໄມ້ອຸດສາຫະກຳ:** ເຂດພື້ນທີ່ມີລະດັບຄວາມຄ້ອຍຊັນ>70% (>35 ອົງສາ), ຊັ້ນແຫຼ່ງນໍ້າຂັ້ນທີ 2-3 (WSC 2-3) ແລະ ທີ່ດິນເຂດປ່າເລົ່າ, ປ່າຊຸດໂຊມ, ປ່າໄມ້ໄຜ່, ສາມາດຟື້ນຟູດ້ວຍການປູກເປັນລະບົບ ຫຼື ປູກເສີມ ແລະມີການຄຸ້ມຄອງ, ປ້ອງກັນ, ປົກປັກຮັກສາ ແລະ ຕິດຕາມ.

# ແຜນທີ່ ໂຕໂປ 2.5D ແລະ ຂອບເຂດຊາຍແດນບ້ານ
## 2.5D Topographic and Village Boundary

ບ້ານ ປາຂົມ, ກຸ່ມບ້ານ ໂຮມພັນ, ເມືອງກວັນ
Pakhom Village, Homphanh Kumban, Kouan District




**ເຄື່ອງໝາຍ / Legend**

**ຈຸດທີ່ຕັ້ງສຳຄັນ / Points of Interest**
- ບ້ານ Village
- ພູ Mountain
- ແກ່ວ Mountain Pass
- ສັນພູ Mountain Ridge
- ໂຮງຮຽນ School
- ວັດ Temple
- ສະໜາມ Sanam
- ຜາ Cliff
- ອື່ນໆ Other POI

**ທາງ / Road**
- ເສັ້ນທາງຫຼວງແຫ່ງຊາດ National road
- ເສັ້ນທາງລະຫວ່າງແຂວງ/ເມືອງ Provincial/District road
- ເສັ້ນທາງທ້ອງຖິ່ນ/ຊົນນະບົດ Rural road
- ເສັ້ນທາງເທດສະບານ/ເຂດທີ່ຢູ່ອາໄສ Residential road

**ສາຍນ້ຳ / River**
- ແມ່ນ້ຳໃຫຍ່ Major River
- ແມ່ນ້ຳ River
- ສາຍຫ້ວຍ Stream
- ສາຍຫ້ວຍຂາດໃນຍາມແລ້ງ Intermittent Stream

- ຂອບເຂດເຂື່ອມຕໍ່ບ້ານ Village Boundaries

**ລະດັບຄວາມສູງຈາກໜ້ານ້ຳທະເລ / Elevation**
- 801m - 1100m
- 1101m - 1300m
- 1301m - 1500m
- 1501m - 1700m

Map produced by TABI: 01.04.19

# ແຜນທີ່ ການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມປ່າໄມ້ ໃນປະຈຸບັນ

## Current Land Use and Forest Cover revised as of 06.12.2017 - Sentinel - June 2017

ບ້ານ ປ່າຂົມ, ກຸ່ມບ້ານ ໂຮມພັນ, ເມືອງກວັນ

Pakhom Village, Homphanh Kumban, Kouan District




| | ບ. ປ່າຂົມ | ເນື້ອທີ່ ຮຕ | ສ່ວນຮ້ອຍ |
|---|---|---|---|
| I | **ທີ່ດິນກະສິກຳ** | **1,229.6** | **83.2%** |
| | ພື້ນທີ່ນາເຮື້ອ | 1.6 | 0.1% |
| | ພື້ນທີ່ນານ້ຳຝົນ | 6.2 | 0.4% |
| | ພື້ນທີ່ປ່າເລົ່າ >1 ປີ | 902.6 | 61.1% |
| | ພື້ນທີ່ປ່າເລົ່າ 1 ປີ | 263.3 | 17.8% |
| | ພື້ນທີ່ປ່າເລົ່າ ໝ້ຽງ | 5.9 | 0.4% |
| | ພື້ນທີ່ປູກຝັງເນີນສູງ | 50.0 | 3.4% |
| II | **ພື້ນທີ່ປ່າໄມ້ທີ່ບໍ່ເຄີຍຖືກຖາງມາກ່ອນ** | **232.8** | **15.8%** |
| | ປ່າປະສົມ | 232.8 | 15.8% |
| III | **ທີ່ດິນປຸກສ້າງ** | **4.9** | **0.3%** |
| | ໂຮງຮຽນ | 0.1 | 0.0% |
| | ທີ່ດິນປຸກສ້າງບຸກຄົນ | 4.8 | 0.3% |
| IV | **ທີ່ດິນວັດທະນະທຳ** | **6.3** | **0.4%** |
| | ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ | 0.1 | 0.0% |
| | ປ່າຊ້າ | 6.2 | 0.4% |
| V | **ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງຄົມມະນາຄົມ** | **3.6** | **0.2%** |
| | ຖະໜົນທາງດິນແດງ | 3.6 | 0.2% |
| | **ລວມທັງໝົດ** | **1,477.2** | **100.0%** |

### ເຄື່ອງໝາຍ / Legend

**ຈຸດທີ່ຕັ້ງສຳຄັນ / Points of Interest**

- ບ້ານ Village
- ພູ Mountain
- ແກ່ວ Mountain Pass
- ສັນພູ Mountain Ridge
- ໂຮງຮຽນ School
- ວັດ Temple
- ສະນຳ Sanam
- ຜາ Cliff
- ອື່ນໆ Other POI

**ທາງ / Road**

- ເສັ້ນທາງຫຼວງແຫ່ງຊາດ National road
- ເສັ້ນທາງລະຫວ່າງແຂວງ/ເມືອງ Provincial/District road
- ເສັ້ນທາງທ້ອງຖິ່ນ/ຊົນນະບົດ Rural road
- ເສັ້ນທາງເທດສະບານ/ເຂດທີ່ຢູ່ອາໃສ Residential road

**ສາຍນ້ຳ / River**

- ແມ່ນ້ຳໃຫຍ່ Major River
- ແມ່ນ້ຳ River
- ສາຍຫ້ວຍ Stream
- ສາຍຫ້ວຍຂາດໃນຍາມແລ້ງ Intermittent Stream

- ຂອບເຂດເຊື່ອມຕໍ່ບ້ານ Village Boundaries
- ປ່າປະສົມ Mixed Forest
- ພື້ນທີ່ນານ້ຳຝົນ (ນາປີ) Rainfed Paddy Area
- ພື້ນທີ່ນາເຮື້ອ Abandoned paddy
- ພື້ນທີ່ປູກຝັງເນີນສູງ (ປີ ຂອງ ພາບຖ່າຍ) Upland annual crop field (year of image)
- ພື້ນທີ່ປ່າເລົ່າ 1 ປີ Bush fallow: 1 year old
- ພື້ນທີ່ປ່າເລົ່າ >1 ປີ Bush fallow older than 1 year
- ພື້ນທີ່ປ່າເລົ່າມີຊາ Bush fallow of Mieng
- ທີ່ດິນປຸກສ້າງບຸກຄົນ Private Building Land
- ພື້ນທີ່ໂຮງຮຽນ School land
- ທາງດິນ Unpaved Road
- ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ Cultural Buildings And Sites
- ປ່າຊ້າ Cemetery Forest

Map produced by TABI: 01.04.19

# ແຜນທີ່ ການນຳໃຊ້ທີ່ດິນ ແລະ ຄວາມປົກຫຸ້ມປ່າໄມ້ ໃນປະຈຸບັນ

**Current Land Use and Forest Cover revised as of 06.12.2017**

ບ້ານ ປ່າຂິມ, ກຸ່ມບ້ານ ໂຮມພັນ, ເມືອງກວັນ

Pakhom Village, Homphanh Kumban, Kouan District




| | ບ. ປ່າຂິມ | ເນື້ອທີ່ ຮຕ | ສ່ວນຮ້ອຍ |
|---|---|---|---|
| I | **ທີ່ດິນກະສິກຳ** | **1,229.6** | **83.2%** |
| | ພື້ນທີ່ນາເຮື້ອ | 1.6 | 0.1% |
| | ພື້ນທີ່ນານ້ຳຝົນ | 6.2 | 0.4% |
| | ພື້ນທີ່ປ່າເລົ່າ >1 ປີ | 902.6 | 61.1% |
| | ພື້ນທີ່ປ່າເລົ່າ 1 ປີ | 263.3 | 17.8% |
| | ພື້ນທີ່ປ່າເລົ່າ ໝ້ຽງ | 5.9 | 0.4% |
| | ພື້ນທີ່ປູກຝັງເນີນສູງ | 50.0 | 3.4% |
| II | **ພື້ນທີ່ປ່າໄມ້ທີ່ບໍ່ເຄີຍຖືກຖາງມາກ່ອນ** | **232.8** | **15.8%** |
| | ປ່າປະສົມ | 232.8 | 15.8% |
| III | **ທີ່ດິນປຸກສ້າງ** | **4.9** | **0.3%** |
| | ໂຮງຮຽນ | 0.1 | 0.0% |
| | ທີ່ດິນປຸກສ້າງບຸກຄົນ | 4.8 | 0.3% |
| IV | **ທີ່ດິນວັດທະນະທຳ** | **6.3** | **0.4%** |
| | ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ | 0.1 | 0.0% |
| | ປ່າຊ້າ | 6.2 | 0.4% |
| V | **ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງຄົມມະນາຄົມ** | **3.6** | **0.2%** |
| | ຖະໜົນທາງດິນແດງ | 3.6 | 0.2% |
| | **ລວມທັງໝົດ** | **1,477.2** | **100.0%** |

## ເຄື່ອງໝາຍ / Legend

**ຈຸດທີ່ຕັ້ງສຳຄັນ / Points of Interest**

- ບ້ານ / Village
- ພູ / Mountain
- ແກ່ວ / Mountain Pass
- ສັນພູ / Mountain Ridge
- ໂຮງຮຽນ / School
- ວັດ / Temple
- ສະນຳ / Sanam
- ຜາ / Cliff
- ອື່ນໆ / Other POI

**ທາງ / Road**

- ເສັ້ນທາງຫຼວງແຫ່ງຊາດ / National road
- ເສັ້ນທາງລະຫວ່າງແຂວງ/ເມືອງ / Provincial/District road
- ເສັ້ນທາງທ້ອງຖິ່ນ/ຊົນນະບົດ / Rural road
- ເສັ້ນທາງເທດສະບານ/ເຂດທີ່ຢູ່ອາໃສ / Residential road

**ສາຍນ້ຳ / River**

- ແມ່ນ້ຳໃຫຍ່ / Major River
- ແມ່ນ້ຳ / River
- ສາຍຫ້ວຍ / Stream
- ສາຍຫ້ວຍຂາດໃນຍາມແລ້ງ / Intermittent Stream

- ຂອບເຂດເຊື່ອມຕໍ່ບ້ານ / Village Boundaries
- ພື້ນທີ່ນານ້ຳຝົນ (ນາປີ) / Rainfed Paddy Area
- ພື້ນທີ່ນາເຮື້ອ / Abandoned paddy
- ພື້ນທີ່ປູກຝັງເນີນສູງ / Upland annual crop field
- ພື້ນທີ່ປ່າເລົ່າ 1 ປີ / Bush fallow: 1 year old
- ພື້ນທີ່ປ່າເລົ່າ >1 ປີ / Bush fallow older than 1 year
- ພື້ນທີ່ປ່າເລົ່າມີຊາ / Bush fallow of Mieng
- ປ່າປະສົມ / Mixed Forest
- ທີ່ດິນປຸກສ້າງບຸກຄົນ / Private Building Land
- ພື້ນທີ່ໂຮງຮຽນ / School land
- ທາງດິນ / Unpaved Road
- ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ / Cultural Buildings And Sites
- ປ່າຊ້າ / Cemetery Forest

Map produced by TABI: 01.04.19

# ແຜນທີ່ ເຂດຈັດສັນ ແລະ ຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້

**Forest and Land Use Management Zone revised as of 19.06.2018**

ບ້ານ ປ່າຂິມ, ກຸ່ມບ້ານ ໂຮມພັນ, ເມືອງກວັນ

Pakhom Village, Homphanh Kumban, Kouan District




| | ບ. ປ່າຂິມ | ເນື້ອທີ່ ຮຕ | ສ່ວນຮ້ອຍ |
|---|---|---|---|
| I | **ທີ່ດິນກະສິກຳ** | **1,052.4** | **71.2%** |
| | ເຂດທີ່ດິນນາ | 2.0 | 0.1% |
| | ເຂດທີ່ດິນນານ້ຳຝົນ (ນາປີ) | 6.7 | 0.5% |
| | ເຂດທົ່ງຫຍ້າທຳມະຊາດລ້ຽງສັດ (ຄັງ) | 49.4 | 3.3% |
| | ເຂດປູກ: ຊາ | 29.0 | 2.0% |
| | ເຂດປູກຝັງໝູນວຽນ ປີທີ 1 | 90.8 | 6.1% |
| | ເຂດປູກຝັງໝູນວຽນ ປີທີ 2 | 88.6 | 6.0% |
| | ເຂດປູກຝັງໝູນວຽນ ປີທີ 3 | 142.0 | 9.6% |
| | ເຂດປູກຝັງໝູນວຽນ ປີທີ 4 | 71.2 | 4.8% |
| | ເຂດປູກຝັງໝູນວຽນ ປີທີ 5 | 128.1 | 8.7% |
| | ເຂດປູກຝັງໝູນວຽນ ປີທີ 6 | 113.9 | 7.7% |
| | ເຂດປູກຝັງໝູນວຽນ ປີທີ 7 | 87.0 | 5.9% |
| | ເຂດປູກຝັງໝູນວຽນ ປີທີ 8 | 131.5 | 8.9% |
| | ເຂດປູກຝັງໝູນວຽນ ປີທີ 9 | 112.3 | 7.6% |
| II | **ທີ່ດິນປ່າໄມ້** | **410.0** | **27.8%** |
| | ປ່າຄຸ້ມຄອງນຳໃຊ້ ທົ່ວໄປ | 33.5 | 2.3% |
| | ປ່າສະຫງວນອະນຸລັກຂອງບ້ານ | 297.5 | 20.1% |
| | ປ່າຮັກສາແຫລ່ງນ້ຳ ຂອງບ້ານ | 79.0 | 5.4% |
| III | **ທີ່ດິນປຸກສ້າງ** | **4.9** | **0.3%** |
| | ທີ່ດິນປຸກສ້າງບຸກຄົນ | 4.8 | 0.3% |
| | ໂຮງຮຽນ | 0.1 | 0.0% |
| IV | **ທີ່ດິນວັດທະນະທຳ** | **6.3** | **0.4%** |
| | ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ | 0.1 | 0.0% |
| | ປ່າຊ້າ | 6.2 | 0.4% |
| V | **ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງຄົມມະນາຄົມ** | **3.6** | **0.2%** |
| | ຖະໜົນທາງດິນແດງ | 3.6 | 0.2% |
| | **ລວມທັງໝົດ** | **1,477.2** | **100.0%** |

## ເຄື່ອງໝາຍ / Legend

**ຈຸດທີ່ຕັ້ງສຳຄັນ / Points of Interest**

- ບ້ານ Village
- ພູ Mountain
- ແກ່ວ Mountain Pass
- ສັນພູ Mountain Ridge
- ໂຮງຮຽນ School
- ວັດ Temple
- ສະນຳ Sanam
- ຜາ Cliff
- ອື່ນໆ Other POI

**ທາງ / Road**

- ເສັ້ນທາງຫຼວງແຫ່ງຊາດ National road
- ເສັ້ນທາງລະຫວ່າງແຂວງ/ເມືອງ Provincial/District road
- ເສັ້ນທາງທ້ອງຖິ່ນ/ຊົນນະບົດ Rural road
- ເສັ້ນທາງເທດສະບານ/ເຂດທີ່ຢູ່ອາໃສ Residential road

**ສາຍນ້ຳ / River**

- ແມ່ນ້ຳໃຫຍ່ Major River
- ແມ່ນ້ຳ River
- ສາຍຫ້ວຍ Stream
- ສາຍຫ້ວຍຂາດໃນຍາມແລ້ງ Intermittent Stream

- ຂອບເຂດເຊື່ອມຕໍ່ບ້ານ Village Boundaries
- ປ່າຄຸ້ມຄອງນຳໃຊ້ ທົ່ວໄປ Managed Use Forest - General Purpose
- ປ່າສະຫງວນອະນຸລັກຂອງບ້ານ Village Biodiversity Conservation Forest
- ປ່າຮັກສາແຫລ່ງນ້ຳ ຂອງບ້ານ Village Watershed Protection Forest
- ເຂດທີ່ດິນນາ Wet Rice Paddy land zone
- ເຂດທີ່ດິນນານ້ຳຝົນ (ນາປີ) Rainfed Paddy land zone
- ເຂດທົ່ງຫຍ້າທຳມະຊາດລ້ຽງສັດ (ຄັງ) Natural Grassland livestock land
- ເຂດປູກຝັງໝູນວຽນ ປີທີ່ 1 Annual Rotation Crop Zone: Year 1
- ເຂດປູກຝັງໝູນວຽນ ປີທີ່ 2 Annual Rotation Crop Zone: Year 2
- ເຂດປູກຝັງໝູນວຽນ ປີທີ່ 3 Annual Rotation Crop Zone: Year 3
- ເຂດປູກຝັງໝູນວຽນ ປີທີ່ 4 Annual Rotation Crop Zone: Year 4
- ເຂດປູກຝັງໝູນວຽນ ປີທີ່ 5 Annual Rotation Crop Zone: Year 5
- ເຂດປູກຝັງໝູນວຽນ ປີທີ່ 6 Annual Rotation Crop Zone: Year 6
- ເຂດປູກຝັງໝູນວຽນ ປີທີ່ 7 Annual Rotation Crop Zone: Year 7
- ເຂດປູກຝັງໝູນວຽນ ປີທີ່ 8 Annual Rotation Crop Zone: Year 8
- ເຂດປູກຝັງໝູນວຽນ ປີທີ່ 9 Annual Rotation Crop Zone: Year 9
- ເຂດປູກ: ຊາ Tea
- ທີ່ດິນປຸກສ້າງບຸກຄົນ Private Building Land
- ໂຮງຮຽນ School
- ທາງດິນແດງ Unpaved Road
- ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ Cultural Buildings And Sites
- ປ່າຊ້າ Cemetery Forest

Map produced by TABI: 01.04.19

# ແຜນທີ່ ເຂດຈັດສັນ ແລະ ຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້

## Forest and Land Use Management Zone revised as of 19.06.2018 - Sentinel - June 2017

ບ້ານ ປ່າຂິມ, ກຸ່ມບ້ານ ໂຮມພັນ, ເມືອງກອັນ

Pakhom Village, Homphanh Kumban, Kouan District




| ບ. ປ່າຂິມ | | ເນື້ອທີ່ ຮຕ | ສ່ວນຮ້ອຍ |
|---|---|---|---|
| I | **ທີ່ດິນກະສິກຳ** | **1,052.4** | **71.2%** |
| | ເຂດທີ່ດິນນາ | 2.0 | 0.1% |
| | ເຂດທີ່ດິນນານ້ຳຝົນ (ນາປີ) | 6.7 | 0.5% |
| | ເຂດທົ່ງຫຍ້າທຳມະຊາດລ້ຽງສັດ (ຄັງ) | 49.4 | 3.3% |
| | ເຂດປູກ: ຊາ | 29.0 | 2.0% |
| | ເຂດປູກຝັງໝູນວຽນ ປີທີ່ 1 | 90.8 | 6.1% |
| | ເຂດປູກຝັງໝູນວຽນ ປີທີ່ 2 | 88.6 | 6.0% |
| | ເຂດປູກຝັງໝູນວຽນ ປີທີ່ 3 | 142.0 | 9.6% |
| | ເຂດປູກຝັງໝູນວຽນ ປີທີ່ 4 | 71.2 | 4.8% |
| | ເຂດປູກຝັງໝູນວຽນ ປີທີ່ 5 | 128.1 | 8.7% |
| | ເຂດປູກຝັງໝູນວຽນ ປີທີ່ 6 | 113.9 | 7.7% |
| | ເຂດປູກຝັງໝູນວຽນ ປີທີ່ 7 | 87.0 | 5.9% |
| | ເຂດປູກຝັງໝູນວຽນ ປີທີ່ 8 | 131.5 | 8.9% |
| | ເຂດປູກຝັງໝູນວຽນ ປີທີ່ 9 | 112.3 | 7.6% |
| II | **ທີ່ດິນປ່າໄມ້** | **410.0** | **27.8%** |
| | ປ່າຄຸ້ມຄອງນຳໃຊ້ ທົ່ວໄປ | 33.5 | 2.3% |
| | ປ່າສະຫງວນອະນຸລັກຂອງບ້ານ | 297.5 | 20.1% |
| | ປ່າຮັກສາແຫລ່ງນ້ຳ ຂອງບ້ານ | 79.0 | 5.4% |
| III | **ທີ່ດິນປຸກສ້າງ** | **4.9** | **0.3%** |
| | ທີ່ດິນປຸກສ້າງບຸກຄົນ | 4.8 | 0.3% |
| | ໂຮງຮຽນ | 0.1 | 0.0% |
| IV | **ທີ່ດິນວັດທະນະທຳ** | **6.3** | **0.4%** |
| | ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ | 0.1 | 0.0% |
| | ປ່າຊ້າ | 6.2 | 0.4% |
| V | **ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງຄົມມະນາຄົມ** | **3.6** | **0.2%** |
| | ຖະໜົນທາງດິນແດງ | 3.6 | 0.2% |
| **ລວມທັງໝົດ** | | **1,477.2** | **100.0%** |

### ເຄື່ອງໝາຍ / Legend

**ຈຸດທີ່ຕັ້ງສຳຄັນ / Points of Interest**

- ບ້ານ / Village
- ພູ / Mountain
- ແກ່ວ / Mountain Pass
- ສັນພູ / Mountain Ridge
- ໂຮງຮຽນ / School
- ວັດ / Temple
- ສະນຳ / Sanam
- ຜາ / Cliff
- ອື່ນໆ / Other POI

**ທາງ / Road**

- ເສັ້ນທາງຫຼວງແຫ່ງຊາດ / National road
- ເສັ້ນທາງລະຫວ່າງແຂວງ/ເມືອງ / Provincial/District road
- ເສັ້ນທາງທ້ອງຖິ່ນ/ຊົນນະບົດ / Rural road
- ເສັ້ນທາງເທດສະບານ/ເຂດທີ່ຢູ່ອາໃສ / Residential road

**ສາຍນ້ຳ / River**

- ແມ່ນ້ຳໃຫຍ່ / Major River
- ແມ່ນ້ຳ / River
- ສາຍຫ້ວຍ / Stream
- ສາຍຫ້ວຍຂາດໃນຍາມແລ້ງ / Intermittent Stream

- ຂອບເຂດເຊື່ອມຕໍ່ບ້ານ / Village Boundaries
- ປ່າຄຸ້ມຄອງນຳໃຊ້ ທົ່ວໄປ / Managed Use Forest - General Purpose
- ປ່າສະຫງວນອະນຸລັກຂອງບ້ານ / Village Biodiversity Conservation Forest
- ປ່າຮັກສາແຫລ່ງນ້ຳ ຂອງບ້ານ / Village Watershed Protection Forest
- ເຂດທີ່ດິນນາ / Wet Rice Paddy land zone
- ເຂດທີ່ດິນນານ້ຳຝົນ (ນາປີ) / Rainfed Paddy land zone
- ເຂດທົ່ງຫຍ້າທຳມະຊາດລ້ຽງສັດ (ຄັງ) / Natural Grassland livestock land
- ເຂດປູກຝັງໝູນວຽນ ປີທີ່ 1 / Annual Rotation Crop Zone: Year 1
- ເຂດປູກຝັງໝູນວຽນ ປີທີ່ 2 / Annual Rotation Crop Zone: Year 2
- ເຂດປູກຝັງໝູນວຽນ ປີທີ່ 3 / Annual Rotation Crop Zone: Year 3
- ເຂດປູກຝັງໝູນວຽນ ປີທີ່ 4 / Annual Rotation Crop Zone: Year 4
- ເຂດປູກຝັງໝູນວຽນ ປີທີ່ 5 / Annual Rotation Crop Zone: Year 5
- ເຂດປູກຝັງໝູນວຽນ ປີທີ່ 6 / Annual Rotation Crop Zone: Year 6
- ເຂດປູກຝັງໝູນວຽນ ປີທີ່ 7 / Annual Rotation Crop Zone: Year 7
- ເຂດປູກຝັງໝູນວຽນ ປີທີ່ 8 / Annual Rotation Crop Zone: Year 8
- ເຂດປູກຝັງໝູນວຽນ ປີທີ່ 9 / Annual Rotation Crop Zone: Year 9
- ເຂດປູກ: ຊາ / Tea
- ທີ່ດິນປຸກສ້າງບຸກຄົນ / Private Building Land
- ໂຮງຮຽນ / School
- ທາງດິນແດງ / Unpaved Road
- ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ / Cultural Buildings And Sites
- ປ່າຊ້າ / Cemetery Forest

Map produced by TABI: 01.04.19

# ແຜນທີ່ ເຂດຈັດສັນ ແລະ ຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້

**Forest and Land Use Management Zone revised as of 19.06.2018 - Skysat - November 2018**

ບ້ານ ປ່າຂິມ, ກຸ່ມບ້ານ ໂຮມພັນ, ເມືອງກວັນ

Pakhom Village, Homphanh Kumban, Kouan District




| | ບ. ປ່າຂິມ | ເນື້ອທີ່ ຮຕ | ສ່ວນຮ້ອຍ |
|---|---|---|---|
| I | **ທີ່ດິນກະສິກຳ** | **1,052.4** | **71.2%** |
| | ເຂດທີ່ດິນນາ | 2.0 | 0.1% |
| | ເຂດທີ່ດິນນານ້ຳຝົນ (ນາປີ) | 6.7 | 0.5% |
| | ເຂດທົ່ງຫຍ້າທຳມະຊາດລ້ຽງສັດ (ຄັງ) | 49.4 | 3.3% |
| | ເຂດປູກ: ຊາ | 29.0 | 2.0% |
| | ເຂດປູກຝັງໝູນວຽນ ປີທີ່ 1 | 90.8 | 6.1% |
| | ເຂດປູກຝັງໝູນວຽນ ປີທີ່ 2 | 88.6 | 6.0% |
| | ເຂດປູກຝັງໝູນວຽນ ປີທີ່ 3 | 142.0 | 9.6% |
| | ເຂດປູກຝັງໝູນວຽນ ປີທີ່ 4 | 71.2 | 4.8% |
| | ເຂດປູກຝັງໝູນວຽນ ປີທີ່ 5 | 128.1 | 8.7% |
| | ເຂດປູກຝັງໝູນວຽນ ປີທີ່ 6 | 113.9 | 7.7% |
| | ເຂດປູກຝັງໝູນວຽນ ປີທີ່ 7 | 87.0 | 5.9% |
| | ເຂດປູກຝັງໝູນວຽນ ປີທີ່ 8 | 131.5 | 8.9% |
| | ເຂດປູກຝັງໝູນວຽນ ປີທີ່ 9 | 112.3 | 7.6% |
| II | **ທີ່ດິນປ່າໄມ້** | **410.0** | **27.8%** |
| | ປ່າຄຸ້ມຄອງນຳໃຊ້ ທົ່ວໄປ | 33.5 | 2.3% |
| | ປ່າສະຫງວນອະນຸລັກຂອງບ້ານ | 297.5 | 20.1% |
| | ປ່າຮັກສາແຫລ່ງນ້ຳ ຂອງບ້ານ | 79.0 | 5.4% |
| III | **ທີ່ດິນປຸກສ້າງ** | **4.9** | **0.3%** |
| | ທີ່ດິນປຸກສ້າງບຸກຄົນ | 4.8 | 0.3% |
| | ໂຮງຮຽນ | 0.1 | 0.0% |
| IV | **ທີ່ດິນວັດທະນະທຳ** | **6.3** | **0.4%** |
| | ຕຶກອາຄານ ແລະ ຈຸດທີ່ຕັ້ງທາງວັດທະນະທຳ | 0.1 | 0.0% |
| | ປ່າຊ້າ | 6.2 | 0.4% |
| V | **ທີ່ດິນໂຍທາທິການ ແລະ ຂົນສົ່ງ ເສັ້ນທາງຄົມມະນາຄົມ** | **3.6** | **0.2%** |
| | ຖະໜົນທາງດິນແດງ | 3.6 | 0.2% |
| | **ລວມທັງໝົດ** | **1,477.2** | **100.0%** |

## ເຄື່ອງໝາຍ / Legend

**ຈຸດທີ່ຕັ້ງສຳຄັນ / Points of Interest**

- ບ້ານ Village
- ພູ Mountain
- ແກ່ວ Mountain Pass
- ສັນພູ Mountain Ridge
- ໂຮງຮຽນ School
- ວັດ Temple
- ສະນຳ Sanam
- ຜາ Cliff
- ອື່ນໆ Other POI

**ທາງ / Road**

- ເສັ້ນທາງຫຼວງແຫ່ງຊາດ National road
- ເສັ້ນທາງລະຫວ່າງແຂວງ/ເມືອງ Provincial/District road
- ເສັ້ນທາງທ້ອງຖິ່ນ/ຊົນນະບົດ Rural road
- ເສັ້ນທາງເທດສະບານ/ເຂດທີ່ຢູ່ອາໃສ Residential road

**ສາຍນ້ຳ / River**

- ແມ່ນ້ຳໃຫຍ່ Major River
- ແມ່ນ້ຳ River
- ສາຍຫ້ວຍ Stream
- ສາຍຫ້ວຍຂາດໃນຍາມແລ້ງ Intermittent Stream

- ຂອບເຂດເຊື່ອມຕໍ່ບ້ານ Village Boundaries
- ປ່າຄຸ້ມຄອງນຳໃຊ້ ທົ່ວໄປ Managed Use Forest - General Purpose
- ປ່າສະຫງວນອະນຸລັກຂອງບ້ານ Village Biodiversity Conservation Forest
- ປ່າຮັກສາແຫລ່ງນ້ຳ ຂອງບ້ານ Village Watershed Protection Forest
- ເຂດທີ່ດິນນາ Wet Rice Paddy land zone
- ເຂດທີ່ດິນນານ້ຳຝົນ (ນາປີ) Rainfed Paddy land zone
- ເຂດທົ່ງຫຍ້າທຳມະຊາດລ້ຽງສັດ (ຄັງ) Natural Grassland livestock land
